# ແນວຄິດກ່ຽວກັບການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ ໃນພາກພື້ນປະເທດລ່ອງແມ່ນ້ຳຂອງ

ເອກະສານເຜີຍແຜ່ ໂດຍອົງການປ່າຝົນໂລກ
(World Rainforest Movement [WRM])
ທັນວາ 2008

ການປູກພືດຊະນິດດຽວເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ ເຊັ່ນຕົ້ນວິກ (ຢູຄາລິບຕັດ), ຕົ້ນ ປາມນ້ຳມັນ, ຕົ້ນຢາງ ແລະຕົ້ນໝາກເຍົາ ກຳລັງແຜ່ລາມເຂົ້າໄປໃນດິນດອນຕ່ອນໜຍ້າຂອງປະຊາຊົນ ແລະ ເນື້ອທີ່ປ່າໃນພາກພື້ນປະເທດລ່ອງແມ່ນ້ຳຂອງ ພາຍໃຕ້ຮູບແບບຂອງການພັດທະນາ, ການຫລຸດຜ່ອນຄວາມທຸກຈົນ ແລະ ຫລຸດຜ່ອນການປ່ຽນແປງຂອງດິນຟ້າອາກາດ, ການຂະຫຍາຍໂຕຂອງການປູກພືດເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ແບບນີ້ ພວມເຮັດໃຫ້ມີຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມຢ່າງໜັກໜ່ວງ. ແລະ ເຖິງແມ່ນວ່າ ໃນພື້ນທີ່ເຊິ່ງມີການປູກໄມ້ໃນເນື້ອທີ່ຂະໜາດໃຫຍ່ ຍັງມີສະພາບທາງການເມືອງທີ່ບໍ່ຄືງທີ່ກໍ່ຕາມ ແຕ່ປະຊາຊົນໃນທ້ອງຖິ່ນ ກໍພວມພະຍາຍາມຕໍ່ສູ້ຕ້ານທານດ້ວຍວິທີການຕ່າງໆ ເທົ່າທີ່ສາມາດເຮັດໄດ້ ບໍ່ວ່າຈະເປັນການຮ່ວມມືກັບກຸ່ມພັນທະມິດທີ່ກວ້າງຂວາງ ເຊັ່ນໃນປະເທດໄທ ຈົນຮອດການຮວມກຸ່ມນ້ອຍໆ ເຊັ່ນໃນກຳປູເຈຍ ແລະ ລາວ ເພື່ອຕໍ່ສູ້ກັບການເຂົ້າມາປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່.

ຈຸດປະສົງຂອງເອກະສານເຜີຍແຜ່ນີ້ ແມ່ນເພື່ອສັງລວມຕົວຢ່າງສະພາບໂດຍທົ່ວໄປຂອງການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ໃນພາກພື້ນ 6 ປະເທດຄື ພະມ້າ, ກຳປູເຈຍ, ຈີນ, ລາວ, ໄທ ແລະຫວຽດນາມ ເພື່ອຊຸກຍູ້ໃຫ້ເກີດຄວາມຕື່ນຕົວຕໍ່ບັນຫານີ້ ແລະສິ່ງທີ່ສຳຄັນ ກໍແມ່ນເພື່ອຊ່ອຍໃຫ້ສຽງຂອງປະຊາຊົນ ມີການຖືກຮັບຮູ້ຫຼາຍຂຶ້ນ. ພ້ອມກັບນັ້ນ ພວກເຮົາກໍຫວັງເປັນຢ່າງຍິ່ງວ່າ ຂໍ້ມູນເຫຼົ່ານີ້ ຈະຖືກນຳໃຊ້ເປັນໃຫ້ເປັນປະໂຫຍດໃຫ້ຂະບວນການຕໍ່ສູ້ກັບການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ແບບນີ້ ທັງພາຍໃນແລະພາຍນອກພາກພື້ນແມ່ນ້ຳຂອງ.

## ບໍ່ມີຜືນດິນແຜ່ນໃໝ່ໃຫ້ໄປອີກແລ້ວ: ຊີວິດຂອງປະຊາຊົນໃນພາກພື້ນແມ່ນ້ຳຂອງ ໃນຍຸກແຫ່ງການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່

ຂໍຕ້ອນຮັບເຂົ້າສູ່ພາກພື້ນແມ່ນ້ຳຂອງ ສະຖານທີ່ທີ່ມີຄຳສັບບູຮານຄຳນຶ່ງ ເປັນມໍລະດົກທາງວັດທະນະທຳ ທີ່ນຳໃຊ້ກັນທົ່ວອົງເຂດປະເທດລາວ, ໄທ ແລະ ກຳປູເຈຍ ເປັນພາສາດຽວກັນ ເພື່ອບັນຍາຍເຖິງຜືນແຜ່ນດິນຄຳແຫ່ງນີ້ນັ້ນຄືຄຳ "ສຸວັນນະພູມ". ຍ້ອນຄວາມອຸດົມສົມບູນທາງຊັບພະຍາກອນ ຂອງຫ້ວຍນ້ຳລຳເຊ ປ່າດົງ ແລະແຜ່ນດິນ, ປະຊາຊົນຕາມລ່ອງແມ່ນ້ຳຂອງ ດຳລົງຊີວິດຢ່າງຮັ່ງມີຢູ່ກັບທຳມະຊາດ. ທັງແມ່ນ້ຳລຳເຊ ແລະ ປ່າດົງພົງໄພ ລ້ວນແຕ່ເປັນແຫຼ່ງອາຫານ ສາງພືດຢາ ແລ້ວແຜ່ນດິນເອງກໍເປັນຂຸມຊັບອັນລ້ຳຄ່າ ເປັນອູ່ເຂົ້າອູ່ປາ ພື້ນທີ່ເຮັດກະສິກຳ

ແລະ ເປັນທັງທີ່ຢູ່ອາໄສ. ຂະນະທີ່ໃນດິນແດນອື່ນໆ ຂອງໂລກ ຜູ້ຄົນມີຄວາມຈຳເປັນໄດ້ອົບພະຍົບເຄື່ອນຍ້າຍຂ້າມຊາຍແດນໄປສູ່ "ພົມແດນໃຫມ່", ເພື່ອຫນີຈາກຄວາມທຸກຍາກ ເພື່ອຊອກຫາຊີວິດໃຫມ່ທີ່ດີກວ່າ ໃນດິນແດນທີ່ອຸດົມສົມບູນກວ່າເກົ່າ. ແຕ່ສຳລັບປະຊາຊົນຕາມລ່ອງແມ່ນ້ຳຂອງ ນອກຈາກແບບກົດບັງຄັບ ປະຊາຊົນບໍ່ເຄີຍຄິດຍົກຍ້າຍຫນີໄປຈາກແດນສຸວັນນະພູມ ອູ່ເຂົ້າອູ່ປາຂອງເຂົາເຈົ້າເລີຍ. ນັ້ນອາດເປັນເຫດຜົນນຶ່ງ ທີ່ອະທິບາຍວ່າ ເປັນຫຍັງປະຊາຊົນຊາວພື້ນເມືອງ  ຈຶ່ງບໍ່ສາມາດເຂົ້າໃຈການລັ່ງໄຫຼເຂົ້າມາຂອງພວກນັກລົງທຶນຜູ້ຫັນຫ້າວ  ທີ່ພະຍາຍາມຈະເຂົ້າມາບຸກເບີກຜືນແຜ່ນດິນຂອງພວກຂອງເຂົາເຈົ້າ ເພື່ອໂກຍກຳໄລເຂົ້າກົງ ແລະ ເອົາກັບຄືນ ປະເທດຕົນເອງ.

ບັນດາບໍລິສັດເອກະຊົນ ຈຳນວນນຶ່ງມາຈາກພາຍໃນປະເທດ ແຕ່ສ່ວນຫຼາຍເປັນຂອງຕ່າງປະເທດ (ສາກົນ) ມີແຜນການໃນການຫຸບເອົາເນື້ອທີ່ 180,000 ເຮັກຕາໃນປະເທດລາວ ແລະຫຼາຍກວ່າ 800,000 ເຮັກຕາໃນກຳປູເຈຽ. ລັດຖະບານປະເທດໃນພາກພື້ນແມ່ນ້ຳຂອງ ຕົກລົງໃຫ້ອະນຸຍາດສຳປະທານບໍລິສັດເອກະຊົນເຫລົ່ານີ້ ທີ່ມີຈຸດປະສົງຢາກໄດ້ເນື້ອທີ່ຫຼາຍທີ່ສຸດ ເທົ່າທີ່ຈະເອົາໄດ້ ເພື່ອດຳເນີນແຜນການປູກໄມ້ເປັນສິນຄ້າ ສຳລັບບໍລິສັດເອກະຊົນເຫລົ່ານີ້ ການປູກຄັ້ງທຳອິດ ອາດຈະບໍ່ປະສົບຜົນສຳເລັດ ແຕ່ນັ້ນບໍ່ເປັນບັນຫາ, ຂໍພຽງແຕ່ໄດ້ສິດຄອບຄອງທີ່ດິນຕອນໃຫຍ່ແຄມທາງຫຼວງ, ຈ່າຍພາສີທີ່ດິນກືກໆ ແລະ ມີເວລາທົດລອງປູກຫຼາຍໆເທື່ອກໍພໍແລ້ວ

ໃນປະຈຸບັນ ບັນຫາໃຫຍ່ສອງຢ່າງ ທີ່ເປັນໄພຂົ່ມຂູ່ປະຊາຊົນຕາມລ່ອງແມ່ນ້ຳຂອງ ແລະ ຊັບພະຍາກອນຂອງເຂົາເຈົ້າ ແມ່ນການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ແລະ ການສ້າງເຂື່ອນໄຟຟ້າ, ທັງສອງຢ່າງນີ້ມີລັກສະນະທີ່ຄ້າຍຄືກັນ ໂດຍສະເພາະການທີ່ພາກເອກະຊົນມີບົດບາດສຳຄັນໃນການຊຸກຍູ້ ແລະ ການຂາດຄວາມຈະແຈ້ງແນ່ນອນທາງນະໂຍບາຍພາຍໃນປະເທດ ອັນຈະເຮັດໃຫ້ເກີດຂະບວນການທີ່ປອດໃສ ຈະແຈ້ງ ເປັນຫນ້າເຊື່ອຖືໄດ້ ແລະ ການຂາດການມີສ່ວນຮ່ວມຂອງປະຊາຊົນ. ການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ທີ່ໄດ້ຮັບການຊຸກຍູ້ມາຫຼາຍກວ່າ 10-15 ປີແລ້ວ ໄດ້ເຮັດໃຫ້ປະຊາຊົນຈຳນວນຫລວງຫລາຍ ຕ້ອງສູນເສຽດິນດອນຕອນຫຍ້າຂອງຕົນໄປ ກ່ອນທີ່ເຂົາເຈົ້າຈະໄດ້ຮູ້ວ່າ ຕົນເອງມີສິດຕາມກົດຫມາຍ ໃນການນຳໃຊ້ດິນຫຼືບໍ່. ການຊຸກຍູ້ປຸກລະດົມການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ເຮັດໃຫ້ຊ່ອງວ່າງຄວາມບໍ່ເຂົ້າໃຈລະຫວ່າງປະຊາຊົນກັບຜູ້ສ້າງນະໂຍບາຍແຕກກວ້າງອອກ, ແລະປະຊາຊົນຍັງບໍ່ສາມາດມີສິດອອກສຽງ ເພື່ອຮຽກຮ້ອງຄວາມເປັນທຳຕໍ່ອະນາຄົດຂອງທີ່ດິນຂອງພວກເຂົາເລີຍ. ການເອົາດິນດອນໄປຈາກປະຊາຊົນ ຫມາຍເຖິງການຍຶດເອົາສາງເຂົ້າປາອາຫານຂອງຄອບຄົວໄປ ແລະ ນີ້ເອງ ທີ່ອາດກາຍເປັນຄວາມຫາຍະນະ (ໄພພິບັດ) ຂອງປະເທດຢູ່ໃນຫຼາຍຮູບການ ຖ້າບໍ່ມີການພິຈາລະນານະໂຍບາຍການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍຢ່າງ ຮອບຄອບ ແລະ ທັນການ.

ບັນດາປະເທດໃນພາກພື້ນແມ່ນ້ຳຂອງ ຄື: ພະມ້າ, ກຳປູເຈຽ, ຈີນ, ລາວ, ໄທ ແລະ ຫວຽດນາມ ກຳລັງມອບສິດສຳປະທານທີ່ດິນໃຫ້ແກ່ບໍລິສັດເພື່ອການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ເຊິ່ງຮວມມີການປູກ ຕົ້ນຢາງກະຕັງກະຕິ້ວ, ຕົ້ນຫມາກເຍົາແລະຕົ້ນປາມນ້ຳມັນ. ໃນເວລາດຽວກັນ ນັກລົງທຶນພາຍໃນຂົງເຂດພາກພື້ນແມ່ນ້ຳຂອງເອງ ກໍ່ພວມສະແດງບົດບາດເພື່ອກຳອຳນາດເຫນືອປະເທດທີ່ອ່ອນກຳລັງກວ່າ. ບໍລິສັດເອກະຊົນ ແລະລັດວິສາຫະກິດ ຈາກປະເທດຈີນ, ໄທ ແລະ ຫວຽດນາມ ພະຍາຍາມຍູ້ຍ້າຍຊາຍແດນໄປລົງທຶນ ເພື່ອຕອບສະຫນອງຄວາມຕ້ອງການໃນພາກສ່ວນອຸດສາຫະກຳຂອງຕົນເອງ   ເຂົ້າໄປໃນປະເທດເພື່ອນບ້ານໃກ້ຄຽງເຊັ່ນ:   ລາວ   ແລະ ກຳປູເຈຽ.

ໃນທົດສະວັດທີ່ຜ່ານມາ ຄວາມພະຍາຍາມໃນການຕິດຕາມ ກວດກາ ແລະ ຕໍ່ສູ້ກັບບັນຫາການ ປູກໄມ້ເປັນສິນຄ້າ ໃນເນື້ອທີ່ຂະຫນາດໃຫຍ່ໃນພາກພື້ນແມ່ນ້ຳຂອງ ບໍ່ໄດ້ຮັບຄວາມສຳເລັດຫລາຍພໍເທົ່າໃດ. ແນວໃດກໍ່ຕາມ ການເລີ່ມຕົ້ນຮ່ວມມືກັນ ແລະການຕໍ່ສູ້ກັບບັນຫານະໂຍບາຍກ່ຽວກັບທີ່ດິນໃນປະເທດກຳປູເຈຽ ເປັນຕົວຢ່າງນຶ່ງຂອງຄວາມຕື່ນໂຕທີ່ລະເບີດຂຶ້ນໃນສັງຄົມຢ່າງກວ້າງຂວາງ. ເຖິງແມ່ນວ່າ ການໂຄສະນາສົ່ງເສີມການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ຍັງສືບຕໍ່ຕະຫຼອດເວລາ ໂດຍການໃຊ້ເຫດຜົນທີ່ສະຫຼັບສັບຊ້ອນຂຶ້ນກວ່າເກົ່າ ນັບແຕ່ "ເພື່ອຢຸດຕິການຖາງປ່າເຮັດໄຮ່" ແລະ "ຫລຸດຜ່ອນຄວາມທຸກຈົນ" ຫວ່າງ 20 ປີ ກ່ອນ ມາເປັນເຫດຜົນ" ການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ເພື່ອຂາຍກາກບອນເຄຼດິດ" ແລະ "ເພື່ອຜະລິດພະລັງງານທົດແທນຈາກພືດ" ໃນປະຈຸບັນ. ຜ່ານມາຫຼາຍປີ ເຫດຜົນຕ່າງໆທີ່ໃຊ້ອະທິບາຍຕໍ່ປະຊາຊົນໄດ້ປີ້ນປ່ຽນໄປມາຕະຫຼອດ, ແຕ່ສິ່ງນຶ່ງທີ່ບໍ່ປ່ຽນແປງ ກໍຄືປະຊາຊົນໃນພາກພື້ນແມ່ນ້ຳຂອງ ສືບຕໍ່ຖືກຊຸກດັນອອກໄປຢູ່ຕິດກັບຂອບເນື້ອທີ່ດິນຂອງພວກເຂົາເອງ.

ໃນເດືອນພະຈິກ ປີ 2006, ກອງປະຊຸມລະດັບພາກພື້ນແມ່ນ້ຳຂອງກ່ຽວການປູກຕົ້ນໄມ້ຢູ່ແຂວງກະແຈະ ປະເທດກຳປູເຈຽ, ເປັນເວທີພົບປະແລກປ່ຽນຄວາມຄິດເຫັນ ປະສົບການ ແລະ ເພື່ອຮັບຮູ້ບັນຫາຂອງການປູກພືດອຸດສາຫະກຳເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ແລະ ຜົນກະທົບຂອງມັນຕໍ່ການດຳລົງຊີວິດຂອງປະຊາຊົນຈາກຫ້າປະເທດໃນພາກພື້ນແມ່ນ້ຳຂອງ. ໄດ້ອອກຄຳປະກາດເອກະພາບສະບັບນຶ່ງ. ຢັ້ງຢືນວ່າຜູ່ເຂົ້າຮ່ວມກອງປະຊຸມມີຄວາມເຫັນແບບກົງກັນຂ້າມກັບລັດຖະບານ ທີ່ອ້າງວ່າ "ການປູກພືດອຸດສາຫະກຳເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ແມ່ນເພື່ອພັດທະນາເສດຖະກິດຂອງຊາດ ແລະ ຫລຸດຜ່ອນຄວາມທຸກຈົນຂອງປະຊາຊົນ" ແຕ່ ຄວາມຈິງກໍຄື "ການປູກພືດອຸດສາຫະກຳເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ໄດ້ເຮັດໃຫ້ຄວາມທຸກຍາກຂອງປະຊາຊົນເພີ່ມທະວີຂຶ້ນຍ້ອນເຮັດໃຫ້ເກີດມີການເຄື່ອນຍ້າຍກົ່ນການຂອງປະຊາຊົນ, ແຫຼ່ງຊັບພະຍາກອນທີ່ເປັນປັດໄຈຕົ້ນຕໍຂອງການດຳລົງຊີວິດຖືກທຳລາຍ ແລະ ໃນຫຼາຍໆບ່ອນ ຊຸມຊົນບໍ່ສາມາດເຂົ້າຫາແຫຼ່ງຊັບພະຍາກອນທຳມະຊາດຂອງພວກເຂົາໄດ້ອີກເລີຍ "ບົດສະຫລຸບຂອງພວກເຂົາຄື "ໃນທຸກໆກໍລະນີ ວິທີດຽວທີ່ຈະສ້າງຄວາມປ່ຽນແປງ ແມ່ນຕ້ອງຜ່ານການຕໍ່ສູ້ຂອງປະຊາຊົນ. ການຕໍ່ສູ້ ບໍ່ໄດ້ຫມາຍເຖິງຄວາມຮຸນແຮງສະເຫມີໄປ ແຕ່ຫມາຍເຖິງວິທີການຕ່າງໆ ທີ່ປະຊາຊົນນຳມາໃຊ້ ເພື່ອປົກປ້ອງສິດ ແລະ ປ້ອງກັນສິດຜົນປະໂຫຍດຂອງຕົນ".

ເພື່ອຫຼີກເວັ້ນການຍົກຍ້າຍຫນີຈາກກົ່ນການ ແລະ ປ່ຽນແປງຮູບແບບການດຳລົງຊີວິດ ປະຊາຊົນ ທີ່ເປັນລູກນ້ຳຂອງທັງຫຼາຍ ຕ້ອງຍຶດຫມັ້ນໃນຄວາມຄິດເຫັນຂອງຕົນ ຕ້ານຢັນກັບການໂຄສະນາຊວນເຊື່ອຂອງການປູກພືດອຸດສາຫະກຳເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ໂດຍປະກາດວ່າ ບໍ່ມີເຂດຊາຍແດນໃຫມ່ໃຫ້ບັນດາບໍລິສັດຍູ້ແຫຍ້ອີກແລ້ວ. ພວກເຂົາຕ້ອງການຢູ່ກັບທີ່ດິນບ່ອນເກົ່າ ແລະ ຟື້ນຟູຊີວິດ ເຂົາເຈົ້າເຫິງຜືນແຜ່ນດິນບ່ອນຝັງສາຍແຮ່ແຜ່ສາຍປືຂອງພວກເຂົາເອງ ອັນມີຄວາມຫມາຍວ່າ ພວກເຂົາຈະບໍ່ຍ້າຍຫນີອອກຈາກແຜ່ນດິນຄຳ ຫຼື ສຸວັນນະພູມແຫ່ງນີ້ໄປ.

***ໂດຍ ເປຣມຣຶດີ ດາວເຣືອງ - ອຳນວຍການ, ເທີຣາ (Towards Ecological Recovery and Regional Alliance [TERRA])***

## ການປູກພືດຊະນິດດຽວ ຂະຫຍາຍເນື້ອທີ່ຂ້າມຊາຍແດນ

ຕາໜ່າງເສດຖະກິດລະຫວ່າງ 6 ປະເທດລ່ອງແມ່ນ້ຳຂອງ ຊຶ່ງໄດ້ຮັບການອຸປະຖຳອຸ້ມຊູພາຍໃຕ້ແຜນການຮ່ວມມືທາງເສດຖະກິດໃນອະນຸພາກພື້ນລ່ອງນ້ຳຂອງ (Greater Mekong Sub-region economic cooperation programme [GMS]) ຂອງທະນາຄານພັດທະນາເອເຊຍ (ADB) ແຕ່ຊຸມປີ 90 ຜ່ານມາ ແນ່ໃສ່ການຂະຫຍາຍການລົງທຶນຂ້າມຊາດຈາກບັນດາປະເທດສູ່ປະ ເທດເສດຖະກິດຍັກໃຫຍ່ໃນພາກພື້ນແມ່ນ້ຳຂອງ ຄື: ຈີນ ໄທ ແລະ ຫວຽດນາມ ເຂົ້າໄປດຳເນີນການຢູ່ໃນປະເທດເພື່ອນບ້ານໃກ້ຄຽງ ຄື: ລາວ ແລະ ກຳປູເຈຍ ເຊິ່ງກໍຍິນດີວາແຂນແອນເອີກ ຕ້ອນຮັບເອົາການລົງທຶນຈາກບໍລິສັດຕ່າງດ້າວເຫຼົ່ານີ້. ເນື້ອທີ່ດິນອັນກວ້າງຂວາງ ແລະ ຄ່າແຮງງານຕ່ຳໆ ຖືກນຳໃຊ້ເປັນໂຕຊັກຈູງ ເອົານັກລົງທຶນມາຂະຫຍາຍການປູກພືດເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ ໃນຮູບແບບຂອງການສຳປະທານທີ່ດິນເປັນຮ້ອຍໆຕອນ ພາຍໃນໄລຍະ 4-5 ປີທີ່ຜ່ານມາ

ຮູບແບບການລົງທຶນປູກໄມ້ຊະນິດດຽວເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ໃນພາກພື້ນແມ່ນ້ຳຂອງ ສາມາດໄຈ້ແຍກອອກເປັນ 4 ປະເພດ ຄື: : ການລົງທຶນຈາກປະເທດທີ່ບໍ່ແມ່ນສະມາຊິກ ພາກພື້ນແມ່ນ້ຳຂອງ, ການລົງທຶນຂ້າມຊາຍແດນຈາກປະເທດໃກ້ຄຽງໃນພາກພື້ນແມ່ນ້ຳຂອງ, ການລົງທຶນທີ່ຮັບທຶນຮອນຈາກກຸ່ມນາຍທຶນໃຫຍ່ພາຍໃນປະເທດ ແລະ ການລົງທຶນຂະໜາດນ້ອຍຂອງປະຊາຊົນໃນດິນຕົນເອງ. ໃນບົດຄວາມນີ້ ພວກເຮົາຈະເນັ້ນເຖິງສອງປະເພດທຳອິດ ເຊິ່ງເປັນປະເພດທີ່ນຳໃຊ້ພື້ນທີ່ດິນຂະໜາດກວ້າງ ແລະ ເປັນສາເຫດໃຫ້ເກີດມີຜົນກະທົບຢ່າງໜັກໜ່ວງຕໍ່ຊຸມຊົນ. ເຮົາສາມາດໄຈ້ແຍກຜູ້ມີບົດບາດຕົ້ນຕໍຈາກບັນດາປະເທດຕ່າງໆ ດັ່ງລຸ່ມນີ້.

**ປະເທດສປປ. ລາວ**

ການລົງທຶນປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ໃນລາວ ສ່ວນຫຼາຍມາໃນຮູບແບບສຳປະທານດິນລັດຂະໜາດໃຫຍ່, ໂດຍສະເພາະເພື່ອປູກຕົ້ນວິກ(ຢູຄາລິບຕັສ) ແລະ ຕົ້ນຢາງກະຕັງກະຕິ້ວ (ຢາງພາລາ). ທັງຈາກນັກລົງທຶນພາຍໃນ ແລະ ປະເທດໃນອະນຸພາກພື້ນແມ່ນ້ຳຂອງ. ບໍລິສັດລົງທຶນຕົ້ນຕໍລວມມີ ບໍລິສັດ ໂອຈິ (Oji Paper) ຈາກປະເທດຍີ່ປຸ່ນ ທີ່ມີແຜນການຂະຫຍາຍການປູກຝັງ ຢ່າງກວ້າງຂວາງ ແລະ ກຳລັງຊອກຫາເນື້ອທີ່ທັງໝົດເຖິງ 50,000 ເຮັກຕາ ເພື່ອປູກຕົ້ນວິກຢູ່ໃນແຂວງບໍລິຄຳໄຊ ແລະຄຳມ່ວນ. ນອກນັ້ນ ຍັງມີບໍລິສັດເບີລາ-ລາວ (ເບີລາ-ກຣາຊິມ) ຈາກອິນເດຍ ເຊິ່ງໄດ້ຮັບເນື້ອທີ່ສຳປະທານ 30,000 ເຮັກຕາ ເພື່ອປູກຕົ້ນວິກໃນແຂວງສະຫວັນນະເຂດ. ນັກລົງທຶນພາຍໃນພາກພື້ນແມ່ນ້ຳຂອງ ລວມມີບໍລິສັດຢາງຈາກຫວຽດນາມ ເຊັ່ນ ຫວຽດ-ລາວ, ດັກລັກ ແລະ ເຢົ້າຕຽງ ເຊິ່ງໄດ້ສັນຍາລົງທຶນໃສ່ຢາງກະຕັງກະຕິ້ວ ກວມເນື້ອທີ່ຫຼາຍກວ່າ 30,000 ເຮັກຕາ ໃນແຂວງ ພາກໃຕ້ຂອງລາວ ຄື: ແຂວງຈຳປາສັກ ແລະ ສາລະວັນ. ຈາກບົດລາຍງານຕ່າງໆ ຊີ້ໃຫ້ເຫັນວ່າ ບັນດາບໍລິສັດຫວຽດນາມກຳລັງຊອກເນື້ອທີ່ຂະຫຍາຍ ການປູກຕົ້ນຢາງກະຕັງກະຕິ້ວ ໃນລາວ ໃຫ້ໄດ້ເນື້ອທີ່ 100,000ເຮັກຕາ ພາຍໃນ 12 ປີ. ນອກຈາກນັ້ນ ສອງບໍລິສັດ ໃຫຍ່ຜະລິດເຍື່ອເຈ້ຍຈາກປະເທດໄທ ຄື: ແອດວານສ ອະໂກຣ ແລະ ຟີນິກ ພັລຟ ແອນ ເປເປອຣ, ກໍ່ກຳລັງຊອກຫາທີ່ດິນໃນລາວ ເພື່ອປູກຕົ້ນວິກ ເປັນວັດຖຸດິບປ້ອນ ເຂົ້າໂຮງງານ ຢູ່ປະເທດໄທ.

ຫຼ້າສຸດ ລັດຖະບານສ.ປ.ປ.ລາວ ອະນຸຍາດເນື້ອທີ່ສຳປະທານ ເພື່ອປູກພືດຊະນິດດຽວເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ທົ່ວປະເທດ ໃຫ້ບໍລິສັດຕ່າງດ້າວ ລວມມີປະມານ 167,000 ເຮັກຕາ ເນື້ອທີ່ 80,000 ເຮັກຕາ ສຳລັບ

ເປັນບ່ອນປູກຕົ້ນວິກ ແລະ ອີກປະມານ 46,600 ເຮັກຕາ ເອົາໄວ້ປູກຕົ້ນຢາງກະຕັງກະຕິ້ວ. ດິນສຳປະທານສ່ວນຫຼາຍແມ່ນຢູ່ພາກກາງ ແຜ່ລົງໄປທາງໃຕ້ຂອງປະເທດ.

ເຖິງແມ່ນວ່າ ນັບແຕ່ເດືອນພຶດສະພາປີ 2008 ມານີ້ ລັດຖະບານ ສ.ປ.ປ. ລາວ ໄດ້ມີຄຳເຫັນໃຫ້ຍຸດຕິຊົ່ວຄາວ (ໂຈະ)ການອອກອະນຸຍາດສຳປະທານທີ່ດິນທົ່ວປະເທດໄວ້ໄລຍະ ຫນຶ່ງແລ້ວກໍ່ຕາມ ແຕ່ຍັງມີນັກລົງທຶນຕ່າງດ້າວພະຍາຍາມຍູ້ດັນ ແລະ ບາງພາກສ່ວນພາຍໃນລັດເອງ ກໍ່ໄດ້ເຫັນດີເຫັນງາມໄປນຳ ດັ່ງຈະເຫັນໄດ້ວ່າ ທາງຄະນະກຳມະການແຜນການ ແລະການລົງທຶນຂອງ ສ.ປ.ປ.ລາວ ຍັງຄົງສືບຕໍ່ອອກໃບອະນຸຍາດລົງທຶນ ໂດຍສະເພາະການລົງທຶນໃສ່ການປູກໄມ້ເປັນສິນຄ້າ ທີ່ຕ້ອງການເນື້ອທີ່ປູກຝັງເປັນຈຳນວນມະຫາສານ ເຖິງແມ່ນວ່າມີການໂຈະການອອກອະນຸຍາດສຳປະທານດິນ ແລະກົດຫມາຍບໍ່ອະນຸຍາດໃຫ້ບໍລິສັດຕ່າງໆ ສາມາດນຳໃຊ້ທີ່ດິນໄດ້ຫຼາຍກວ່າ 100 ເຮັກຕາ ແຕ່ເຫັນຢ່າງຈະແຈ້ງວ່າມີກໍລະນີໃຫ້ການຍົກເວັ້ນ ເຮັດໃຫ້ບາງບໍລິສັດຍັງສາມາດນຳໃຊ້ທີ່ດິນຢູ່ຈາກການໃຫ້ອະນຸຍາດໂດຍອຳນາດການປົກຄອງທ້ອງ ຖິ່ນທີ່ອ້າງອີງໃສ່ວ່າ ມີການອະນຸມັດຈາກຄະນະກຳມະການແຜນການ ແລະການລົງທຶນມາກ່ອນຫນ້ານີ້. ໂຄ່ງຮາງກົດຫມາຍອັນສະຫລັບຊັບຊ້ອນໃນປະຈຸບັນ, ການປະຕິບັດກົດລະບຽບທີ່ບໍ່ສະຫມ່ຳສະເຫມີ ສ້າງຄວາມສັບສົນເຂົ້າໃຈຍາກ ທັງຕໍ່ນັກລົງທຶນ ພະນັກງານລັດໃນທ້ອງຖິ່ນພື້ນຖານ ແລະປະຊາຊົນ ດັ່ງນັ້ນ, ປະຊາຊົນຈຶ່ງບໍ່ໄດ້ຮັບການປົກປ້ອງຄຸ້ມຄອງຢ່າງພຽງພໍ ຈາກການສູນເສຽເນື້ອທີ່ດິນໃຫ້ບໍລິສັດສຳປະທານຜູ້ຮັ່ງມີ ແລະ ມີອິດທິພົນ.

**ປະເທດກຳປູເຈຍ**

ສະພາບການແບ່ງຍາດໂອນເອົາດິນຢູ່ປະເທດກຳປູເຈຍ ມີສະພາບຮ້າຍແຮງ ແລະ ມີຂອບເຂດກວ້າງຂວາງ. ຂໍ້ມູນຈາກສະພາລັດຖະມົນຕີ ໃນເດືອນກຸມພາ ປີ 2003 ແຈ້ງໃຫ້ຮູ້ວ່າ ລັດຖະບານປະເທດກຳປູເຈຍ ໄດ້ອະນຸມັດ ໃຫ້ສຳປະທານທີ່ດິນເພື່ອເສດຖະກິດ (Economic Concession) ໃນທີ່ດິນຂະຫນາດໃຫຍ່ລວມ 40 ຕອນ ກວມເອົາເນື້ອທີ່ 809,296 ເຮັກຕາ. ຫຼັງຈາກນັ້ນ ບໍ່ປາກົດມີໂຕເລກໃຫມ່ ອອກໃຫ້ເຫັນ, ແຕ່ມີລາຍງານຊີ້ບອກວ່າ ໃນໄລຍະເສດຖະກິດໂລກກຳລັງເບັ່ງບານເມື່ອຕົ້ນສະຕະວັດນີ້ ເນື້ອທີ່ດິນເຄິ່ງນຶ່ງຂອງປະເທດກຳປູເຈຍ ຖືກມອບເວນເຄນໃຫ້ນັກລົງທຶນຕ່າງດ້າວນຳໃຊ້ທັງໃນຮູບແບບສຳປະທານ ແລະ ເຊົ່າໄລຍະຍາວນານ.

ນັກລົງທຶນສ່ວນໃຫຍ່ໃນປະເທດກຳປູເຈຍ ມັກຈະມີຄວາມສຳພັນກັບນັກການເມືອງຜູ່ສຳຄັນໃນລັດຖະບານ. ເຖິງວ່າກົດຫມາຍອະນຸມັດເນື້ອທີ່ດິນສຳປະທານເພື່ອເສດຖະກິດໄດ້ບໍ່ກາຍ 10,000 ເຮັກຕາ ແລະ ທີ່ດິນທີ່ໄດ້ຮັບສຳປະທານເກີນອັດຕານັ້ນໃນເມື່ອກ່ອນ ກໍຈະຕ້ອງໄດ້ຕັດເນື້ອທີ່ດິນອອກ. ແຕ່ໃນຄວາມເປັນຈິງ ລັດຖະບານບໍ່ໄດ້ປະຕິບັດການໃດໆເພື່ອຍຶດເອົາດິນຄືນຈາກບໍລິສັດໃຫຍ່ໆ ທີ່ຖືສິດຄອບຄອງເນື້ອທີ່ກາຍກຳນົດໃຫ້ສຳປະທານຕາມທີ່ແຈ້ງການ (ເຂົ້າໄປເບິ່ງ ຂໍ້ມູນຕື່ມ ທີ່ Fast-wood Plantation Economic Concessions and Local Livelihoods in Cambodia, 2006; land concession and forest concession map in Stung Treng province, 2006) ກຸ່ມບໍລິສັດ ວູຊີງຊານ ເອລ ເອຊ (Wuzhishan L.S.Group) ຈາກປະເທດຈີນ ມີເນື້ອທີ່ສຳປະທານເຖິງ 199,999 ເຮັກຕາ ເພື່ອປູກຕົ້ນແປກໃນແຂວງມົນທົນຄີຣີ. ເນື້ອທີ່ 10,000 ເຮັກຕາທຳອິດ ໄດ້ຮັບອະນຸມັດຢ່າງເປັນທາງການມີເນື້ອທີ່ສຳປະທານ 10,000 ເຮັກຕາ ແຕ່ເນື້ອທີ່ສ່ວນທີ່ເຫຼືອນັ້ນເປັນມາແນວໃດພັດບໍ່ມີຂໍ້ມູນຈະແຈ້ງ.

ບໍລິສັດຕ່າງດ້າວອື່ນໆ ທີ່ເປັນເຈົ້າຂອງສຳປະທານໃນທີ່ດິນຂະໜາດໃຫຍ່ມີ ບໍລິສັດ ກຣີນຣິຈ (Green Rich) ມີເນື້ອທີ່ດິນປູກຕົ້ນກະຖິນເທພາ ແລະ ຕົ້ນປາມນ້ຳມັນ 18,300 ເຮັກຕາ ໃນແຂວງເກາະກົງ, ກຸ່ມ ບໍລິສັດກຳປູເຈຍ ຣາຍນິງ (Cambodia haining Group) ໄດ້ເນື້ອທີ່ດິນ 21,250 ເຮັກ ຕາ ໃນແຂວງກຳປົງສະປື ເພື່ອປູກມັນຕົ້ນ, ປາມນ້ຳມັນ ແລະລ້ຽງສັດ ນອກນັ້ນຍັງມີບໍລິສັດ ເອເຊຍພັດທະນາກະສິກຳໂລກ (Asia World Agriculture Development) ບໍລິສັດ ພັດທະນາກະສິກຳສາກົນ (Global Agricultural Development) ແລະບໍລິສັດ ສະແຫວງຫາການພັດທະນາການກະສິກຳ (Great Wonder Ag Dev Co) ໄດ້ຮັບອະນຸຍາດສຳປະທານດິນເຈົ້າລະ 10,000 ເຮັກຕາ ເພື່ອປູກຕົ້ນສັກ ໃນເຂດເມືອງດຽວກັນຢູ່ແຂວງກະແຈະ, ໃນນັ້ນ ທັງຫມົດໄດ້ຮັບການອະນຸມັດສຳປະທານທີ່ດິນໃນມື້ດຽວກັນ.

ເດືອນມີນາ ປີ 2006 ຕົວແທນກຸ່ມບໍລິສັດ ໄຫຫນານ ເນເຈີຣອລ ຣັບເບີ (Hainan Natural Rubber Industry Group Corp) ເຊິ່ງເປັນບໍລິສັດຜະລິດຢາງທີ່ໃຫຍ່ສຸດຂອງປະເທດຈີນ ແລະ ບໍລິສັດຊຸຍກັງລົງທຶນເພື່ອການພັດທະນາຈຳກັດ (Suigang Investment Development Co Ltd) ໃນປະເທດກຳປູເຈຍ ໄດ້ເຊັນຕົກລົງໂຄງການລົງທຶນປູກຢາງກະຕັງກະຕິ້ວ ແລະ ຣວມທັງການຕັ້ງໂຮງງານຜະລິດໃນປະເທດພ້ອມ. ສຳປະທານທີ່ດິນຫລາຍກວ່າ 60,000 ເຮັກຕາ ແລະ ມີລາຍງານເພີ່ມມາອີກວ່າ ບໍລິສັດຈາກຫວຽດນາມສອງຫາສາມບໍລິສັດໄດ້ຮັບອະນຸມັດປູກຕົ້ນຢາງໃນເນື້ອທີ່ 16,000 ເຮັກຕາ ໃນແຂວງມົນທົນຄີຣີ. ຄືກັນກັບປະເທດລາວ, ບໍລິສັດທີ່ເຮັດອຸດສາຫະກຳຢາງເຫລົ່ານີ້ຂອງຫວຽດນາມ ຕັ້ງເປົ້າຫມາຍເນື້ອທີ່ລົງທຶນປູກຢາງກະຕັງກະຕິ້ວໃນປະເທດກຳປູເຈຍໄວ້ 100,000 ເຮັກຕາ ລາຍງານຂ່າວອອກມາໃນເດືອນພະຈິກ ປີ 2007 (ຫນັງສືອພິມຜູ້ຈັດການ, 28 ພະຈິກ 2007 ) ແຈ້ງໃຫ້ຮູ້ວ່າ ມີ 3 ໂຄງການປູກຕົ້ນຢາງຂອງລັດຖະບານ ທີ່ກວມເອົາເນື້ອທີ່ດິນຫຼາຍກວ່າ 22,000 ເຮັກຕາ ຖືກຍົກໃຫ້ 3 ບໍລິສັດເອກະຊົນຈາກປະເທດຈີນ ເຊົ່າ ໃນສັນຍາເຊົ່າໄລຍະເວລາເຖິງ 99 ປີ.

ບໍ່ແມ່ນມີແຕ່ພຽງບໍລິສັດຕ່າງດ້າວເທົ່ານັ້ນ ທີ່ໄດ້ຮັບອະນຸມັດສຳປະທານທີ່ດິນຈາກລັດຖະບານ ເນື້ອທີ່ຫລາຍກວ່າ 2,000,000 ເຮັກຕາ ໃນແຂວງສະຕຶງເຕັງ ໄດ້ຮັບອະນຸມັດໃຫ້ 11 ບໍລິສັດເອກະຊົນໃນປະເທດ ແລະ ບໍລິສັດໃນປະເທດກໍ່ໄດ້ຊັກຊວນບໍລິສັດຕ່າງດ້າວເຂົ້າມາ ຮ່ວມລົງທຶນອີກເທື່ອຫນຶ່ງ.

**ປະເທດພະມ້າ**

ຂໍ້ມູນທີ່ຖືກຕ້ອງຈະແຈ້ງ ່ຽວກັບການພັດທະນາປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ໃນປະເທດພະມ້າ ແມ່ນຫາໄດ້ຍາກຫຼາຍ. ຂ່າວທີ່ກະແຈກກະຈາຍອອກມາໃນໄລຍະຕ່າງໆ ຊີ້ໃຫ້ເຫັນ ແຜນການເປົ້າຫມາຍ ແລະ ຂໍ້ມູນຕົວເລກການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ຫນ້ອຍທີ່ສຸດ ສຳນັກຂ່າວຊິນຫົວຂອງປະເທດຈີນ ໄດ້ລາຍງານໃນເດືອນພຶດສະພາ ປີ 2007 ວ່າ ລັດຖະມົນຕີກະຊວງກະສິກຳ ແລະ ຊົນລະປະທານຂອງພະມ້າ ໄດ້ເວົ້າເຖິງແຜນການທີ່ລັດຖະບານຈະໃຊ້ທີ່ດິນຫຼາຍກວ່າ 3,24 ລ້ານເຮັກຕາ ປູກພືດເຊື້ອເພີງຊີວະພາບ (agrofuel crops) ເພື່ອເພີ່ມການຜະລິດຂຶ້ນເປັນ 20 ລ້ານໂຕ້ນຕໍ່ປີ. ຕົວເລກສະຖິຕິ ຢ່າງ ເປັນທາງການ ສະແດງໃຫ້ເຫັນວ່າ ມີການໃຫ້ສຳປະທານເພື່ອປູກຕົ້ນຢາງໃນປີ 2007 ກວມເອົາເນື້ອທີ່ເຖິງ 302,000 ເຮັກຕາ (ມຽນມ້າ ທາຍສ໌, 2007)

**ຈີນ, ຫວຽດນາມ ແລະ ໄທ: ນັກລົງທຶນໃຫມ່**

ສາມປະເທດດັ່ງກ່າວ ກໍາລັງເພີ່ມທະວີບົດບາດຂອງຕົນໃນການລົງທຶນໃສ່ປະເທດໃກ້ຄຽງ. ບໍລິສັດເອກະຊົນຈາກສາມປະເທດນີ້ ມີກໍາລັງຊັບເພື່ອການລົງທຶນສູງຂຶ້ນ. ພວກເຂົາບໍ່ຈໍາເປັນຕ້ອງໄດ້ ເອື່ອຍອີງໃສ່ເງິນກູ້ຢືມຈາກສະຖາບັນການເງິນສາກົນ ເຊັ່ນ: ທະນາຄານພັດທະນາອາຊີ (ADB) ແລະ ເນື່ອງຈາກຂີດຈໍາກັດໃນການຂະຫຍາຍການປູກຝັງໃນປະເທດຕົນເອງ, ກຸ່ມນັກລົງທຶນຈາກປະເທດ ຈີນ, ຫວຽດນາມ ແລະ ໄທ ກໍາລັງ ບຽດແຫຍ້ເຂົ້າມາລົງທຶນປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ໃນລາວ ແລະ ກໍາປູເຈຍ.

ແຕ່ຢູ່ດ້ານຫຼັງຂອງທີ່ດິນສໍາປະທານອັນກວ້າງໃຫຍ່ໄພສານນັ້ນ  ແມ່ນການສູນເສຍທີ່ດິນໄຮ່ນາຮົ້ວ ສວນ ແລະພື້ນທີ່ຫາຢູ່ຫາກິນຂອງຜູ່ຄົນ ແລະ ທົ່ງຫຍ້າລ້ຽງສັດ. ໃນປະເທດລາວ ແລະ ກໍາປູເຈຍ ເຊິ່ງປະຊາກອນກວ່າ 80 ສ່ວນຮ້ອຍ ດໍາລົງຊີວິດ ແລະອາໄສຢູ່ກັບຊັບພະຍາກອນທໍາມະຊາດ. ເມື່ອລາຄາພືດ ທີ່ເປັນອາຫານແພງຂຶ້ນ ຄືໃນໄລຍະປີທີ່ຜ່ານມາ ປະຊາຊົນຜູ້ເສຍທີ່ດິນປູກເຂົ້າຈຶ່ງໄດ້ຮັບຜົນກະທົບຢ່າງຫນັກຫນ່ວງ. ຜູ້ເສຍດິນດອນຕອນຫຍ້າ ໄດ້ອາໄສການເປັນແຮງງານຮັບຈ້າງປູກຕົ້ນໄມ້ໃຫ້ບໍລິສັດ, ແຕ່ວຽກຈ້າງເຕັມເວລາມີໃຫ້ແຕ່ຄົນກຸ່ມນ້ອຍໆເທົ່ານັ້ນ ສະເພາະແຕ່ຊາວຫນຸ່ມຜູ້ມີກໍາລັງ ສ່ວນສະມາຊິກທີ່ເຫຼືອໃນຄອບຄົວກໍກາຍເປັນຄົນບໍ່ມີວຽກເຮັດງານທໍາ. ດັ່ງນັ້ນ, ເປັນການຍາກທີ່ລາຍຮັບຄ່າແຮງງານຂອງປະຊາຊົນ ຈາກການເປັນແຮງງານໃຫ້ບໍລິສັດ, ຈະພຽງພໍລ້ຽງຄອບຄົວ ເຊິ່ງຫມົດດິນບ່ອນທໍາມາຫາກິນໄປແລ້ວ. ສະພາບທີ່ເສດຖະກິດມີຄວາມແຕກຕ່າງສະຫຼັບຊັບຊ້ອນ ແລະ ລະບົບການເມືອງ ມີຄວາມແຕກຕ່າງກັນ ຢູ່ໃນບັນດາປະເທດໃນ ເຂດລ່ອງນໍ້າຂອງນັ້ນ  ພາກສ່ວນປະຊາສັງຄົມ (civil society) ບໍ່ມີຊ່ອງທາງໃຫ້ໄດ້ສະແດງບົດບາດຂອງຕົນໃນສາທາລະນະ. ໂດຍສະເພາະໃນປະເທດທີ່ມີເງື່ອນໄຂຈໍາກັດ, ດ້ານການເມືອງແລະການສື່ສານ ເຊັ່ນ: ລາວ ແລະ ກໍາປູເຈຍ ນັ້ນ ການສົນທະນາແບບສາທາລະນະ ຍິ່ງເປັນໄປໄດ້ຍາກຫຼາຍເຊັ່ນດຽວກັບການກົດຂີ່ມການສະແດງອອກໃນພະມ້າ. ເບິ່ງປະເທດທີ່ມີອໍານາດທາງເສດຖະກິດ ແລະ ການເມືອງເຊັ່ນ: ປະເທດຈີນ, ຫວຽດນາມ ແລະ ໄທແລ້ວ ກໍເບິ່ງຄືວ່າ ປະເທດໄທ ເປັນປະເທດທີ່ເປີດກວ້າງໃຫ້ກັບພາກສ່ວນປະຊາສັງຄມຫລາຍກວ່າຫມູ່. ແຕ່ ຄວາມຈິງ ກະໂຕຜູ້ນໍາຂອງພາກສ່ວນປະຊາສັງຄມ ແລະ ສະມາຊິກຂອງສັງຄົມສ່ວນໃຫຍ່ ກໍ່ຍັງບໍ່ທັນສົນໃຈພຽງພໍ ຫຼື ຍັງບໍ່ທັນສໍານຶກຮູ້ຢ່າງເລິກເຊິ່ງ ເຖິງຜົນກະທົບຂ້າມຊາດທີ່ນາຍທຶນໃນປະເທດຕົນເອງ ໂດດໄປລົງທຶນຢູ່ປະເທດໃກ້ຄຽງ.

***ໂດຍ ພອນພະນາ ກ໊ວຍຈະເຣີນ, ເທີຣາ, (pornpana@terraper.org)***

ຂໍ້ມູນເພີ່ມຕື່ມກ່ຽວກັບການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ເຊີນເຂົ້າໄປເບິ່ງໄດ້ທີ່ : www.terraper.org

ທະນາຄານພັດທະນາອາຊີ (ADB) ກຳລັງທຳລາຍປ່າເຂດລ່ອງແມ່ນ້ຳຂອງ ແລະ ສະພາບອາກາດໂລກ.

ມື້ເຊົ້ານີ້ທີ່ໂພຊະນານ (Poznan) ຢູ່ນອກຫ້ອງປະຊຸມ ກ່ຽວກັບການປ່ຽນແປງຂອງສະພາບອາກາດ, ກຸ່ມເພື່ອນມິດຂອງໂລກ (Friends of the Earth) ກຳລັງປະທ້ວງຕໍ່ຕ້ານທະນາຄານໂລກ ທີ່ໃຫ້ເງິນກູ້ຢືມແກ່ໂຮງງານໄຟຟ້າກ່ານຫີນ. ມີໂຕຮຸ່ນພະນັກງານທະນາຄານໂລກ ນຸ່ງເຄື່ອງແບບສີດຳ ຕໍ່ສູ້ກັບຫມີຂົ້ວໂລກເຫນືອ, ເຮັດທ່າທາງຄືໂຍນກ່ານຫີນໃສ່ຫມີ.

"ນີ້ແມ່ນຕົວຢ່າງແບບເກົ່າໆຂອງອົງການພັດທະນາຈາກເອີຣົບ ທີ່ບໍ່ເຂົ້າໃຈບັນຫາເລື່ອງການປ່ຽນ ແປງຂອງສະພາບພູມອາກາດໂລກຢ່າງຄັກແນ່" ສຽງໃຜຜູ້ຫນຶ່ງເວົ້າຂຶ້ນຢູ່ທາງຫຼັງຂ້ອຍ. ປາກົດວ່າຜູ້ ທີ່ເວົ້ານັ້ນ ແມ່ນພະນັກງານທະນາຄານພັດທະນາອາຊີ (ADB) ທີ່ເຮັດວຽກຢູ່ພະແນກ ການປ່ຽນ ແປງສະພາບພູມອາກາດ. ລາວບອກຂ້ອຍວ່າ ປະເທດອິນເດຍ ແລະ ຈີນ ຈະເປັນໂຕຕັດສິນ ຄວາມຫນັກຫນ່ວງຂອງບັນຫາການປ່ຽນແປງສະພາບອາກາດ ແລະ ເຮົາຕ້ອງພັດທະນາ "ການ ເຜົາໄຫມ້ພະລັງງານແບບສະອາດ" ກັກມ້ຽນອາຍກາກໂບນິກຢູ່ປະເທດອິນເດຍ ແລະ ຈີນ ແຕ່ລາວກໍ່ຍອມຮັບວ່າ ເຕັກໂນໂລຍີດັ່ງກ່າວ ຍັງບໍ່ມີໃຫ້ນຳໃຊ້ເທື່ອໃນປະຈຸບັນ.

ຂ້າພະເຈົ້າຊີ້ໃຫ້ລາວເຫັນວ່າ ທັງທະນາຄານໂລກ ແລະ ທະນາຄານພັດທະນາອາຊີຍັງສືບຕໍ່ໃຫ້ເງິນສະຫນັບສະຫນູນແຜນພະລັງງານກ່ານຫີນ, ນັ້ນຫມາຍເຖິງໂຕທະນາຄານເອງ ທີ່ບໍ່ເຂົ້າໃຈບັນຫານີ້ ບໍ່ແມ່ນອົງການພັດທະນາ. ລາວພັດເຫັນດີ ບອກຂ້າພະເຈົ້າວ່າ ທະນາຄານພັດທະນາອາຊີ ຕົກລົງໃຫ້ເງິນກູ້ຢືມ 900 ລ້ານໂດລາສະຫະລັດ ແກ່ໂຮງງານພະລັງງານກ່ານຫີນ ຢູ່ປະເທດຫວຽດນາມ. ແລ້ວເວົ້າວ່າ "ຂ້ອຍແມ່ນຕຳນິທະນາຄານຫຼາຍກວ່າທີ່ເຈົ້າຕຳນິ".

ຫົວຂໍ້ສົນທະນາທີ່ຈັດຂຶ້ນຢູ່ ໂພຊະນານ ສ່ວນໃຫຍ່ເວົ້າເລື່ອງປ່າໄມ້ ແລະ ບົດບາດຂອງມັນ ເພື່ອດຳເນີນການແກ້ໄຂວິກິດການປ່ຽນແປງສະພາບອາກາດໂລກ. ທະນາຄານ, ບໍລິສັດຜູ້ໃຫ້ທຶນ, ລັດຖະບານ ແລະ ບັນດາຫນ່ວຍງານຂອງອົງການສະຫະປະຊາຊາດທັງຫຼາຍ ເຊິ່ງໃນທັນທີທັນໃດພາກັນ ຟົດຟື້ນສົນໃຈກ່ຽວກັບເລື່ອງທີ່ວ່າ ປ່າໄມ້ສາມາດກອບກູ້ໂລກໄດ້ນັ້ນ ລ້ວນແຕ່ເຄີຍເປັນຜູ້ມີມີບົດບາດ ຕົ້ນຕໍໃນການທຳລາຍປ່າໄມ້ແລ້ວ ກໍ່ພາກັນປະກາດວ່າ ພວກຕົນຕ້ອງການປົກປັກຮັກສາປ່າໄມ້ໄວ້.

ຕົ້ນປີນີ້ ຄະນະເຮັດວຽກແຜນງານອະນຸພາກພື້ນແມ່ນ້ຳຂອງ ຂອງທະນາຄານພັດທະນາອາຊີ ທີ່ຮັບຜິດຊອບເລື່ອງສິ່ງແວດລ້ອມ ໄດ້ຜະລິດວິດີໂອເລື່ອງຫນຶ່ງ ມີຊື່ວ່າ "ປ່າເພື່ອອະນາຄົດ", ເນື້ອໃນໃຈຄວາມສຳຄັນອະທິບາຍວ່າການເຜົາໄຫມ້ເຊື້ອໄຟທີ່ໄດ້ຈາກຟອສຊິລ ບໍ່ແມ່ນແຫຼ່ງປ່ອຍອາຍກາກໂບນິກຂຶ້ນຊັ້ນບັນຍາກາດແຕ່ພຽງແຫຼ່ງດຽວແຕ່ "ປ່າໄມ້ທີ່ມີຄຸນຄ່າສູງ ກຳລັງຖືກບຸກເບີກຖາງແປນໃຫ້ເປັນບ່ອນປູກໄມ້ຜະລິດເຈ້ຍ ປູກຫຍ້າລ້ຽງສັດ ແລະປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ເພື່ອຕອບສະຫນອງຄວາມຕ້ອງການໃນດ້ານພະລັງງານ." ແລະ ຖ້າເຮົາຍັງບໍ່ເຊື່ອຫມັ້ນໃນຄວາມຕັ້ງໃຈສີຂຽວຂອງທະນາຄານພັດທະນາອາຊີ ໃບກະແຫຼງຂ່າວຂອງທະນາຄານ ກໍ່ບອກ

ເຮົາຕື່ມອີກວ່າ "ປ່າໄມ້ກໍ່ປຽບເຫມືອນປອດຂອງໂລກ ມັນຄ່ອຍໆດູດຊຶບອື່ນເອົາອາຍກາກໂບນິກ ທີ່ຖືກປ່ອຍອອກສູ່ຊັ້ນບັນຍາກາດໃນປະຈຸບັນ."

ແຕ່ເງິນກູ້ຢືມຂອງທະນາຄານພັດທະນາອາຊີ ຊໍ້າພັດມີຜົນກະທົບອັນໃຫຍ່ຫຼວງຕໍ່ປ່າໄມ້ໃນເຂດລ່ອງນໍ້າຂອງ, ເນື້ອທີ່ຂອງປ່າຫລຸດລົງເຖິງ 68,000 ກິໂລແມັດກາເລ ລະຫວ່າງປີ 1990 ຫາປີ 2000. ທະນາຄານພັດທະນາອາຊີໄດ້ໃຫ້ເງິນເພື່ອສ້າງຖະຫນົນເຂົ້າໄປຫາປ່າ ແລະ ເພື່ອອໍານວຍ ຄວາມສະດວກໃຫ້ແກ່ການຂົນສົ່ງອອກໄມ້. ຍົກຕົວຢ່າງຖະຫນົນເລກທີ 9, ທີ່ອອກຈາກທ່າເຮືອດົງຮາຂອງຫວຽດນາມຫາແຂວງສະຫວັນນະເຂດ ໃນປະເທດລາວ, ເປັນນຶ່ງໃນຖະຫນົນທີ່ ບໍລິສັດຄ້າໄມ້ຂອງຫວຽດນາມນໍາໃຊ້ຂົນສົ່ງໄມ້ອອກຈາກປະເທດລາວ - ເຊິ່ງໃນນັ້ນສ່ວນຫຼາຍເປັນໄມ້ເຖື່ອນຜິດກົດຫມາຍ. ຖະຫນົນເສັ້ນດັ່ງກ່າວຕັດຜ່ານສອງເຂດປ່າສະຫງວນແຫ່ງຊາດ. ກ່ອນທີ່ທາງທະນາຄານພັດທະນາອາຊີ ຈະຕົກລົງໃຫ້ເງິນກູ້ຢືມແກ່ໂຄງການ, ຫ້ອງການທະນາຄານເອງ ກໍໄດ້ຍອມຮັບວ່າຖະຫນົນເສັ້ນດັ່ງກ່າວ "ຈະເຮັດໃຫ້ມີການຄ້າໄມ້ ແລະ ສັດປ່າທີ່ຜິດກົດຫມາຍ ເກີດຂຶ້ນຫຼາຍກວ່າເກົ່າ".

ການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ແມ່ນໂຄງການທໍາລາຍປ່າໄມ້ໃນປະເທດລາວໂຄງການຫນຶ່ງທີ່ທະນາຄານພັດທະນາອາຊີໃຫ້ເງິນຊ່ອຍເຫຼືອ. ຫ້ອງການທະນາຄານພັດທະນາອາຊີຍອມຮັບວ່າ ໂຄງການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ມີສ່ວນເພີ່ມທະວີຄວາມທຸກຈົນໃນປະເທດ. ພາຍໃຕ້ໂຄງການປູກໄມ້ເປັນສິນຄ້າໃນເນື້ອທີຂະຫນາດໃຫຍ່, ຕົ້ນວິກໄດ້ເຂົ້າມາແທນທີ່ປ່າໄມ້ທີ່ມີຄວາມສໍາຄັນຕໍ່ການກໍາລົງຊີວິດຂອງຊຸມຊົນ. ບົດລາຍງານຂອງທະນາຄານຍອມຮັບວ່າ "ການປະຕິບັດໂຄງການປູກພືດອຸດສາຫະກໍາ ບໍ່ສອດຄ່ອງກັບການດູແລຮັກສາສິ່ງແວດລ້ອມສະເຫມີໄປ, "ແລະ ພື້ນທີ່ "ປ່າສົມບູນ" ກໍ່ຖືກລວມຢູ່ໃນພື້ນທີ່ປູກພືດອຸດສາຫະກໍາພາຍໃຕ້ໂຄງການ.

ເຖິງວ່າຍອມຮັບແນວນັ້ນກໍ່ຕາມ ທາງທະນາຄານພັດທະນາອາຊີ ຍັງມີແຜນສືບຕໍ່ໂຄງການປູກ ໄມ້ເປັນສິນຄ້າ ໃນເນື້ອທີ່ຂະຫນາດໃຫຍ່ໃນລາວອີກ, ແຕ່ໃນທີ່ສຸດໂຄງການກໍ່ຖືກຍົກເລີກ ຍ້ອນບັນຫາການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ມີບັນຫາຫລາຍຂຶ້ນ ແລະ ທາງທະນາຄານເອງກໍຮູ້ວ່າ ຖືກອົງການພັດທະນາທັງຫຼາຍ ທີ່ຢູ່ໃນລາວແລະ ຕ່າງປະເທດ ຕິດຕາມຢ່າງໃກ້ຊິດ.

ທີ່ປະເທດຫວຽດນາມ, ທະນາຄານພັດທະນາອາຊີ ໃຫ້ເງິນກູ້ຢືມ 33 ລ້ານໂດລາສະຫະລັດ ເພື່ອຟື້ນຟູປ່າເສື່ອມໂຊມ. ຕາມເຄີຍ ໃນກໍລະນີແບບນີ້ ທາງທະນາຄານ ແລະລັດຖະບານ ມັກກຸ້ມໂທດໃສ່ຊາວໄຮ່ຊາວນາ ວ່າເປັນຜູ່ທໍາລາຍປ່າໄມ້, ຂະນະທີ່ເລື່ອງຂອງການຕັດໄມ້ຂາຍ ແລະ ໂຄງການພັດທະນາ ແບບທໍາລາຍກົງໆ ຊໍ້າຖືກເບິ່ງຂ້າມ ຫຼືປິດອໍາໄວ້. ໂຄງການຟື້ນຟູດັ່ງກ່າວຕັ້ງເປົ້າຫມາຍໄວ້ຢ່າງຈະແຈ້ງ ເພື່ອ "ຫລຸດຜ່ອນການຖາງປ່າເຮັດໄຮ່ ເຊິ່ງເປັນອັນຕະລາຍ ແລະ ສ່ຽງຕໍ່ການທໍາລາຍປ່າໄມ້," ຕາມເອກະສານໂຄງການ ຂອງທະນາຄານພັດທະນາອາຊີ. ທະນາຄານພັດທະນາອາຊີແມ່ນຜູ່ສະຫນັບສະຫນູນທີ່ສໍາຄັນໃຫ້ໂຄງການ "ຟື້ນຟູປ່າໄມ້" ໃນເນື້ອທີ່ 5 ລ້ານ ເຮັກຕາຢູ່ສ.ສ.ຫວຽດນາມ, ເຊິ່ງໃນນັ້ນ 1 ລ້ານເຮັກຕາ ແມ່ນເພື່ອປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ປ້ອນໂຮງງານເຍື່ອເຈັ້ຽ ແລະ ຜະລິດເຈ້ຽ. ອີກໂຄງການຫນຶ່ງທີ່ທະນາຄານໃຫ້ທຶນໂຄງການ "ປ່າໄມ້ເພື່ອຊີວິດການເປັນຢູ່ທີ່ດີຂຶ້ນໃນເຂດພູດອຍພາກກາງ"ມີເນື້ອທີ່ 30,000 ເຮັກຕາ ເພື່ອປູກ"ພືດທີ່ໃຫ້ຜົນຜະລິດສູງ" ຫຼື ເວົ້າອີກຢ່າງຫນຶ່ງກໍແມ່ນ "ການປູກພືດ ຊະນິດດຽວເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່" ໄວ້ປ້ອນໂຮງງານອຸດສາຫະກໍາ.

ສ່ວນນຶ່ງຂອງເຂດສິ່ງອອກພິເສດ ລະຫວ່າງຊາຍແດນລາວ-ຫວຽດນາມ ຢູ່ລາວ-ບາວ (Lao Bao) ທາງທະນາຄານ ກຳລັງພິຈາລະນາໃຫ້ທຶນໂຮງງານປຸງແຕ່ງໄມ້ ທາງໂຮງເລື່ອຍຈະຊື້ໄມ້ອີກ ແລະ ໄມ້ ກະຖິນນະລົງຈາກລາວ ແລະ ຫວຽດນາມ ເພື່ອຜະລິດ "ເຟີນີເຈີສຳເລັດຮູບເສດໄມ້ນ້ອຍ(ມຸ່ນ) ແລະຕ່ອນໄມ້ສຳລັບປຸກສ້າງອື່ນໆ." ເອກະສານໂຄງການຂອງທະນາຄານ ຫມາຍເຫດໄວ້ວ່າ "ປະຈຸບັນນີ້ ພວມມີຄວາມວິຕົກກັງວົນ ກ່ຽວກັບຂົງເຂດເນື້ອທີ່ປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ທີ່ກຳລັງຫຼາຍຂຶ້ນໃນປະເທດຫວຽດນາມ", ແນ່ນອນ ເອກະສານໂຄງການບໍ່ໄດ້ກ່າວເຖິງບົດບາດຂອງທະນາຄານທີ່ສະຫນັບສະຫນູນການປູກພືດຊະນິດດຽວເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ນີ້.

ຄາດວ່າຈະບໍ່ມີຫມາກຜົນໃດໆ ອອກຈາກການປະຊຸມຕໍ່ລອງຢູ່ໂພສະນານ ກ່ຽວກັບການປ່ຽນແປງອາກາດໂລກ ບໍ່ວ່າຕໍ່ປະຊາຊົນ ແລະປ່າໄມ້. ອົງການສະຫະປະຊາຊາດ (UN) ກໍ່ບໍ່ສາມາດໄຈ້ແຍກຄວາມແຕກຕ່າງລະຫວ່າງການປູກໄມ້ເປັນສິນຄ້າ ໃນເນື້ອທີ່ຂະຫນາດໃຫຍ່ (ອຸດສາຫະກຳ) ແລະ ປ່າໄມ້ທຳມະຊາດ, ນັ້ນຫມາຍຄວາມວ່າໂຄງການສະຫນັບສະຫນູນການທຳລາຍປ່າໄມ້ ເພື່ອປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ຂອງທະນາຄານພັດທະນາອາຊີ ອາດນອນຢູ່ໃນໂຄງການຫລຸດຜ່ອນການປ່ອຍອາຍກາດເຮືອນແກ້ວ ແລະ ການເສື່ອມສະພາບຂອງປ່າ. ໂດຍ ແນ່ນອນວ່າ ທະນາຄານຈະບໍ່ປະທ້ວງອົງການສະຫະປະຊາຊາດຫາກເປັນແນວນັ້ນ.

***ໂດຍ ຄຣິສ ແລງ, (Chris Lang)*** **http://chrislang.org**

## ການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ຢູ່ແຕ່ລະປະເທດ ໃນພາກພື້ນແມ່ນ້ຳຂອງ

## ພະມ້າ: ການບັງຄັບໃຊ້ແຮງງານປູກຕົ້ນຫມາກເຍົາ ໂດຍກອງທັບ

ເດືອນທັນວາ ປີ 2005, ນາຍພົນອາວຸໂສມຽນມ້າ ທ່ານ ຕານສວ່າຍ ໄດ້ອອກຄຳສັ່ງປູກຕົ້ນ ຫມາກເຍົາ (jatropha curcas) ໃສ່ທົ່ວປະເທດ ເພື່ອຜະລິດເປັນເຊື້ອເພີງຊີວະພາບ (Biodiesel) ແຜນການພາຍໃນ 3 ປີ ຈະໃຊ້ເນື້ອທີ່ 8 ລ້ານເອເຄີ (3,2 ລ້ານເຮັກຕາ)ທົ່ວປະເທດ ຫຼື ເທົ່າກັບເນື້ອທີ່ປະເທດແບນຊິກທັງຫມົດ. ດິນທຸກເຂດແຂວງຂອງປະເທດ ບໍ່ວ່າຂະຫນາດນ້ອຍໃຫຍ່ ມີແຜນປູກຢ່າງຫນ້ອຍ 500,000 ເອເຄີ (200,000 ເຮັກຕາ) ໃນເຂດຢາງກູນ, 20 ສ່ວນຮ້ອຍຂອງທີ່ດິນປູກຝັງ ຈະຖືກນຳໃຊ້ປູກຕົ້ນຫມາກເຍົາ.

ຍ້ອນລາຄານ້ຳມັນທີ່ສູງຂຶ້ນໃນໄລຍະທີ່ຜ່ານມາ ຄວາມຫວັງທີ່ຫລຸດຜ່ອນລົງໃນການຮັກສາພະລັງງານສຳຮອງຈາກເຊື້ອເພີງຟອສຊິລ ແລະ ຄວາມເປັນຫ່ວງກັງວົນເລື່ອງອາຍແກັດເຮືອນກະຈົກ ທີ່ມີຜົນກະທົບຈາກການປ່ຽນແປງຂອງສະພາບອາກາດ ໄດ້ເຮັດໃຫ້ອຸດສາຫະກຳປູກພືດເຊື້ອເພີງຊີວະພາບ ເພື່ອທົດແທນພະລັງງານນ້ຳມັນດິບ ອຸບັດຂຶ້ນຢ່າງໄວວາ. ການຜະລິດເຊື້ອເພີງ ຊີວະພາບໃນໂລກ ຈາກພືດ ແລະ ສິ່ງເສດເຫຼືອ ໄດ້ເພີ່ມທະວີຂຶ້ນທົບຫນຶ່ງພາຍໃນ 5 ປີ ທີ່ຜ່ານມາ ແລະ ຄາດວ່າຈະສູງຂຶ້ນອີກທົບຫນຶ່ງພາຍໃນ 4 ປີ ຂ້າງຫນ້າ.

ໂຄງການປູກຕົ້ນຫມາກເຍົາແບບຊ້າຍຈັດຫາຂວາຫລາຍໂພດທີ່ປະເທດພະມ້ານີ້, ບໍ່ໄດ້ເອົາຫົວຊາຕໍ່ຄວາມຫ່ວງໃຍຂອງໂລກ ໃນເລື່ອງຜົນກະທົບທີ່ຈະເກີດຈາກການຜະລິດເຊື້ອເພີງຊີວະພາບ, ໂດຍສະເພາະ, ຜົນກະທົບທີ່ຈະໄດ້ຮັບຈາກການລົງມືດໍາເນີນການວ່ອງໄວເກີນໄປ ຫຼື ການປູກໃສ່ ເນື້ອທີ່ຂະຫນາດກ້ວາງໃຫຍ່ບາດດຽວ.

ຕົ້ນຫມາກເຍົາ (jatropha curcas) ແມ່ນພືດລົ້ມລຸກຂະນິດເປັນພຸ່ມ ຈັດຢູ່ໃນຕະກູນຢູໂຟເບຣຊີ (Euphorbiaceae) ຫມາກເຍົາ ມີຕົ້ນກໍາເນີດຈາກປະເທດເມັກຊິກໂກ ແລະ ທະວີບອາເມລິກາກາງ, ແຕ່ໄດ້ແຜ່ລາມໄປທົ່ວໂລກ ແລະ ມັກຖືກປູກເປັນຮົ້ວອ້ອມສວນປ້ອງກັນສັດ. ຕົ້ນຂອງມັນ ສາມາດຂຶ້ນສູງຮອດ 6 ແມັດ ກ້າອາກາດອໍານວຍ; ລໍາຕົ້ນຊື່ ມີກິ່ງງ່າ ແລະ ໃບຫນາແຫນ້ນ ຕົ້ນໄມ້ນີ້ເອີ້ນວ່າ "ຕົ້ນກາຊວນຊີວະພາບ" ຍ້ອນໄດ້ນໍ້າມັນ ຈາກແກ່ນຂອງມັນນັ້ນເອງ. ແກ່ນຫມາກເຍົາ ໃຫ້ປະລິມານໍ້າມັນຫຼາຍກວ່າພືດອື່ນໆ ກ້າທຽບໃສ່ເນື້ອທີ່ປູກຝັງຂະຫນາດດຽວກັນ ເວລາເຜົາໄຫມ້ ຜະລິດອາຍກາກໂບ ນິກປະມານ 1/5 ຂອງນໍ້າມັນເຊື້ອໄຟທໍາມະດາ.

ນັບແຕ່ປີ 2006 ມາ ທຸກພາກສ່ວນຂອງສັງຄົມພະມ້າ ກືກບັງຄັບທັນເທກອງທຶນ, ເນື້ອທີ່ປູກຝັງ ແລະ ແຮງງານລົງໃສ່ການປູກຕົ້ນໝາກເຍົາ. ພວກອາຈານ ຄູສອນ, ເດັກນ້ອຍ, ນັກຮຽນ, ຊາວໄຮ່ຊາວນາ, ພະຍາບານ ແລະພະນັກງານລັດກະກອນ ກືກສັ່ງໃຫ້ປູກຕົ້ນຫມາກ ເຍົາໃນໂມງລັດກະການ ຕາມກະຫນົນ, ໂຮງຮຽນ, ໂຮງຫມໍ, ຫ້ອງການ, ວັດວາອາຮາມ ແລະ ເນື້ອທີ່ໄຮ່ນາທີ່ເຄີຍປູກເຂົ້າ.

> "ພະນັກງານທຸກຄົນໃນໂຮງຫມໍຕ້ອງປູກຕົ້ນເຈັດຊຸ (ຕົ້ນຫມາກເຍົາ). ພວກເຮົາຕ້ອງໄປຫຼົກຫຍ້າຫມົດມື້. ແຕ່ລະຄົນຕ້ອງປູກ 500 ເບ້ຽ ແຕ່ໃຜສິປູກໄດ້ຫຼາຍປານນັ້ນ." (ພະຍາບານ ຈາກລັດກະຊິນ).

> "ພວກເຮົາທຸກຄົນ ແຕ່ປໍ 5 ຮອດມໍປາຍຕ້ອງຫວ່ານແກ່ນຫມາກເຍົາໃສ່ເດີ່ນໂຮງຮຽນ ແລະ ເດີ່ນເຕະບານ. ຄູຂອງພວກເຮົາບອກວ່າ ເປັນຄໍາສັ່ງຈາກອໍານວຍການໂຮງຮຽນ," (ນັກຮຽນ ຈາກລັດກະຊິນ).

> "ນ້ອງສາວຂ້ອຍເປັນຄູ. ລາວຕ້ອງໄດ້ປູກຕົ້ນຫມາກເຍົາ ແລະສົ່ງລາຍງານທຸກເດືອນ. ຕົວເລກສະກິຕິເປັນພາລະໃຫ້ຄູຫມົດທຸກຄົນໃນໂຮງຮຽນ. ເຈົ້າຫນ້າທີ່ກ່ຽວຂ້ອງບອກພວກຄູວ່າ ເຂົາຈະບໍ່ໄດ້ຮັບເງິນເດືອນ ກ້າການປູກຝັງບໍ່ໄດ້ຮັບຫມາກຜົນ," (ຊາວນາ ຈາກລັດກາເຣັນນີ)

ການລົງພື້ນຖານເກັບກໍາຂໍ້ມູນ 32 ຕົວເມືອງ ໃນແຕ່ລະລັດຂອງພະມ້າ ແລະ ການສໍາພາດ 131 ລາຍ, ລວມມີຊາວສວນ, ພະນັກງານລັດ ແລະ ນັກລົງທຶນ ສະແດງໃຫ້ຮູ້ວ່າ ມີປະຊາຊົນກືກປັບໄຫມ, ກືກຈັບ, ກືກຂົ່ມຂູ່ເອົາຊີວິດ ກ້າເຮັດບໍ່ໄດ້ຕາມເປົ້າຫມາຍ, ກ້າກ້າເບ້ຽເສຽຫາຍ ຫຼືວິພາກວິຈານໂຄງການ. ຜົນກະທົບນຶ່ງ ທີ່ເກີດຈາກຄວາມຕ້ອງການດິນເປັນ ຈໍານວນຫຼວງຫຼາຍ ແລະ ແຮງງານ ແມ່ນປາກົດການຂອງ "ອົບພະຍົບຫມາກເຍົາ" ເຊິ່ງມີເກືອບຮອດ 800 ລາຍ (ເດືອນເມສາ ປີ 2008) ໂດຍປະຊາຊົນຍົກຍ້າຍຈາກທາງໃຕ້ ຂອງລັດສານ ເຂົ້າໄປໃນປະເທດໄທ.

"ປີ 2004 ສະມາຊິກໃນບ້ານຂ້ອຍ ມີຫຼາຍກວ່າ 800 ຄົນ ຈາກ 240 ຄົວເຮືອນ. ດຽວນີ້ຫມົດບ້ານ ເຫຼືອ 130 ຄົນ ແລະ 40 ຄົວເຮືອນ. ນັບແຕ່ປີ 2004, 80 ສ່ວນຮ້ອຍຂອງປະຊາຊົນ ລັກຫນີເຂົ້າໄປປະທດໄທ ຍ້ອນ ລັດຖະບານຂອງ ສະພາເພື່ອສັນຕິພາບ ແລະ ການພັດທະນາ" (ນາຍບ້ານ ຈາກລັດສານ)

ຕົ້ນຫມາກເຍົາ ສາມາດປູກໄດ້ຢູ່ດິນຕາມຫົວໄຮ່ປາຍນາແຄມສວນໂດຍບໍ່ຈຳເປັນຍາດເອົາດິນປູກຝັງພືດອື່ນໆ. ແຕ່ວ່າ ການໂຄສະນາຂົນຂວາຍໃຫ້ປູກຕົ້ນຫມາກເຍົາຢູ່ປະເທດພະມ້າ ກາຍເປັນໄພຄຸກຄາມຄວາມຫມັ້ນຄົງດ້ານສະບຽງອາຫານຂອງຊາວສວນ. ບັນຫາທີນຶ່ງ ການປູກຕົ້ນຫມາກເຍົາ ໄດ້ຍາດແຫຍ້ ເອົາດິນທີ່ມີເຄື່ອງປູກຂອງຝັງຢູ່ແລ້ວ ແລະ ເດີ່ນບ້ານ ມັນກາຍເປັນການບຽດຊີງເອົາ ດິນປູກທັນຍາພືດ ທີ່ເປັນສະບຽງ ແລະ ແຫຼ່ງນ້ຳໄປ. ບັນຫາທີສອງ ການຍຶດເອົາດິນ ແລະ ນຳໃຊ້ດິນທີ່ຢູ່ໃກ້ໆເພື່ອປູກຕົ້ນຫມາກເຍົາ ບີບບັງຄັບໃຫ້ຊາວໄຮ່ຊາວສວນຈຳຕ້ອງຊອກຫາບ່ອນປູກພືດອາຫານທີ່ຢູ່ໄກອອກໄປ ອັນໄດ້ເຮັດໃຫ້ຜົນຜະລິດຫນ້ອຍລົງ ເກີດສະພາບສ່ຽງແບບໃຫມ່ຕໍ່ສະພາບແວດລ້ອມ. ບັນຫາທີສາມ ຍ້ອນຄວາມຮຽກຮ້ອງຕ້ອງການໃຫ້ຊາວໄຮ່ຊາວສວນຕ້ອງໄປ ດູແລເບິ່ງແຍງສວນຫມາກເຍົາ, ພວກເຂົາຈຶ່ງມີເວລາຫນ້ອຍລົງ ເພື່ອເບິ່ງແຍງສວນຄົວຂອງຕົນເອງ. ມີບາງລາຍງານເວົ້າວ່າ ພືດສະບຽງອາຫານບໍ່ສາມາດເຕີບໃຫຍ່ໄດ້ເຕັມຂີດ ເມື່ອປູກໃກ້ຕົ້ນຫມາກເຍົາ.

"ເມືອງເຮົາມີ 47 ບ້ານ, ທຸກຄົວເຮືອນໃນແຕ່ລະບ້ານ ຕ້ອງປູກຕົ້ນຫມາກເຍົາເຄິ່ງເອເຄີ ນັ້ນຫມາຍເຖິງການເສຽເນື້ອທີ່ດິນນາໄປສ່ວນນຶ່ງ." (ພະນັກງານລັດ ຈາກລັດກາເຮັນນີ)

ຊາວບ້ານທົ່ວປະເທດພະມ້າ ຖືກບັງຄັບໃຫ້ "ອາສາສະຫມັກອອກແຮງງານຮວມຫມູ່" ປູກຕົ້ນຫມາກເຍົາ ແລະ ເຮັດທາງຫຼວງໃນຮູບແບບສົ່ງຕົວແທນນຶ່ງແຮງງານຕໍ່ນຶ່ງຄອບຄົວ. ອາສາສະຫມັກຈຳເປັນ ເອົາຂອງກິນແລະເຄື່ອງມືໄປເອງ ຫຼື ຍອມຮັບໂທດເສຽຄ່າປັບໄຫມຖ້າປະຕິເສດບໍ່ໄປຮ່ວມ. ແຕ່ສ່ວນຫຼາຍແລ້ວ ຜູ້ທີ່ໄປຮ່ວມບໍ່ໄດ້ ກໍ່ຕ້ອງຈ້າງໃຫ້ຜູ້ອື່ນໄປແທນ.

"ຢູ່ບ້ານເຮົາແຕ່ລະຄອບຄົວຕ້ອງສົ່ງຜູ່ນຶ່ງໄປປູກຕົ້ນຫມາກເຍົາ. ພໍ່ບ້ານເຮົາບອກວ່າຖ້າຜູ່ໃດບໍ່ໄປ ຈະຖືກປັບໄຫມ. ຂ້ອຍຕ້ອງໄດ້ປະວຽກສວນຂອງຕົນເອງເພື່ອໄປປູກຕົ້ນຫມາກເຍົາ. ຜູ້ເຖົ້າບາງຄົນບໍ່ສາມາດໄປໄດ້ ກໍ່ຕ້ອງສົ່ງລູກຫຼານໄປແທນ. ພວກເຮົາຕ້ອງປູກຕົ້ນຫມາກເຍົາເປັນແຖວຊື່ ຕາມແລວໄມ້ທີ່ສຽບໄວ້. ກ່ອນປູກ ພວກເຮົາກໍຕ້ອງເສຽຫຍ້າຄາດໄຖແປງດິນໃຫ້ພ້ອມ" (ຊາວນາ ຈາກລັດມອນ)

"ຫົວຫນ້າຊຸມຊົນໂທຫາຂ້ອຍ ແລະ ບອກວ່າ ພວກເຂົາຈະປັບໄຫມຂ້ອຍ 3,000 ກຽດ (2,50 ໂດລາສະຫະລັດ) ຖ້າຂ້ອຍບໍ່ໄປຮ່ວມປູກ. ພວກເຮົາຖືກບັງຄັບໃຫ້ໄປປູກຕົ້ນໄມ້ຮ່ວມຫມູ່ຫມົດມື້ ແຕ່ຕ້ອງເອົາເຂົ້າໄປກິນເອງ." (ຊາວໄຮ່ ຈາກແຂວງກະສິນ)

(ເພື່ອປຽບທຽບມູນຄ່າ ເງິນປັບໄຫມ - ຄ່າແຮງງານຕໍ່ມື້ແມ່ນ 1,500 ກຽດ) ອາສາສະຫມັກຈຳເປັນ ບໍ່ພຽງແຕ່ຖືກບັງຄັບໃຫ້ປູກຕົ້ນຫມາກເຍົາເທົ່ານັ້ນ ແຕ່ຕ້ອງເຮັດວຽກກໍ່ສ້າງ ໂຮງງານກັ່ນນ້ຳມັນຈາກແກ່ນຫມາກເຍົາ. ວັນທີ 3 ເດືອນສິງຫາ ປີ 2007 ກອງທະຫານ(ຣາບ)524 ໄດ້ສັ່ງໃຫ້ຊາວບ້ານ ໄປຖາງແຄມທາງຫຼວງ ລະຫວ່າງ ບ້ານກາລີ

ແລະ ຕາກາວ ໃຈກາງລັດສານ ເພື່ອໃຊ້ເປັນສະຖານທີ່ປຸກສ້າງໂຮງງານກັ່ນນ້ຳມັນແກ່ນຫມາກເຍົາ. ເຖິງວ່າ ຊາວບ້ານໄດ້ອອກເງິນຊື້ນ້ຳມັນໃສ່ຈັກຕັດຫຍ້າເອງແລ້ວກໍ່ຕາມ ທາງທະຫານຍັງເກັບເງິນຊື້ນ້ຳມັນນຳຊາວບ້ານຕື່ມ ອີກ. ແຕ່ຊາວບ້ານກໍ່ຫາທຸກວິທີທາງເພື່ອຫຼີກລ້ຽງ ຫຼື ຂັດຄຳສັ່ງ. ເຈົ້າຫນ້າທີ່ລະດັບສູງໃນລັດກາເຣັນນິຍອມຮັບ ວ່າ ຫຼາຍຄົນປະຕິເສດການປູກຕົ້ນຫມາກເຍົາ. ບາງລາຍຊື້ແກ່ນມາຕາມຄຳສັ່ງ ແຕ່ພວກເຂົາບໍ່ນຳໄປປູກ, ບາງຄົນ ປູກຫນ້ອຍກວ່າກຳນົດ. ກະດານປ້າຍໂຄສະນາສົ່ງເສີມປູກຕົ້ນຫມາກເຍົາກໍຖືກມ້າງລົງ.

ຊາວບ້ານສວຍໂອກາດຫາຜົນປະໂຫຍດຈາກການບໍ່ເອົາໃຈໃສ່ຂອງເຈົ້າຫນ້າທີ່ໃນບາງເຂດ. ຊາວນາຈາກລັດມອນ ຜູ້ຫນຶ່ງອະທິບາຍວ່າ "ຍ້ອນດິນເຮົາບໍ່ຢູ່ໃກ້ທາງຫຼວງແດ່, ຊາວບ້ານຫຼາຍຄົນກໍ່ເລີຍບໍ່ໄດ້ປູກຕົ້ນຫມາກເຍົາ"

ກະສິກຳແມ່ນກະດູກສັນຫຼັງຂອງສັງຄົມ ແລະ ເສດຖະກິດຂອງປະເທດມຽນມ້າ. ນະໂຍບາຍທີ່ມີ ຜົນກະທົບຕໍ່ພາກ ສ່ວນກະສິກຳຈຶ່ງຕ້ອງໄດ້ພິຈາລະນາຢ່າງຮອບຄອບ ແລະ ລົງມືປະຕິບັດຢ່າງລະມັດລະວັງ. ຜູ້ນຳຂອງໂລກ ແລະ ນັກວິທະຍາສາດ ຕ່າງກໍເວົ້າເປັນສຽງດຽວກັນ ກ່ຽວກັບການຜະລິດເຊື້ອເພີງຊີວະພາບ. ແຕ່ວ່າ ລັດຖະບານ ຜະເດັດການມຽນມ້າ ບຸກຫນ້າສົ່ງເສີມການປູກຕົ້ນ ຫມາກເຍົາຂະຫນາດໃຫຍ່ບໍ່ຢຸດຢ່ອນຢ່າງເປັນປະຫວັດການ. ບໍ່ພຽງແຕ່ວ່າການປຸກລະດົມອົບ ຂວາຍໃຫ້ປູກຕົ້ນຫມາກເຍົາສະແດງທ່າທີວ່າຈະລົ້ມແຫຼວ ການປຸກລະດົມນີ້ຍັງ ກຳລັງຂົ່ມຂູ່ການດຳລົງຊີວິດ ຂອງຊາວນານຳອີກ.

ເພື່ອໃຫ້ຂະບວນການພັດທະນາອັນດີກວ່າເກົ່າເກີດເປັນຈິງໄດ້ ຢູ່ໃນປະເທດພະມ້າ ຈຳເປັນຕ້ອງຮັບປະກັນສິດທິໃນ ການບໍລິຫານຊັບພະຍາກອນທຳມະຊາດ ແລະ ສິດທິໃນການມີສ່ວນຮ່ວມຕັດສິນ ກ່ຽວກັບໂຄງການພັດທະນາແບບ ຍືນຍົງທັງຫຼາຍ. ນະໂຍບາຍການເຮັດກະສິກຳແບບຍືນຍົງ ຕ້ອງຮັບປະກັນກຳມະສິດທີ່ດິນ ແລະ ຄວາມປອດໄພ ຂອງຄົນ ແລະ ຕ້ອງໃຫ້ຊຸມຊົນບໍລິຫານ ຊັບພະຍາກອນທຳມະຊາດຂອງຕົນເອງ. ສິດທິແມ່ຍິງ ແລະ ປະຊາຊົນ ບັນດາເຜົ່າ ກໍ່ຕ້ອງໄດ້ຮັບການປະກັນ.

***ຄັດຈ້ອນ ແລະດັດແປງມາຈາກບົດລາຍງານ: (Biofuels by Decree Unmasking Burma's bio-energy fiasco"),*** ໂດຍສະພາເພື່ອການພັດທະນາຊຸມຊົນບັນດາເຜົ່າ (ECDF) ອອກເດືອນ ພຶດສະພາ ປີ 2008, (unitedcdfgmail.com)
ເຂົ້າໄປອ່ານບົດລາຍງານສະບັບເຕັມໄດ້ທີ່: <http/www.terraper.org/file_upload/BiofulbyDecree.pdf>

## ປະເທດກຳປູເຈຽ: ການປູກໄມ້ຊະນິດດຽວເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ນຳໄປສູ່ການຂັດແຍ່ງ ເລື່ອງທີ່ດິນ

ຖາມຄົນກຳປູເຈຽຜູ້ໃດຜູ້ຫນຶ່ງ ວ່າສິ່ງໃດເປັນພື້ນຖານຕົ້ນຕໍຂອງສັງຄົມ ແລະ ຊີວິດຊອງປະຊາຊົນໃນປະເທດ, ຄຳຕອບສ່ວນຫຼາຍຫນ້າຈະແມ່ນ "ດິນ" ດິນແມ່ນຊີວິດ. ນອກນັ້ນ ດິນຍັງມີຄຸນຄ່າ ເປັນເຄື່ອງຫມາຍຂອງຕົ້ນຕໍ ຮາກເຫງົ້າ, ຄວາມເປັນເຈົ້າຂອງແລະຄວາມຫມັ້ນຄົງ ແລະ ເປັນທີ່ຮັບຮູ້ກັນຢ່າງກວ້າງຂວາງວ່າ ດິນ ເປັນພື້ນຖານ ຂອງລະບົບການຈັດຕັ້ງທາງສັງຄົມໃນປະເທດ. ຄວາມຜູກພັນຕໍ່ດິນມູນມັງຂອງຄອບຄົວ ມີຄວາມຫມາຍສຳຄັນ

ເປັນພິເສດໃນສັງຄົມ ທີ່ໄດ້ພະເຊີນຄວາມທຸກຍາກລຳບາກມາຫຼາຍຮ້ອຍປີ, ຈາກຄວາມຂັດແຍ່ງພາຍໃນປະເທດ, ຊີວິດ ພາຍໃຕ້ພາວະສົງຄາມ, ການເຄື່ອນຍ້າຍກຸ່ມກຸານ, ລັດທິສ່ວນລວມນິຍົມ (Collectivism) ການ ຖືກຂົ່ມຂູ່ ຈາກກອງກຳລັງທະຫານ ແລະ ການເຂັ່ນຂ້າດັບສູນເຊື້ອແນວເຜົ່າພັນ ແຕ່ບາດແລ້ວໃນທີ່ສຸດ ກໍ່ໂດດເຂົ້າສູ່ຕະຫຼາດ ເສດຖະກິດອັນໄຮ້ກົດເກນແບບທຶນນິຍົມ.

ປະຊາກອນກວ່າ 80 ສ່ວນຮ້ອຍຂອງປະເທດກຳປູເຈຍອາໄສຢູ່ເຂດຊົນນະບົດຫ່າງໄກ. ດິນໃນປະເທດກຳປູເຈຍ ສາມາດເຮັດກະສິກຳໄດ້ທັງສອງແບບ ຄືທັງປູກຝັງກຸາວອນ (ນາ) ແລະ ເຮັດ ໄຮ່ (ຍ້າຍບ່ອນ), ບໍ່ວ່າ ການ ປູກຝັງຈະເປັນໄປໃນຮູບແບບໃດ ປະຊາຊົນໃນເຂດຊົນນະບົດ ກໍ່ຍັງຕ້ອງເພິ່ງພາອາໄສປ່າໄມ້ອ້ອມຮອບນັ້ນຫຼາຍຢູ່. ປ່າ ແລະຫ້ວຍນ້ຳລຳທານ ເປັນແຫຼ່ງອາຫານ ສ່ວນເຄື່ອງປ່າຂອງດົງອື່ນໆ ທີ່ບໍ່ແມ່ນໄມ້ ເປັນເຄື່ອງຊົມໃຊ້ໃນຄົວເຮືອນ ແລະ ສ້າງລາຍຮັບ. ຜູ້ທີ່ທຸກຍາກທີ່ສຸດໃນບ້ານສ່ວນຫຼາຍ ເປັນຜູ້ທີ່ບໍ່ມີທີ່ດິນປູກຝັງ, ໃນຄວາມເປັນຈິງ ການທີ່ບໍ່ມີທີ່ ດິນເພື່ອເຮັດນາກຸາວອນ ຫຼືການທີ່ບໍ່ມີຊັບສິນເພື່ອຊື້ດິນ ສາມາດໃຊ້ເປັນດັດຊະນີບອກລະດັບຄວາມທຸກຈົນໃນປະເທດ ກຳປູເຈຍໄດ້.

ໃນຊຸມປີ 60 ປະມານວ່າປະເທດກຳປູເຈຍມີເນື້ອທີ່ປ່າໄມ້ຢູ່ 73 ສ່ວນຮ້ອຍ ແລະ ປະຊາຊົນ ສາມາດ ຖາງປ່າ ເຮັດໄຮ່ເຮັດສວນໄດ້ຕາມຄວາມຕ້ອງການ ໂດຍບໍ່ມີຜົນກະທົບຢ່າງຫນັກຫນ່ວງ ຕໍ່ລະບົບນິເວດແຕ່ຢ່າງໃດ. ບໍ່ມີ ການຊື້ຂາຍດິນ ແລະ ບໍ່ມີຕະຫຼາດຄ້າດິນທີ່ເປັນໂຕເປັນຕົນ ຜູ້ທີ່ນຳໃຊ້ທີ່ດິນ ສາມາດມີສິດຄອບຄອງເປັນເຈົ້າຂອງ ດິນໄດ້. ມາຮອດຊຸມປີ 90 ກຳປູເຈຍ ມຸ່ງຫນ້າເຂົ້າສູ່ເສດຖະກິດການຕະຫຼາດເສລີ, ລະບອບກຳມະສິດຊັບສິນສ່ວນ ບຸກຄົນ ເລີ່ມກວມເອົາເນື້ອທີ່ດິນມາຄອບຄອງ, ຕະຫຼາດຄ້າທີ່ດິນ ແບບບໍ່ມີກົດລະບຽບແຕກຫນໍ່ຈໍ່ແຫນງ.

ການຂາດແຄນທີ່ດິນ ແລະ ຄວາມບໍ່ສະເຫມີພາບໃນການຄອບຄອງ ກຳລັງເພີ່ມທະວີຂຶ້ນຢ່າງໄວວາໃນກຳປູເຈຍ ທັງໃນຊົນນະບົດ ແລະ ອ້ອມແອ້ມຕົວເມືອງ. ຈຳນວນຄອບຄົວໄຮ້ທີ່ດິນທຳມາຫາກິນ ແມ່ນຄອບຄົວທີ່ມີແມ່ຍິງເປັນ ຫົວຫນ້າ ຫຼາຍກວ່າຄອບຄົວທີ່ມີຜູ້ຊາຍເປັນຫົວຫນ້າ. ຂະນະດຽວກັນ ຈຳນວນຜູ້ "ໃກ້ໆຈະບໍ່ມີດິນ" ເຊັ່ນຄອບຄົວທີ່ມີ ດິນຕອນນ້ອຍ ບໍ່ພໍລ້ຽງຊີບ ກໍ່ເລີ່ມມີຫຼາຍຂຶ້ນໆ. ດົນກວ່າທົດສະວັດຫນຶ່ງມາແລ້ວ ທີ່ດິນຈຳນວນຫຼາຍຕອນຂອງ ປະເທດ ໄດ້ຖືກຍົກໃຫ້ບໍລິສັດເອກະຊົນ ເພື່ອການສຳປະທານ - ມີຂໍ້ຕົກລົງລະຫວ່າງລັດຖະບານ ແລະ ພາກເອກະຊົນ ເພື່ອນຳໃຊ້ດິນສ້າງຜົນປະໂຫຍດທາງການຄ້າ, ສ່ວນຫຼາຍແມ່ນເພື່ອປູກໄມ້, ປູກພືດເສດຖະກິດ/ອຸດສາຫະກຳ, ການກະສິກຳ ແລະ ປ່າໄມ້, ການຂຸດບໍ່ແຮ່, ຂຸດຄົ້ນບໍ່ນ້ຳມັນ, ການປະມົງ ແລະ ການທ່ອງທ່ຽວ. ເຖິງວ່າການ ສຳປະທານດິນ ເພື່ອຜົນປະໂຫຍດທາງເສດຖະກິດ ໄດ້ຖືກຳເນີດມາແຕ່ລະຫວ່າງທ້າຍ ສັດຕະວັດທີ 19 ພາຍໃຕ້ການ ປົກຄອງແບບອານານິຄົມ ຂອງຝຣັ່ງພຸ້ນກໍຕາມ (ເພື່ອປູກຕົ້ນຢາງກະຕັງກະຕິ້ວ), ແຕ່ປະລິມານທີ່ດິນຫາກໍ່ສູງຂຶ້ນ ຢ່າງພົບພັບໃນຕົ້ນຊຸມປີ 1990 ມານີ້ເອງ, ເວລາລັດຖະບານລາດຊະອານາຈັກກຳປູເຈຍ ເລີ່ມອະນຸມັດໃຫ້ສຳປະທານ ເນື້ອທີ່ດິນ ແລະ ປ່າ ແກ່ບໍລິສັດເອກະຊົນນັ້ນ ມັນຄືວ່າເປັນການສະຫນັບສະຫນູນພາກເອກະຊົນ ໃຫ້ປະກອບສ່ວນສ້າງ ລາຍໄດ້ໃຫ້ລັດ ແລະ ຫລຸດຜ່ອນຄວາມທຸກຈົນໃນ ເຂດຊົນນະບົດ. ແຕ່ມາຮອດທ້າຍປີ 90 ມີການປະເມີນວ່າ ຊຸມຊົນ ຊາວກຳປູເຈຍຫຼາຍກວ່າຫນຶ່ງສ່ວນສາມ ຖືກຕັດຂາດຈາກດິນດອນຂອງຕົນ ຍ້ອນການໃຫ້ສຳປະທານທີ່ດິນ ແລະ ປ່າໄມ້.

ການໃຫ້ສຳປະທານທີ່ດິນເພື່ອເສດຖະກິດ ລວມມີການປູກພືດອຸດສາຫະກຳ ເຊັ່ນຕົ້ນຢາງ, ຕົ້ນແປກ, ຕົ້ນເກດສະໜາ, ຕົ້ນປາມນ້ຳມັນ, ຕົ້ນສັກ, ຕົ້ນພ້າວ, ຕົ້ນວິກ ແລະ ຜະລິດຕະ ພັນກະເສດອຸດສາຫະກຳຈາກພືດເສດຖະກິດອື່ນໆ. ການກະສິກຳດັ່ງກ່າວ ອຳນວຍໃຫ້ນັກລົງທຶນມີສິດສຳປະທານນຳໃຊ້ດິນໄດ້ເຖິງ 99 ປີ. ໃນບາງເຂດ ຊຸມຊົນຖືກໄລ່ອອກຈາກຕອນດິນ ເພື່ອເອົາບ່ອນໃຫ້ແກ່ການປູກໄມ້ເປັນສິນຄ້າໃນເນື້ອທີ່ອະໜາດໃຫຍ່ ແລະ ບັນດາບໍລິສັດກໍ່ໄດ້ໄຖກວາດປ່າດົງທີ່ຊຸມຊົນເຄີຍອາໄສເປັນບ່ອນຫາຢູ່ຫາກິນລ້ຽງຊີບ. ປະຊາຊົນທີ່ອາໄສຢູ່ໃກ້ໆເຂດ ກັບດິນສຳປະທານໃນແຂວງກະແຈະ, ສະຕຶງເຕຣັງ ແລະ ມົນທົນຄີຣີ (ແລະແຂວງ ອື່ນໆ) ລາຍງານວ່າ ພວກເຂົາຖືກຫ້າມນຳໃຊ້ປ່າ ແລະ ເຂດທີ່ເອີ້ນວ່າ "ດິນເປົ່າຫວ່າງ" ນັ້ນ ບັດນີ້ ກໍ່ຖືກຮອບເຂົ້າໃນເຂດດິນສຳປະທານ ເຖິງວ່າດິນແດນດັ່ງກ່າວເຄີຍມີການຖືຄອງກັນມາຫຼາຍເຊັ່ນຄົນແລ້ວກໍ່ຕາມ, ທີ່ດິນເຫຼົ່ານີ້ ເປັນທັງສະຖານທີ່ສັກສິດ ເປັນແຫຼ່ງສະບຽງອາຫານ ແລະ ແຫຼ່ງສ້າງລາຍຮັບສຳລັບພວກເຂົາ. ຊຸມຊົນທີ່ຢູ່ຕິດກັບເນື້ອທີ່ດິນສຳປະທານລາຍງານວ່າ ບໍລິສັດສຳປະທານໄດ້ຂະຫຍາຍເນື້ອທີ່ອອກຕື່ມ ລື່ນຂອບເຂດສັນຍາ ແລະ ລ່ວງລະເມີດເຂົ້າ ໄປໃນດິນຂອງຊາວບ້ານ ແລະ ຊຸມຊົນ.

ການປູກໄມ້ຊະນິດດຽວເປັນສິນຄ້າໃນເນື້ອທີ່ອະໜາດໃຫຍ່ ແມ່ນການປູກຕົ້ນໄມ້ ຫຼື ພືດຊະນິດ ດຽວ ທັງປູກຊ້ຳເກົ່າຫຼາຍເທື່ອ ແລ້ວເກັບກ່ຽວໃນວົງຈອນສັ້ນໆນັ້ນ ຕ້ອງໄດ້ໃຊ້ຝຸ່ນເຄມີຢ່າງຫຼວງຫຼາຍ, ຢາຂ້າແມງໄມ້ ແລະ ຢາຂ້າຫຍ້າຈະຊຶມລົງໃຕ້ດິນ ແລະ ຮົ່ວໄຫຼຕໍ່ໃສ່ແຫຼ່ງນ້ຳໃຕ້ດິນ ເຮັດໃຫ້ສະພາບດິນອ່ອນອ້າງເສື່ອມລົງ, ດິນກາຍເປັນສິ່ງເບື່ອເປັນພິດໄພ ແລະນຳເອົາເຊື້ອໂລກ ພະຍາດມາສູ່ຊາວບ້ານ.

ການປູກຕົ້ນວິກເຮັດໃຫ້ດິນແຫ້ງແຂງ, ຂາດຄວາມຊຸ່ມ ແລະ ສານອາຫານສິ່ງຜົນກະທົບໃສ່ລະບົບນ້ຳໃຕ້ດິນ ແລະ ແມ່ນ້ຳລຳເຊໃຫ້ເຫືອດແຫ້ງລົງ. ຕົວຢ່າງ ທະເລສາບອະເທມນ (ຕົງເລສາບ) ທາງພາກ ຕາເວັນຕົກສຽງເໜືອຂອງປະເທດກຳປູເຈຽ ເປັນແຫຼ່ງນ້ຳຈືດທີ່ສຳຄັນທີ່ສຸດຕໍ່ລະບົບນິເວດຂອງປະເທດ ແລະ ເປັນແຫຼ່ງອາຫານຂອງປະຊາຊົນເປັນລ້ານໆຄົນ, ໜອງໃຫຍ່ແຫ່ງນີ້ ກຳລັງຖືກຂົ່ມຂູ່ພິດໄພຈາກໂຮງງານຜະລິດເຍື່ອເຈ້ຍ ທີ່ປ່ອຍສານພິດ ແລະ ເຄມີໄຫຼລົງ ສູ່ບຶງໜອງ ທີ່ໄຫຼເຊື່ອມຕໍ່ກັບໜອງຫຼວງຕົງເລສາບ. ຢູ່ແຂວງເກາະກົງ ບ່ອນທີ່ມີປ່າໄມ້ຊະນິດປ່ຽນໃບ ຖືກທຳລາຍໄປຫຼາຍບ່ອນ ເມື່ອປູກພືດປະເພດດຽວໃສ່ ເຊັ່ນປູກແຕ່ຕົ້ນກະຖິນນະລົງ ຫຼືຕົ້ນເກດສະໜາ ທີ່ມ້າງເພບ່ອນວາງໄຂ່ຂອງຝູງປາ ເພາະດິນໃນເຂດນັ້ນເປັນ "ປ່າທາມ" ມີນ້ຳກ້ອມໃນລະດູມໍລະສຸມ.

ນອກຈາກເສດຖະກິດ ແລະ ຊີວະນາໆພັນຖືກທຳລາຍແລ້ວ ສິດທິມະນຸດກໍ່ຖືກຂົ່ມຂູ່ເອົາປຽບ. ສະມາຊິກຊາວບ້ານຫຼາຍຄົນ ຖືກຂົ່ມເຫງຈາກກຳລັງຮັກສາຄວາມປອດໄພ ທີ່ເປັນລູກຈ້າງຂອງພວກເຈົ້າຂອງສຳປະທານດິນ ຖ້າຊາວບ້ານລ່ວງເຂົ້າໄປໃນດິນ ຫຼື ປະທ້ວງການລ່ວງລ້ຳບຽດຍຶດ ເອົາດິນຂອງພວກນາຍທຶນ. ໃນຫຼາຍເຂດ ມີການໃຊ້ກຳລັງໂດຍເຈົ້າໜ້າທີ່ຕິດອາວຸດ ເຮັດໃຫ້ເກີດການໃຊ້ຄວາມຮຸນແຮງ, ມີຊາວບ້ານບາດເຈັບ ແລະ ເສຍຊີວິດ. ຕົວຢ່າງ ຢູ່ເຂດພູສາດ, ສະຕຶງເຕຣັງ, ກຳປົງສະປື, ມົນທົນຄີຣີ ແລະ ເກາະກົງ ຊຸມຊົນໄດ້ໂຮມກັນປະທ້ວງ ຍ້ອນພວກເຂົາເສຍທີ່ດິນ ແລະ ແຫຼ່ງຊັບພະຍາກອນທຳມະຊາດ ຈຶ່ງປະທ້ວງຕໍ່ການກະທຳຂອງພວກສຳປະທານດິນ. ຊາວບ້ານໄດ້ສະເໜີຂໍຄວາມຊ່ອຍເຫຼືອຈາກພະນັກງານເຂດ, ແຂວງ ແລະ ພະນັກ ງານຈາກສູນກາງແຕ່ຍັງບໍ່ທັນໄດ້ຜົນຈັກແຫ່ງ. ໃນທາງກົງກັນຂ້າມ ພະນັກງານຫຼາຍຄົນໄດ້ສະແດງທ່າທີເຂົ້າຂ້າງພວກບໍລິສັດ ແລະ ພະຍາຍາມຂົ່ມຂູ່ຊາວບ້ານໃຫ້ຍຸຕິການປະທ້ວງ.

ເຂດທຸກຍາກຫ່າງໄກສອກຫຼີກໃນປະເທດກຳປູເຈຽ ໄດ້ຮັບຜົນປະໂຫຍດໜ້ອຍທີ່ສຸດຈາກການ ຂະຫຍາຍໂຕທາງ

ເສດຖະກິດແຫ່ງຊາດ. ບໍ່ພຽງແຕ່ຄວາມທຸກຈົນບໍ່ໄດ້ຫລຸດຜ່ອນລົງ ແລ້ວໃນທາງກົງກັນຂ້າມ ປະຊາຊົນທີ່ທຸກຍາກ ຊໍ້າມີຫຼາຍຂຶ້ນ ເສດຖະກິດອ່ອນໄຫວຕົກຕໍ່າ. ການທໍາລາຍ ແຫຼ່ງຊີວະນາໆພັນ ແລະ ການສູນເສຽຜົນປະໂຫຍດຈາກ ປ່າ ຈາກນໍ້າ (ປາ ແລະ ສັດນໍ້າອື່ນໆ) ເຮັດໃຫ້ປະຊາຊົນຕົກຢູ່ໃນສະພາບສ່ຽງຕໍ່ການຂາດເຂີນອາຫານ. ຂະບວນ ອົບພະຍົບຫນີຈາກຄວາມທຸກຍາກຈາກເຂດຊົນນະບົດເຂົ້າສູ່ໂຕເມືອງ ໂດຍສະເພາະ ເຂົ້າສູ່ໂຕ ເມືອງພະນົມເປັນ ກໍາລັງເພີ່ມຂຶ້ນໆ. ແຕ່ຊາວອົບພະຍົບໃຫມ່ທີ່ເຂົ້າມາໃນເມືອງນີ້ ກໍ່ບໍ່ສາມາດຫາວຽກເຮັດ ຫຼືຫາບ່ອນຢູ່ໄດ້ງ່າຍໆ; ຫຼາຍຊີວິດອາໄສຢູ່ແຄມກະຫນົນ ຫຼືຕັ້ງກຸ່ມກຸານຢູ່ແບບຜິດກົດລະບຽບ ແລະ ສືບຕໍ່ສ່ຽງໄພຕໍ່ການກຶກໄລ່ ແລະ ຍົກຍ້າຍໄປບ່ອນອື່ນເລື້ອຍໆ.

ໃນສາຍຕາໂລກທີ່ພັດທະນາແລ້ວ ກໍາປູເຈຽກືວ່າເປັນປະເທດທີ່ກໍາລັງຟື້ນຟູ ແລະ ຢູ່ໃນຍຸກສັນຕິພາບ, ມີຄວາມຫມັ້ນ ຄົງ ແລະ ກໍາລັງພັດທະນາທາງເສດຖະກິດ ແລະ ສັງຄົມ ອັນມີຄວາມ ຫມາຍຢ່າງກວ້າງໆ ວ່າແມ່ນການເລີ່ມຕົ້ນ ພັດທະນາ ພາຍຫຼັງຈາກສົງຄາມຍຸດຕິລົງ ໂດຍມີການຮັບຮອງເອົານະໂຍບາຍເສດຖະກິດເປັນຊຸດ ອັນມີເປົ້າຫມາຍ ອໍານວຍຄວາມສະດວກໃຫ້ແກ່ຕະຫຼາດທຶນນິຍົມ. ແຕ່ບັນຫາເລື່ອງທີ່ດິນ ແລະ ການຕັດຂາດຊຸມຊົນ ອອກຈາກດິນ ດອນ ກັບແຫຼ່ງຊັບພະຍາກອນຂອງເຂົາເຈົ້າ ບໍ່ອາດໃຊ້ເປັນດັດຊະນີ ບອກວ່າປະເທດນີ້ມີສັນຕິພາບ, ຄວາມຫມັ້ນຄົງ ຫຼື ຊີວິດການເປັນຢູ່ທີ່ດີໄດ້.

***ຄັດຈ້ອນມາຈາກ:* Land and Natural Resource Alienation in Cambodia, *ໂດຍ ຊານມາລີ ກຸຕານ*** *(Shalmali Guttal), Focus on the Global South, December, 2006*
ເຂົ້າໄປອ່ານຂໍ້ມູນເຕັມໄດ້ທີ່: <htpp://focusweb.org/land-and-natural-resource-alienation-cambodia.html>

## ຄວາມພະຍາຍາມວາງນະໂຍບາຍ ການເຮັດກະເສດອຸດສາຫະກໍາ ໃນປະເທດກໍາປູເຈຽ.

ນັບແຕ່ປີ 2002 ເປັນຕົ້ນມາ ການໃຫ້ສໍາປະທານ ການຈັດການປ່າໄມ້ແບບເກົ່າຖືກຍົກເລີກ, ລັດຖະບານກໍາປູເຈຽ ຫັນມາອະນຸມັດໃຫ້ສໍາປະທານທີ່ດິນເພື່ອການກະເສດອຸດສາຫະກໍາແກ່ບໍລິສັດເອກະຊົນ, ໂດຍສະເພາະແລ້ວ ແມ່ນ ເພື່ອຂະຫຍາຍການປູກພືດອຸດສາຫະກໍາເຊັ່ນ: ເຂົ້າ, ມັນຕົ້ນ, ຕົ້ນຢາງ, ກະຖິນນະລົງ ແລະ ພືດເຊື້ອເພີງ (agro fuel). ການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ບໍ່ພຽງແຕ່ເພື່ອສ້າງລາຍຮັບໃຫ້ແກ່ລັດ ແລະ ພັດທະນາ ກະສິກໍາຢ່າງເລັ່ງລັດ ແຕ່ຍັງເພື່ອຫລຸດຜ່ອນຄວາມທຸກຈົນ ດ້ວຍການສົ່ງເສີມໂອກາດການມີວຽກເຮັດໃນທ້ອງຖິ່ນນໍາ ອີກ. ແຕ່ວ່ານັບແຕ່ເລີ່ມຕົ້ນມາ ການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ກໍ່ບໍ່ສາມາດດໍາເນີນການ ແລະ ບັນລຸເປົ້າຫມາຍທີ່ວາງໄວ້ໄດ້ ແລະ ຜົນທີ່ໄດ້ຮັບແມ່ນລັດຖະບານ ຖືກບີບໃຫ້ອອກລະບຽບການ ແລະ ຕິດຕາມ ການປະຕິບັດງານຂອງຕົນໃຫ້ດີຂຶ້ນກວ່າເກົ່າ.

ໂຄງຮ່າງກົດຫມາຍຄຸ້ມຄອງ ການສໍາປະທານດິນເພື່ອເສດຖະກິດ (Economic Land Concessions [ELCs]) ໄດ້ອີງໃສ່ກົດຫມາຍທີ່ດິນປີ 2001 ແລະ ດໍາລັດຍ່ອຍ (sub-decree) ຂອງປີ 2005. ເຊິ່ງໂຮມມີເງື່ອນ

ໄຂຕ່າງໆ ເຊັ່ນຕ້ອງມີສັນຍາ ແລະ ຕ້ອງຕິດຕາມ ການເຮັດວຽກຢ່າງໃກ້ຊິດ, ຕ້ອງຄຸ້ມຄອງສິດທິຂອງປະຊາຊົນໃນຊຸມຊົນທີ່ຢູ່ໃກ້ກັບເຂດປູກຝັງ ແລະ ປ້ອງກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ. ໃນກົດຫມາຍ ມີມາດຕະການລົງໂທດບໍລິສັດ ທີ່ບໍ່ປະຕິບັດຕາມເງື່ອນໄຂ. ແຕ່ວ່າມີເນື້ອທີ່ດິນຈຳນວນຫຼາຍ ໄດ້ຮັບສຳປະທານໂດຍລະເມີດກົດລະບຽບທີ່ກຳນົດໄວ້, ສ້າງຜົນເສຽຫາຍຢ່າງຫນັກຫນ່ວງແກ່ຊຸມຊົນ ແລະ ຍັງບໍ່ສາມາດເຮັດຕາມສັນຍາ ເພື່ອຜົນປະໂຫຍດທາງເສດຖະກິດໄດ້.

ເຫດຜົນນຶ່ງຂອງບັນຫາ ແມ່ນການບໍ່ມີຄວາມປອດໃສຈະແຈ້ງ ໃນລະຫວ່າງການເຮັດສັນຍາ ແລະ ບໍ່ສາມາດກວດກາໄດ້ ໃນຂະນະທີ່ບັນດາບໍລິສັດເລີ່ມຕົ້ນປະຕິບັດງານ. ດ້ວຍຄວາມກົດດັນຂອງຜູ້ໃຫ້ທຶນ ແລະ ພາກສ່ວນພົນລະເມືອງ, ໃນປີ 2007 ລັດຖະບານກຳປູເຈຽ ຕົກລົງສ້າງຕັ້ງ ແລະ ປ້ອນຂໍ້ມູນ ທັນເຫດການລົງປື້ມທະບຽນເພື່ອສະແດງໃຫ້ແກ່ສາທາລະນະຊົນທົ່ວປະເທດ. ປື້ມທະບຽນນີ້ ມີໄວ້ເພື່ອໃຫ້ຂໍ້ມູນກ່ຽວກັບການເປັນເຈົ້າຂອງ, ສະຖານທີ່, ສະພາບ ແລະ ການປະຕິບັດງານຂອງແຕ່ລະເຈົ້າສຳປະທານດິນ. ຂໍ້ມູນດັ່ງກ່າວໄດ້ຮັບການຄຸ້ມຄອງ ແລະ ສະຫນອງຂໍ້ມູນ ໂດຍກະຊວງກະສິກຳປ່າໄມ້ ແລະ ການປະມົງ. ນອກນັ້ນ ລັດຖະບານຍັງສັນຍາວ່າ ຈະພິຈາລະນາທວງຄືນເນື້ອທີ່ດິນ ສຳປະທານທີ່ລື່ນກຳນົດ 10,000 ເຮັກຕານັ້ນນຳ ແລະ ຈະໃຫ້ ຄວາມສຳຄັນກັບການເຮັດໃຫ້ແນ່ໃຈ ວ່າບໍລິສັດຕ່າງໆຈະປະຕິບັດຕາມກົດຫມາຍກຳປູເຈຽໃຫ້ຫລາຍຂຶ້ນ.

ແຕ່ວ່າ ຕາມການທົບທວນກວດກາຄືນຂອງອົງການພັດທະນາທີ່ບໍ່ແມ່ນຂອງລັດ. ທີ່ປະຕິບັດວຽກງານກ່ຽວກັບການຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ພົບວ່າ ມາຮອດເດືອນພະຈິກ ປີ 2008 ການປັບປຸງເພື່ອຄວາມປອດໃສຈະແຈ້ງ ແລະ ກວດກາໄດ້ ຕໍ່ບັນຫາດັ່ງກ່າວ ເປັນທີ່ຫນ້າຜິດຫວັງ[2]. ປື້ມທະບຽນບໍ່ຖືກປ້ອນຂໍ້ມູນໃຫມ່, ໂດຍສະເພາະຂໍ້ມູນກ່ຽວກັບທີ່ດິນສຳປະທານໃນເຂດແຂວງ. ມີຂໍ້ຂັດແຍ່ງລະຫວ່າງຂໍ້ມູນທີ່ມີລະຫວ່າງພາກສ່ວນຕ່າງໆໃນຫນ້າເວັບໄຊ ແລະ ຂໍ້ມູນຂອງຫນ່ວຍງານຕ່າງໆ ຂອງລັດຖະບານ. ນອກນັ້ນ ຄວາມເຂົ້າໃຈຂອງລັດຖະບານຕໍ່ແນວຄິດຫຼັກຂອງ "ປື້ມທະບຽນເພື່ອສາທາລະນະຊົນ" ທີ່ຕ້ອງເປັນພາສາອັງກິດໃນຮູບແບບຂອງອິນເຕີເນັດ ກໍ່ບໍ່ສາມາດເຂົ້າເຖິງຊຸມຊົນຜູ້ໄດ້ຮັບຜົນກະທົບຈາກການປູກຝັງພືດເສດຖະກິດໄດ້. ປື້ມທະບຽນ ເພື່ອ "ສາທາລະນະຊົນ" ຄວນຕ້ອງເປັນພາສາຂະແມ ໃນລະດັບທ້ອງຖິ່ນ ບໍ່ແມ່ນໃນຮູບແບບເປັນສື່ອີເລັກໂຕຣນິກ.

ຄວາມຄືບຫນ້າ ເພື່ອປັບປຸງການເຮັດວຽກໃນຂັ້ນພື້ນຖານຍິ່ງບໍ່ເປັນທີ່ຫນ້າພໍໃຈ ອີງຕາມຂໍ້ມູນຂອງອົງການພັດທະນາທີ່ບໍ່ແມ່ນຂອງລັດ. ມີພຽງສອງໃນຈຳນວນທັງຫມົດ 9 ລາຍ ມີຊື່ໃນປື້ມທະບຽນທີ່ມີເນື້ອທີ່ສຳປະທານກາຍອັດຕາກຳນົດ ທີ່ຍອມຫລຸດຂະຫນາດເນື້ອທີ່ລົງ. ອີກສາມບໍລິສັດ ປະຕິເສດການທວນຄືນເຈລະຈາຂໍ້ສັນຍາ. ໃນເວລາດຽວກັນ ລັດຖະບານກໍຍັງສືບຕໍ່ໃຫ້ສຳປະທານທີ່ດິນ ທີ່ກາຍອັດຕາກຳນົດ. ເດືອນເມສາ ປີ 2008 ບໍລິສັດ Kenertec ຈາກເກົາຫຼີໃຕ້ ໄດ້ຮັບອະນຸມັດເນື້ອທີ່ສຳປະທານເທົ່າກັບ 6 ເທົ່າຂອງອັດຕາກຳນົດ ເພື່ອປູກພືດເຊື້ອເພີງ (agro-fuel). ເດືອນກັນຍາ ປີ 2008 ເຈົ້າຄອງນະຄອນແຂວງສະຕຶງເຕຣັງໃຫ້ການສະຫນັບສະຫນູນຢ່າງເປັນທາງການ ຕໍ່ບໍລິສັດກຣີນຊີ ອິນດັສຕຣີ ຈຳກັດ (Greensea Industry Company Ltd) ເພື່ອຂະຫຍາຍເນື້ອທີ່ປູກພືດເຊື້ອເພີງ ເຊິ່ງມີເນື້ອທີ່ຫຼາຍກວ່າອັດຕາກຳນົດໄວ້ຕາມກົດຫມາຍ 10 ເທົ່າ.

ອົງການພັດທະນາທີ່ບໍ່ແມ່ນລັດຖະບານຕ່າງໆ ທີ່ເຮັດວຽກກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຍັງສືບຕໍ່ໄດ້ຮັບຄຳຮ້ອງທຸກຂອງຊາວບ້ານ ກ່ຽວກັບບໍລິສັດທີ່ໄດ້ຮັບສຳປະທານທີ່ດິນປູກຝັງ ທີ່ບໍ່ ປະຕິບັດຕາມກົດຫມາຍ ແລະ ຫນ່ວຍງານລັດທີ່ບໍ່ສາມາດຢຸດຢັ້ງພວກທີ່ເຮັດຜິດກົດຫມາຍ. ສັນຍາດິນຖືກເຮັດອອກມາກ່ອນທີ່ດິນຈະຖືກຂຶ້ນທະບຽນຕາມກົດຫມາຍ ເຮັດໃຫ້ດິນສຳປະທານຈຳນວນຫຼາຍ ກວມເອົາເນື້ອທີ່ດິນທີ່ເປັນຂອງປະຊາຊົນຖືກຢ່າງຕ້ອງຕາມກົດຫມາຍ. ອົງການຕ່າງໆຍັງບໍ່ໄດ້ຮັບຂໍ້ມູນໃດໆ ໃນກໍລະນີທີ່ວ່າ ບໍລິສັດສຳປະທານ ໄດ້ເປີກສາຫາລືກັບຊຸມຊົນ ຫຼື ໄດ້ເຮັດສຳຫຼວດສະພາບແວດລ້ອມ ແລະ ປະເມີນຜົນກະທົບຕໍ່ສັງຄົມ ກ່ອນ ໄດ້ຮັບສຳປະທານທີ່ດິນ.

ບໍລິສັດທີ່ໄດ້ສຳປະທານທີ່ດິນເພື່ອທຸລະກິດ (ELCs) ຫຼາຍແຫ່ງ ໄດ້ລ່ວງລະເມີດຂໍ້ບັງຄັບໃນໂຄງ ຮ່າງກົດຫມາຍຂອງກຳປູເຈຍ ເຊິ່ງຮັບປະກັນການນຳໃຊ້ເນື້ອທີ່ປ່າ ແລະ ປົກປ້ອງທີ່ດິນຂອງຊຸມຊົນ ຄົນທ້ອງຖິ່ນ ຕາມຮີດຄອງປະເພນີ. ບໍລິສັດນຶ່ງ ທີ່ກຳລັງຍື່ນຂໍອະນຸຍາດສຳປະທານດິນ 10,000 ເຮັກຕາ ເພື່ອປູກຕົ້ນຢາງກະຕັງກະຕິ້ວ ໃນແຂວງມົນທົນຄີຣີ ຖືກປະຊາຊົນອ້າງວ່າ ບັງຄັບໃຫ້ປະຊາຊົນທ້ອງຖິ່ນມອບທີ່ດິນໃຫ້ບໍລິສັດ "ເຊົ່າ" ໃນລາຄາລະຫວ່າງ 25 ຫາ 250 ໂດລາສະຫະລັດ ໃນໄລຍະຍາວນານເຖິງ 99 ປີ[3]. ປະຊາຊົນລາງຄົນລາຍງານວ່າ ຄວາມຈິງພວກເຂົາ ແມ່ນຖືກບັງຄັບໃຫ້ຂາຍດິນຂອງຕົນໃຫ້ກັບບໍລິສັດ ໃນລາຄາທີ່ກ່າວມານັ້ນ. ການປະຕິບັດການ ແມ່ນເກີດຂຶ້ນໂດຍຕຳຫຼວດບ້ານເປັນຄົນບອກປະຊາຊົນວ່າ ຖ້າບໍ່ປະຕິບັດຕາມຂໍ້ສະເຫນີ ບໍລິ ສັດສຳປະທານ ກໍຈະເອົາດິນຄືເກົ່າ. ມີຫຼາຍກໍລະນີຄ້າຍຄຽງກັນ, ການທີ່ປະຊາຊົນຖືກຂົ່ມຂູ່ເປັນປາກົດການທີ່ເຫັນຢູ່ທົ່ວປະເທດ.

ໃນລະຫວ່າງການກະກຽມກອງປະຊຸມປະຈຳປີ ລະຫວ່າງລັດຖະບານກຳປູເຈຍ ແລະປະເທດຜູ້ໃຫ້ ທຶນສະຫນັບສະຫນູນນັ້ນ ອົງການພັດທະນາທີ່ບໍ່ແມ່ນລັດຖະບານ ໄດ້ປະກອບເອກະສານສະເຫນີ ແນະໃຫ້ມີການປ່ຽນແປງພາຍໃນ 12 ເດືອນ ເຊິ່ງຈະຊ່ວຍໃຫ້ມີຄວາມປອດໃສຈະແຈ້ງ ແລະ ກວດກາໄດ້ຢູ່ໃນລະບົບຄຸ້ມຄອງການເຮັດກະເສດອຸດສາຫະກຳໃນເນື້ອທີ່ຂະຫນາດໃຫຍ່ ເນື້ອໃນເອກະສານມີດັ່ງນີ້ :

- ປັບປຸງຂໍ້ມູນໃນປຶ້ມທະບຽນຢ່າງເປັນລະບົບທຸກສາມເດືອນ ແລະ ໃຫ້ຂໍ້ມູນຂ່າວສານເປັນພາສາຂະແມ ແກ່ຊາວບ້ານ ຜູ້ໄດ້ຮັບຜົນກະທົບຈາກການໃຫ້ສຳປະທານດິນ.

- ຍົກເລີກການໃຫ້ສຳປະທານດິນ ທີ່ບໍ່ໄດ້ມາດຖານຕາມດຳລັດຍ່ອຍ (sub-decree) ເຊິ່ງມີຂໍ້ຄວາມວ່າ: ກ່ອນໄດ້ຮັບອະນຸຍາດສຳປະທານດິນ, ດິນຕອນດັ່ງກ່າວຕ້ອງໄດ້ຂຶ້ນໃບຕາດິນ, ຕ້ອງມີ ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຕໍ່ສັງຄົມ ແລະ ຕ້ອງມີການປຶກສາຫາລືກັບຊຸມຊົນ ແລະ ມີການຕົກລົງກ່ຽວກັບການອົບພະຍົກຂອງຊາວບ້ານໃຫ້ແລ້ວກ່ອນ.

- ຊີ້ແຈງເຫດຜົນ ອີງຕາມກົດຫມາຍ ວ່າເປັນຫຍັງ ສາມບໍລິສັດທີ່ມີເນື້ອທີ່ສຳປະທານລື່ນອັດຕາກຳນົດ ຈຶ່ງສາມາດສືບຕໍ່ວຽກງານໄດ້ ແລະ ສະແດງຂໍ້ມູນທີ່ກ່ຽວຂ້ອງກັບຂະບວນການພິຈາລະນາອອກມາ, ໂດຍສະເພາະຜົນໄດ້ຮັບ ຈາກການເປີກສາຫາລືສາຫາລະນະກັບຊາວບ້ານຜູ້ໄດ້ຮັບຜົນກະທົບ.ຕ້ອງຮັບປະກັນວ່າບັນດາບໍລິສັດສຳປະທານເຫຼົ່ານີ້ ຈະບໍ່ສືບຕໍ່ວຽກໄດ້ ຈົນກວ່າຈະມີການໂອ້ລົມກ່ຽວກັບບັນຫາໃຫ້ແລ້ວກ່ອນ.

ໃນອະດີດ ພາກປະຊາສັງຄົມໃນກໍາປູເຈຽ ປະສົບຜົນສໍາເລັດໃນການສວຍໂອກາດໃຊ້ກອງປະຊຸມລະຫວ່າງລັດຖະບານ ແລະ ຜູ້ໃຫ້ທຶນ ເປັນບ່ອນສ້າງຜົນສະເທືອນຕໍ່ນະໂຍບາຍ. ແຕ່ວ່າການປ່ຽນແປງ ຄວາມສໍາພັນລະຫວ່າງລັດຖະບານ ແລະ ຜູ້ໃຫ້ທຶນ ເປັນຜົນມາຈາກຂໍ້ຕົກລົງຊ່ວຍເຫຼືອໃຫມ່ ແບບສອງຝ່າຍລະຫວ່າງປະເທດກໍາປູເຈຽ ແລະ ປະເທດໃກ້ຄຽງໃນພາກພື້ນ ກໍາລັງທ້າທາຍສະພາບການອັນນີ້. ບັນຫາມີຢູ່ວ່າ ອີງການພັດທະນາທີ່ບໍ່ແມ່ນຂອງລັດທີ່ກໍາລັງຫ່ວງໃຍອະນາຄົດການຄຸ້ມຄອງທີ່ດິນ ແລະຊັບພະຍາກອນທໍາມະຊາດ ຈະເຂົ້າໄປກ່ຽວຂ້ອງກັບ "ຜູ່ໃຫ້ທຶນຫນ້າໃຫມ່" ແລະ ຮັກສາສາຍພົວພັນກັບຜູ່ໃຫ້ທຶນຄົນເກົ່າເດີມ ແລະ ໃນເວລາດຽວກັນກໍ່ສ້າງໂອ ກາດໃຫ້ມີການໂອ້ລົມກັບພວກສໍາປະທານດິນໄດ້ຢ່າງໃດ.

***ໂດຍ ເມແກນ ແມັກອິນສ, ທີ່ປຶກສາ ພາກສ່ວນທີ່ດິນ ແລະ ປ່າໄມ້, The NGO Forum on Cambodia***

*Megan MacInnes, email: megan@ngoforum.org.kh*

[1] NGO Forum (2005) Fastwood Concessions: Economic Concessions and Local Livelihoods in Cambodia: field investigations in Koh Kong, Kampong Speu, Pursat, Mondulkiri, Prey Veng and Svay Rieng provinces. Environmental Forum Core Team, Phnom Penh, August 2005; UN-OHCHR (2007) Economic Land Concessions in Cambodia: a human rights perspective. UN Cambodia Office of the High Commissioner for Human Rights; NGO Forum (2007) NGO Position Papers on Cambodia's Development in 2006: monitoring of Joint Monitoring Indicators and Implementation of National Strategic Development Plan 2006-2010. Phnom Penh, June 2007.

[2] NGO Forum (2008) NGO Position Papers on Cambodia's Development in 2007-08: monitoring of 2007 CDCF Joint Monitoring Indicators and the National Strategic Development Plan 2006-2010. Phnom Penh, November 2008.

[3] Diokno, M (2008) The Importance of Community: issues and Perceptions of Land ownership and Future Options in 5 Communes in Mondulkiri Province, Cambodia. NTFP-Exchange Programme and NGO Forum on Cambodia, Phnom Penh, October 2008.

## ປະເທດຈີນ: ວົງຈອນອຸບາດຂອງການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່, ພືດ ດັດແປງພັນທຸກໍາ, ໂຮງງານເຮັດເຍື່ອເຈັ້ຽ ແລະ ການບໍລິປະໂພກເຈ້ຽອັນຟູມເຟືອຍ

ຕະຫຼາດເຈ້ຽ ແລະຕະຫຼາດເຍື່ອເຈັ້ຽສໍາລັບເຮັດເຈ້ຽຂອງຈີນ ເປັນຕະຫຼາດທີ່ມີການຂະຫຍາຍໂຕໄວທີ່ສຸດໃນໂລກ. ເຖິງວ່າຈະຄິດໄລ່ຕໍ່ຫົວຄົນ ຄົນຈີນກໍຍັງບໍລິໂພກເຈ້ຽຫນ້ອຍກວ່າຄົນອາເມລິກາ 10 ສ່ວນຮ້ອຍ. ປະເທດຈີນໃຊ້ເຈ້ຽຫມົດໄປ 14 ສ່ວນຮ້ອຍ ຂອງປະລິມານເຈ້ຽບໍລິໂພກທັງຫມົດຂອງໂລກ. ບໍລິສັດຈາກໂກ ເພີຍຣີ (Jaakko Poyry) ຄາດໄວ້ວ່າ ປະລິມານການບໍລິໂພກເຈ້ຽໃນປະເທດຈີນຈະສູງຂຶ້ນ 4,4 ສ່ວນຮ້ອຍຕໍ່ປີ ລະຫວ່າງປີ 2000 ຫາ 2015. ການບໍລິໂພກເຈ້ຽ ສ່ວນຫຼາຍແມ່ນໃຊ້ໃນການຫຸ້ມຫໍ່ສິນຄ້າສົ່ງອອກ, ນັ້ນຫມາຍຄວາມວ່າ ການ ບໍລິໂພກເຈ້ຽ ສະເລ່ຍຕໍ່ຫົວຄົນໃນປະເທດຈີນແທ້ໆແລ້ວ ຕໍ່າກວ່າໂຕເລກດັ່ງກ່າວ.

ການເຕີບໃຫຍ່ເຫຼົ່ານີ້ ຕ້ອງມີຄ່າໃຊ້ຈ່າຍທີ່ຕ້ອງເສຽ: ພາຍໃຕ້ຄໍາຊີ້ນໍາແລະເງິນຄໍາຂອງທະນາຄານໂລກ, ອຸດສາຫະກໍາຜະລິດເຍື່ອເຈັ້ຽ ແລະ ເຈ້ຽຂະຫນາດໃຫຍ່ ທີ່ທໍາລາຍສິ່ງແວດລ້ອມ ແລະ ບໍລິໂພກນໍ້າປະລິມານມະຫາສານ, ແຕ່ຫາກຈ້າງຄົນເຮັດວຽກຫນ້ອຍ ໂດຍເອື່ອຍອີງໃສ່ເນື້ອທີ່ກວ້າງຂວາງ ເພື່ອປູກຕົ້ນໄມ້ຊະນິດດຽວ ເພື່ອປ້ອນວັດຖຸດິບເຂົ້າໂຮງງານຢ່າງນີ້ ກໍາລັງເກີດການຂະຫຍາຍໂຕ. ອຸດສາຫະກໍາສະໄຫມໃຫມ່ກໍາລັງເຂົ້າມາແທນທີ່

ໂຮງງານຜະລິດເຍື່ອເຈັ້ຍ ແລະເຈ້ຍແບບເກົ່າ ທີ່ເຖິງວ່າຈະທໍາລາຍສິ່ງແວດລ້ອມ ແຕ່ກໍ່ມີຂໍ້ດີຢູ່ ເຊັ່ນ: ຜະລິດໃນປະລິມານຫນ້ອຍ ນໍາໃຊ້ສິ່ງເສດເຫຼືອອື່ນໆ ທີ່ບໍ່ແມ່ນແຕ່ໄມ້ ເຊັ່ນ: ເຟືອງເຂົ້າ, ລໍາຕົ້ນທັນຍາພືດອື່ນໆ (ສາລີ), ຈ້າງຄົນເຮັດວຽກເປັນຈໍານວນຫຼາຍ ແລະ ອຸ້ມຊູຊາວນາເປັນລ້ານໆຄອບຄົວ ເຊິ່ງອາໄສລາຍຮັບຈາກການຂາຍເຟືອງໃຫ້ໂຮງງານເຍື່ອເຈັ້ຍ. (ເບິ່ງໃບຂ່າວ WRM Bulletin No 83).

ມັນເປັນຂ່າວຮ້າຍສໍາລັບຜູ້ອ່ອນແອ, ແຕ່ເປັນກໍາໄລງາມສໍາລັບບໍລິສັດທີ່ປຶກສາ ບໍລິສັດເຄື່ອງຈັກ ແລະ ບໍລິສັດຜະລິດເຈ້ຍ ທີ່ກວມເອົາອຸສາຫະກໍາການຜະລິດເຍື່ອເຈັ້ຍແລະເຈ້ຍທົ່ວໂລກ: ໂຮງງານຍັກໃຫຍ່ປະເທດຟິນແລນ-ສະວີເດັນ(ຊູແອດ) ຄື ສະໂຕຣາ ເອັນໂຊ (Stora Enso) ໄດ້ປະກາດວ່າ ຈະ ຂະຫຍາຍການຜະລິດໃນໂຮງງານຊູໂຈ ຈາກ 160,000 ຫາ 240,000 ໂຕນຕໍ່ປີ; ບໍລິສັດ ສະໂຕຣາ ເອັນໂຊ ມີປ່າຕົ້ນວິກ ຢູ່ແຂວງກວາງຊີພາກໃຕ້ຂອງປະເທດຈີນ; ໂຮງງານເຈ້ຍ Finland's UPM Kymene's Changshu ຈາກປະເທດຟິນແລນເລີ່ມເຮັດວຽກມາແຕ່ປີ 1999 ຮອດປັດຈຸບັນ ມີສະມັດຕະພາບການຜະລິດໄດ້ 800,000 ໂຕນ ຕໍ່ປີ, ໂດຍນໍາເຂົ້າເຍື່ອເຈ້ຍຈາກອິນໂດເນເຊຍ; ບໍລິສັດ Indonesia's Asia Pulp and Paper ມີແຜນສ້າງໂຮງງານ ທີ່ສາມາດຜະລິດເຍື່ອເຈັ້ຍແລະເຈ້ຍໄດ້ 600,000 ໂຕນ ໃນຄິນຈູ (Qinzhou) ແຂວງກວາງຊີ ເຊິ່ງຈະນໍາໃຊ້ຕົ້ນວິກ ທີ່ປູກຢູ່ທາງພາກໃຕ້ຂອງຈີນ ປ້ອນເຂົ້າໂຮງງານ; ເອພີພີ (APP) ວາງເປົ້າຫມາຍໃຊ້ເນື້ອທີ່ປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ 600,000 ເຮັກຕາ ໃນປະເທດຈີນ; ບໍລິສັດຜະລິດເຈ້ຍ ທີ່ໃຫຍ່ທີ່ສຸດຂອງປະເທດຍີ່ປຸ່ນ ໂອຈີ (Oji Paper) ວາງແຜນປູກໄມ້ໃຫຍ່ໄວໃນເນື້ອທີ່ຂະຫນາດໃຫຍ່ ໃນຈີນເປັນເນື້ອທີ່ທັງຫມົດ 200,000 ເຮັກຕາ.

ການຜະລິດເຍື່ອເຈັ້ຍ ແລະ ເຈ້ຍທີ່ທະວີປະລິມານສູງຂຶ້ນນີ້ ແລ່ນໄປສູ່ການປູກໄມ້ເປັນສິນຄ້າໃນເນື້ອທີ່ ຂະຫນາດໃຫຍ່ເຊິ່ງເຮັດໃຫ້ເກີດມີຂໍ້ມູນຜົນກະທົບຕໍ່ສິ່ງແວດລ້ອມ ແລະສັງຄົມສູງຂຶ້ນຕາມລໍາດັບ. ເປົ້າຫມາຍຂອງບໍລິສັດຕ່າງໆທີ່ຜະລິດເພື່ອການບໍລິໂພກ ແລະ ເພື່ອສ້າງຜົນກໍາໄລ, ຄວາມຕ້ອງການບໍລິໂພກແບບປອມໆນີ້ຖືກສ້າງຂຶ້ນເພື່ອເຮັດໃຫ້ຜະລິດຕະພັນເຈ້ຍມີຄວາມສໍາຄັນເຊັ່ນ: ກົ່ງເຈ້ຍ, ແຜ່ນພັບ, ນາມບັດ, ປຶ້ມລາຍການສິນຄ້າ,ເຈ້ຍພັນກອກຢາ, ປ້າຍເສື້ອຜ້າ, ເຈ້ຍຫໍ່ອາ ຫານສຸກ (ດ່ວນ) ເຈ້ຍຫໍ່ຂອງຂວັນ, ເຈ້ຍເຊັດມື, ເຈ້ຍຫໍ່ເຄື່ອງສໍາອາງ ແລະ ສິນຄ້າຟູມເຟືອຍ, ເຈ້ຍເຊັດຫນ້າ, ເຈ້ຍເຊັດໃນເຮືອນຄົວ, ໃບຫວຍ, ປຶ້ມລາຍການອາຫານ, ເຈ້ຍຫໍ່ອາຫານສັດ... (ເຂົ້າໄປເບິ່ງລາຍການຜະລິດຕະພັນຈາກເຍື່ອເຈັ້ຍ ແລະ ເຈ້ຍໄດ້ໃນຫນ້າ ເວັບໄຊ ຂອງບໍລິສັດຊັປປີ (Sappi) http://www.sappi.com/SappiWeb/home+page)

ລັດຖະບານ ສ.ປ.ປ.ຈີນ ຄາດວ່າ ຈະອະນຸມັດໃຫ້ນໍາໃຊ້ເນື້ອທີ່ໄດ້ 6 ລ້ານເຮັກຕາ ລະຫວ່າງປີ 2001 ຫາ 2015 ເພື່ອປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່, ເບິ່ງຄືວ່າເພື່ອພິກປື້ນ ການທໍາລາຍປ່າໄມ້ ຕະຫຼອດເວລາຫຼາຍທົດສະວັດກ່ອນ ອັນໄດ້ເຮັດໃຫ້ປະເທດຈີນ ຕ້ອງມາພະເຊີນຫນ້າກັບບັນຫາສິ່ງແວດລ້ອມ ຮວມມີສະພາບແຫ້ງແລ້ງ ແລະນໍ້າຖ້ວມແບບກະທັນຫັນຮຸນແຮງ. ແນວໃດກໍຕາມ ສິ່ງທີ່ເອີ້ນກັນວ່າ "ແຜນຟື້ນຟູປ່າ" ກໍສ່ອງແສງໃຫ້ເຫັນວ່າເປັນການປູກປ່າ ແບບປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ດ້ວຍພືດຊະນິດດຽວ ຮວມມີພືດດັດແປງພັນທຸກໍາ (GM trees). ຄຣິຊ ແລງ ອ້າງອີງວ່າ ຫວັງລີດາ, ຫານ ຢີຝານ ແລະ ຫູ ຈຽນຈຸນ ຈາກສະຖາບັນ ປ່າໄມ້ຈີນ (Chinese Academy of Forestry) ໄດ້ຂຽນໄວ້ວ່າ: "ບາດກ້າວທີນຶ່ງ ແມ່ນຕ້ອງເລັ່ງປູກພືດທີ່ໃຫຍ່ໄວເຊັ່ນ ຕົ້ນພອບລາ (poplar) ແລະລາຊ (larch)". ເຖິງວ່າແຮກເລີ່ມປູກຕົ້ນພອບລາ ແມ່ນເພື່ອປ້ອງກັນດິນເຈື່ອນ ແຕ່ໃນທີ່ສຸດ ກໍ່ແມ່ນ

ເພື່ອເປັນວັດຖຸດິບປ້ອນໂຮງງານເຍື່ອເຈັ້ຽ ແລະ ເຈັ້ຽ. (ເບິ່ງຈົດຫມາຍຂ່າວ WRM Bulletin No 35) ປະເທດຈີນໄດ້ຮັບທຶນຊ່ອຍເຫຼືອຈາກປະເທດຕາເວັນຕົກ ເພື່ອປູກຕົ້ນໄມ້ ແລະ ເພື່ອຄົ້ນຄວ້າ ກ່ຽວກັບພືດ ດັດແປງພັນທຸກໍາ (GM trees). ນັບແຕ່ປີ 1980 ເປັນຕົ້ນມາ ທະນາຄານໂລກໃຫ້ປະເທດຈີນຢືມເງິນຫຼາຍກວ່າ 600 ລ້ານໂດລາສະຫະລັດ ເພື່ອເລີ່ມຕົ້ນປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ຕາມບົດລາຍງານຫຍໍ້ ໃນປີ 2006 ຂອງອົງການອາຫານ ແລະກະເສດ (FAO) ໂດຍ ນິໂຄລັ ວິວເລີ (NicholasWheeler) ເວົ້າວ່າ ໃນທົ່ວໂລກ, ມີສະຫນາມທົດລອງປູກພືດທີ່ຖືກດັດແປງພັນທຸກໍາຫຼາຍກວ່າ 210 ແຫ່ງ ໃນ 16 ປະເທດ" ແຕ່ "ມີພຽງ ແຕ່ປະເທດຈີນເທົ່ານັ້ນ ທີ່ມີການລາຍງານການໃຊ້ພືດດັດແປງພັດທຸກໍາເພື່ອການຄ້າ (ຄາດຄະ ເນວ່າມີ 1.4 ລ້ານຕົ້ນ ໃນເນື້ອທີ່ 300-500 ເຮັກຕາ ໃນ ປີ 2002 (1).

ທ້າຍຊຸມປີ 90, ສະຫນາມທົດລອງປູກພືດດັດແປງພັນທຸກໍາ ແຫ່ງທໍາອິດ ຕັ້ງຢູ່ເຂດຍອດແມ່ ນໍ້າເຫຼືອງ ແລະ ແມ່ນໍ້າຢາງຊີ ແລະ ໃນແຂວງຊິນຈຽງ ພາກຕາເວັນຕົກສຽງເຫນືອ. ໃນປີ 2002 ຫນ່ວຍງານບໍລິຫານປ່າໄມ້ລັດຂອງປະເທດຈີນ ໄດ້ອະນຸຍາດໃຫ້ຕັດໄມ້ພອບລາ ເພື່ອການຄ້າເປັນຄັ້ງທໍາອິດ.

ຕົ້ນພອບລາດັດແປງພັນທຸກໍາ ທີ່ຖືກໂຄລນ (clones) : ດັດແປງແນວພັນເອົາແບບ ມີສອງຊະນິດ - ພອບລາ ນິກຣາ (poplar nigra) ແລະ ພອບລາ ໄຮບຣິດ (popla hybrid) ໄດ້ຮັບການຂະຫຍາຍພັນ ແລະ ໃສ່ຊື່ວ່າ ພອບລາ 12 ແລະ ພອບລາ 741. ອີງຕາມນັກວິຊາການຂອງສະຖາບັນປ່າໄມ້ຈີນ, "ພືດການຄ້າທັງສອງຊະນິດເປັນພອບລາເພດແມ່ ທີ່ຖືກເຮັດໃຫ້ຢຸດການຂະຫຍາຍພັນແລ້ວ". ການດັດແປງແນວພັນ ແມ່ນແນ່ໃສ່ຕ້ານທານກັບແມງໄມ້ກິນໃບ (Bt) ແລະ ເພື່ອປ່ຽນແປງຄຸນສົມບັດຂອງເນື້ອໄມ້.

ອີງຕາມບົດຄວາມຂອງ ແຄດຕີ ເຊັຟລ (Katie Shafley) ສະເຫນີວ່າ, "ຕົ້ນໄມ້ທີ່ມີລະດັບຄວາມຕ້ານທານສູງຕໍ່ສັດຕູພືດສູງຂຶ້ນ ຈະເຮັດໃຫ້ມີການເລືອກໂດຍ "ທໍາມະຊາດ" ຂອງ ແມງໄມ້ ຈະເຮັດໃຫ້ພວກມັນມີຄວາມຕ້ານທານຕໍ່ຢາປາບສັດຕູພືດສູງຂຶ້ນນໍາ ເຊິ່ງເຮັດໃຫ້ມີການໃຊ້ຢາເຄມີທີ່ແຮງຂຶ້ນອີກ ແລະ ສິ່ງທີ່ບໍ່ແມ່ນເປົ້າຫມາຍ ກໍ່ຈະຖືກທໍາລາຍໄປໂດຍບໍ່ຕັ້ງໃຈ."(2) ການປູກພືດດັດແປງພັນທຸກໍາ ມີຄວາມສ່ຽງຕໍ່ການຕິດເຊື້ອພະຍາດ ເຊິ່ງເປັນໄພອັນຂູ່ທີ່ຮ້າຍແຮງ ເຊິ່ງຫົວຫນ້າຄະນະນັກວິທະຍາສາດຈາກສະຖາບັນປ່າໄມ້ຂອງຈີນ ໄດ້ເຕືອນໄວ້: ຫຸຍຍານ ຫວັງ (Horan Wang) ໄດ້ເຮັດລາຍງານຢ່າງຈະແຈ້ງໃນ ປີ 2004 ຕໍ່ອົງການອາຫານ ແລະກະເສດວ່າ "ມີການປູກຕົ້ນພອບລາດັດແປງພັນທຸກໍາຢ່າງກວ້າງຂວາງ ໃນທາງພາກເຫນືອຂອງຈີນ ເຊິ່ງເກສອນ ແລະ ແກ່ນສາມາດກະແຈກກະຈາຍໄປໂດຍບໍ່ສາມາດປ້ອງກັນໄວ້ໄດ້". ແລະ ການຈໍາກັດ ພື້ນທີ່ "ເຂດຫວງຫ້າມ" ລະຫວ່າງຕົ້ນພອບລາດັດແປງພັນທຸກໍາ ແລະ ພອບລາແນວເກົ່າຂອງພື້ນເມືອງແມ່ນ "ເກືອບວ່າເປັນໄປບໍ່ໄດ້." [3] ສະຖາບັນວິທະຍາສາດສິ່ງແວດລ້ອມນານກິງ ພົບເຫັນຕົ້ນພອບລາທີ່ຖືກດັດແປງພັນທຸກໍາ ຢູ່ໃນປ່າເຂດທໍາມະຊາດໃນພື້ນທີ່ຊິນຈຽງ ແລ້ວ. [4]

ຫຼາຍປະເທດຕາເວັນຕົກໃຫ້ຄວາມສົນໃຈຊ່ອຍເຫຼືອການພັດທະນານພືດດັດແປງພັນທຸກໍາໃນປະເທດຈີນ: ອົງການສະຫະປະຊາຊາດເພື່ອການພັດທະນາ(UNDP)ໄດ້ໃຫ້ທຶນ 1.8 ລ້ານໂດລາສະຫະລັດ ສໍາລັບໂຄງການຂ້ອງກ່ຽວກັບຕົ້ນພອບລາດັດແປງພັນທຸກໍາ ທຶນດັ່ງກ່າວ ສະຫນອງການສ້າງສະມັດຕະພາບ, ການຖ່າຍໂອນເຕັກໂນໂລຊີ ແລະ ສະຫນັບສະຫນູນຫ້ອງທົດລອງ; ສູນກາງ ຄົ້ນຄວ້າປ່າໄມ້ ແລະຜະລິດຕະພັນຈາກປ່າທີ່ ວານຊີເວີ ດອຟ

(Waldsieversdorf) ສະຫະພັນເຢຍລະມັນ ມີການພົວພັນກັບນັກວິທະຍາສາດປ່າໄມ້ຈີນ ຢ່າງໃກ້ຊິດໃນການຄົ້ນຄວ້າພືດດັດແປງພັນທຸກໍາ ເຖິງຂັ້ນໃຫ້ທຶນນັກວິທະຍາສາດຈີນ ຫູ ຈຽງ ຈຸນ (Hu Jianjun). ສະຖາບັນປ່າໄມ້ ຈີນ ແລະ ມະຫາວິທະຍາໄລເຫໄບ (Hebai) ທີ່ ບາວດິງ (Baoding) ມີບົດບາດສໍາຄັນຕໍ່ການ ພັດທະນາຕົ້ນພອບລາ (Bt) ແລະ ມີການນໍາພາຄົ້ນຄວ້າ.[5] ກົດລະບຽບກ່ຽວກັບການດັດແປງ ພັນທຸກໍາສິ່ງມີຊີວິດໃນປະເທດຈີນ ຖືກບັ່ງໄວ້ຢູ່ໃນ ການເຊັນສັນຍາກະສິກໍາ (Biosafety Act for GMOs in Agriculture) ຮັບຮອງເອົາໂດຍລັດຖະສະພາໃນເດືອນພຶດສະພາ ປີ 2001. ແຕ່ວ່າ ບໍ່ມີກົດລະບຽບສະເພາະຂໍ້ໃດ ທີ່ເວົ້າເຖິງແນວທາງຄຸ້ມຄອງຕົ້ນໄມ້ດັດແປງພັນທຸກໍາ ແລະ ຂະບວນການຕັດສິນໃຈນໍາຕົ້ນໄມ້ດັດແປງພັນທຸກໍາ ອອກມາໃຊ້ ການຕັດສິນໃຈແມ່ນຂຶ້ນກັບຄະນະຊ່ຽວຊານ ຈັດຕັ້ງໂດຍກະຊວງບໍລິຫານປ່າໄມ້. ອີງຕາມຄໍາຖະແຫຼງການຂອງ ຊູຍ ດ້າຢວນ (Xue Dayuan) ແຫ່ງສະຖາບັນວິທະຍາສາດສິ່ງແວດລ້ອມນານກິງ, ຫ້ອງການບໍລິຫານຄຸ້ມຄອງ ຄວາມປອດໄພຂອງພືດດັດແນວ ກະຊວງກະສິກໍາຂອງຈີນ ບໍ່ໄດ້ຄຸ້ມຄອງຕົ້ນໄມ້ດັດແປງພັນທຸກໍາ ຍ້ອນວ່າ ຕົ້ນໄມ້ເຫຼົ່ານີ້ ບໍ່ຖືວ່າເປັນທັນຍາພືດ (crop). ແຕ່ວ່າສໍານັກງານປ່າໄມ້ລັດ ທີ່ກໍາກັບນໍາການປູກຕົ້ນໄມ້ຊະນິດດຽວເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ຊໍ້າພັດບໍ່ມີລະບົບຂຶ້ນທະ ບຽນຄືກັນກັບທີ່ທາງກະຊວງມີ (6).

"ເຮົາບໍ່ສາມາດເຂົ້າຫາໂຕເລກທີ່ແນ່ນອນຂອງເນື້ອທີ່ປູກຝັງພືດດັດແປງພັນທຸກໍາ ຍ້ອນວ່າການໂຄສະນາ ແລະ ການຕະຫຼາດຂອງພືດດັດແປງພັນທຸກໍາ ແລະ ຄວາມຫຍຸ້ງຍາກໃນການໄຈ້ແຍກໂຄງສ້າງຂອງພືດດັດແປງພັນທຸກໍາ ຈາກພືດພັນແນວບໍລິສຸດ," ຫຸຍຍານ ຫວັງ (Horan Wang) ຂຽນໄວ້ໃນບົດລາຍງານ ອົງການອາຫານໂລກ (FAO). "ອຸປະກອນຕ່າງໆຖືກຍ້າຍຈາກສະຫນາມ ກ້າເບ້ຍໄມ້ບ່ອນຫນຶ່ງ ໄປອີກບ່ອນຫນຶ່ງ ເຊິ່ງຍາກຕໍ່ການຕິດຕາມນໍາຮອຍມັນໄດ້."

ການບໍລິໂພກເຈ້ຍແບບຟູມເຟືອຍຫມົດເປືອງທີ່ທະວີແຮງຂຶ້ນ ເປັນເຫດໃຫ້ການປູກໄມ້ຊະນິດດຽວ ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ປ້ອນໂຮງງານເຍື່ອເຈ້ຍ ຂະຫຍາຍໂຕອອກນໍາ. ການເຕີບໃຫຍ່ຢ່າງໄວວາຂອງການປູກໄມ້ຊະນິດດຽວເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ບັນລຸໄດ້ດ້ວຍການແລກກັບການສູນເສຍ ແລະ ການເສຍສະຫຼະເນື້ອທີ່ດິນ, ນໍ້າ, ຊີວະນາໆພັນ ແລະ ວິຖີຊີວິດ ຂອງຊຸມຊົນຊາວບ້ານ. ຄວາມຕ້ອງການຜົນກໍາໄລສູງ ເປັນເຫດໃຫ້ມີຄວາມຈໍາເປັນຜະລິດຫຼາຍຂຶ້ນ ເຊິ່ງທັງຫມົດນີ້ ນໍາໄປສູ່ການປ່ອຍຕົ້ນໄມ້ດັດແປງພັນທຸກໍາ ທີ່ເປັນອັນຕະລາຍເຂົ້າສູ່ໂຮງງານເຈ້ຍຂະຫນາດໃຫຍ່. ນີ້ແມ່ນວົງຈອນອັນຊົ່ວຮ້າຍ ທີ່ຈະອະວະສານລົງດ້ວຍຄວາມຫາຍະນະຢ່າງແນ່ນອນ.

[1] Executive summary, Nicholas Wheeler, FAO document, http://www.fao.org/docrep/008/ae574e/AE574E03.htm
[2] "The New Chainsaw. Genetically engineered trees are the new threat to Canada's forests", by Katie Shafley, http://www.dominionpaper.ca/author/katie_shafley
[3] "The state of genetically modified forest trees in China", Huoran Wang - Chinese Academy of Forestry, Beijing, FAO report, http://www.fao.org/docrep/008/ae574e/AE574E08.htm
[4] "China's GM trees get lost in bureaucracy", Fred Pearce, New Scientist, http://www.newscientist.com/article/dn6402-chinas-gm-trees-get-lost-in-bureaucracy.html
[5] "Cultivation of Bt poplars in China", GMO Safety, http://www.gmo-safety.eu/en/wood/poplar/325.docu.html
[6] Op cit 4

## ຄວາມບໍ່ຫມັ້ນຄົງໃນການດຳລົງຊີວິດຂອງຊຸມຊົນ ເນື່ອງຈາກການລົງທຶນປູກຢາງກະຕັງກະຕິ້ວໃນ ສ.ປ.ປ.ລາວ

ການລົງທຶນປູກໄມ້ໃສ່ເນື້ອທີ່ຂະຫນາດໃຫຍ່ເພື່ອເປັນສິນຄ້າ ໂດຍບໍລິສັດຕ່າງປະເທດໃນ ສ.ປ.ປ.ລາວ ເພີ່ມຂຶ້ນຢ່າງໄວວາໃນໄລຍະປີ 2004 ຫາ 2006 ການປູກໄມ້ໃສ່ເນື້ອທີ່ຂະຫນາດໃຫຍ່ເພື່ອເປັນສິນຄ້າໄດ້ຮັບການຊຸກຍູ້ ໃນຮູບແບບຂອງການໃຫ້ສຳປະທານທີ່ດິນ. ປະຈຸບັນ ມີການອະນຸມັດສຳປະທານທີ່ດິນຂະຫນາດກວ້າງໃຫຍ່ໃນເຂດພາກກາງ ແລະພາກໃຕ້ຂອງປະເທດລາວ ກວມເອົາເນື້ອທີ່ 167,000 ເຮັກຕາ,ໃນນັ້ນ 48 ສ່ວນຮ້ອຍ ຫຼື 80,000 ເຮັກຕາ ໃຊ້ປູກຢາງກະຕັງກະຕິ້ວ ແລະ ອີກ 28 ສ່ວນຮ້ອຍ ຫຼື 46,000 ເຮັກຕາໃຊ້ປູກຕົ້ນວິກ. ແນວໃດກໍ່ຕາມ ກ້າຮວມເນື້ອທີ່ປູກຢາງທັງຫມົດໃນປະເທດແລ້ວ ມີເນື້ອທີ່ປະມານ 182,900 ເຮັກຕາ (ກະຊວງອຸດສາຫະກຳແລະການຄ້າ ແລະ ອີງການຄຸ້ມຄອງດິນ ແຂວງຈຳປາສັກ).

ການຂະຫຍາຍໂຕຂອງອຸດສາຫະກຳຢາງກະຕັງກະຕິ້ວໃນສ.ປ.ປ.ລາວ ກ່ຽວຂ້ອງໂດຍກົງກັບການ ເຕີບໃຫຍ່ຂອງອຸດສາຫະກຳລົດຂອງປະເທດຈີນ ອັນເຮັດໃຫ້ຈີນກາຍເປັນຕະຫຼາດຮັບຊື້ຢາງແປຮູບລາຍໃຫຍ່ທີ່ສຸດ. ບໍລິສັດຈີນ ໄດ້ຂະຫຍາຍເນື້ອທີ່ປູກຢາງລາມເຂົ້າມາໃນລາວ ສ່ວນໃຫຍ່ ແມ່ນເຂົ້າມາໃນເຂດພາກເຫນືອທີ່ມີຊາຍແດນຕິດກັບປະເທດຈີນໃນຮູບແບບກະສິກຳສັນຍາຜູກພັນລະຫວ່າງຜູ້ລົງທຶນກັບປູກ (contract farming) ຄື ບໍລິສັດຜູ່ລົງທຶນຈີນເປັນຜູ້ໃຫ້ເບ້ຽໄມ້ ແລະຮັບຊື້ຜົນຜະລິດຈາກຊາວກະສິກອນ ສ່ວນດິນ ແລະ ແຮງງານເປັນຂອງຊາວກະສິກອນ. ຢ່າງໃດກໍຕາມ ຮູບແບບການລົງທຶນປູກຢາງກະຕັງກະຕິ້ວນັ້ນ ມີຫຼາຍລັກສະນະ. ບໍລິສັດຈາກ ຫວຽດນາມ ແລະ ໄທ ໄດ້ເຂົ້າໄປລົງທຶນປູກຕົ້ນຢາງໃນພື້ນທີ່ຂະຫນາດໃຫຍ່ ຢູ່ເຂດພາກກາງ ແລະ ພາກໃຕ້ຂອງລາວ ໂດຍການຂໍສຳປະທານທີ່ດິນບໍລິສັດທີ່ໄດ້ສຳປະທານທີ່ດິນ ມີຈາກຫວຽດນາມ 5 ບໍລິສັດ ລົງທຶນຢູ່ພາກໃຕ້ຂອງລາວ, 4 ບໍລິສັດ (ຫວຽດ-ລາວ (Viet-Lao), ເຍົ້າຕຽງ (Dau Tieng) ກວ່າງ ມິນ (Quang Minh) ກາວຊາ ເຢີຣຸໂກ (Quasa Geruco) ເປັນບໍລິສັດໃນກຸ່ມບໍລິສັດ ຫວຽດນາມຣັບເບີ້ (Vietnam Rubber VRG) ແລະກຸ່ມລັດວິສາຫະກິດຂອງແຂວງດັກລັດ (Daklak Rubber) ຮວມເນື້ອທີ່ ທີ່ໄດ້ຮັບອະນຸມັດສຳປະທານປູກຢາງຂອງບໍລິສັດຫວຽດນາມໃນລາວມີເກືອງ 42,050 ເຮັກຕາ.

**ການສູນເສຍດິນ ແຕ່ໄດ້ຄ່າທົດແທນຕ່ຳ**

ການສຳປະທານທີ່ດິນເພື່ອປູກຢາງກະຕັງກະຕິ້ວຂອງ 3 ບໍລິສັດຫວຽດນາມ ເປັນຕົ້ນເຫດໃຫ້ປະຊາຊົນສ່ວນນຶ່ງ ທີ່ອາໄສຢູ່ໃນພື້ນທີ່ໂຄງການ ຕ້ອງສູນເສຍເນື້ອທີ່ປູກຟັງເກືອບທັງຫມົດ ຈົ່ງໄວ້ແຕ່ດິນນາພຽງຫນ້ອຍດຽວ ແລະດິນປຸກເຮືອນຢູ່. ເນື້ອທີ່ສຳປະທານສ່ວນໃຫຍ່ກວມເອົາດິນໄຮ່ ຫມູນວຽນ ແລະ ເນື້ອທີ່ປູກທີ່ໃຫ້ຜົນລະປູກຂອງປະຊາຊົນ. ປະຊາຊົນເກີດຄວາມສັບສົນ ແລະ ເປັນທຸກ ຍ້ອນວ່າບໍ່ແນ່ໃຈໃນອະນາຄົດຂອງພວກເຂົາເຈົ້າ ຫຼັງຈາກທີ່ພວກເຂົາເສຽທີ່ດິນໄປຫມົດ

"ໄລຍະທຳອິດ ພວກເຂົາບໍ່ເຂົ້າໃຈຄວາມຫມາຍຂອງການສຳປະທານທີ່ດິນ, ພະນັກງານທັງລະດັບທ້ອງຖິ່ນ ແລະ ຂັ້ນນຳ ເຂົ້າໄປໂຄສະນາອະທິບາຍເຖິງຜົນປະໂຫຍດທີ່ຊາວບ້ານຈະໄດ້ຮັບ ເຊັ່ນທາງພະນັກງານບອກວ່າຊາວບ້ານຈະໄດ້ເຂົ້າເຮັດວຽກເປັນແຮງງານໃຫ້ບໍລິສັດ ແລະ ມີເງິນເດືອນກິນ. ເນື້ອທີ່ດິນຂອງບ້ານທັງຫມົດຢູ່ໃນເຂດສຳປະທານ ຊາວບ້ານບໍ່ມີສິດບອກວ່າ ພໍໃຈຫຼືບໍ່ ເພາະສຳປະທານທີ່ດິນ ເປັນແຜນພັດທະນາຂອງລັດຖະບານ" ປະຊາຊົນອີກລາຍນຶ່ງ ເວົ້າວ່າ "ປະຊາຊົນບາງຄົນມີທີ່ດິນ 1-2 ເຮັກຕາ ເມື່ອມອບໃຫ້ບໍລິສັດສຳປະທານແລ້ວ ກໍ່ບໍ່ເຫຼືອດິນເພື່ອຫາກິນ ເຮັດໃຫ້ປະຊາຊົນຂາດເຂົ້າກິນ ອາໄສເຮັດວຽກກັບບໍລິສັດຢ່າງດຽວບໍ່ພໍກຸ້ມກິນ"

ໂດຍທົ່ວໄປ ປະຊາຊົນຜູ່ເສຽເນື້ອທີ່ດິນນັ້ນ ຕ້ອງໄດ້ຮັບຄ່າທົດແທນ ແຕ່ຫຼາຍຄົນບໍ່ໄດ້ຮັບ ຫຼື ໄດ້ຮັບໃນອັດຕາທີ່ຕໍ່າຫຼາຍ. ການເຮັດບົດລາຍງານສໍາລັບການຈ່າຍເງິນຄ່າທົດແທນ ແມ່ນບໍ່ໄດ້ປະ ຕິບັດໄປຕາມທີ່ກໍານົດໄວ້ໃນດໍາລັດ ວ່າດ້ວຍຄ່າທົດແທນ ບາງບໍລິສັດກໍ່ຈ່າຍທົດແທນພຽງແຕ່ຄ່າພືດພັນທີ່ເສຽຫາຍ ຫຼືປະເມີນຄ່າດິນ ແລະ ພືດຜົນໂຮມກັນ ຫຼືຈ່າຍແຕ່ສະເພາະຄ່າທີ່ດິນ. ທັງຫມົດນີ້ແມ່ນຂຶ້ນກັບຄວາມສາມາດເຈລະຈາຂອງຊາວບ້ານແຕ່ລະຄົນ ເຊິ່ງກໍມີຄວາມແຕກຕ່າງກັນຫຼາຍໃນແຕ່ລະບຸກຄົນ. ໂດຍສະເລ່ຽຄອບຄົວທີ່ໃຫ້ສໍາພາດໄດ້ຮັບຄ່າທົດແທນປະມານ 1.5 ລ້ານກີບ (ປະມານ150 ໂດລາ ສະຫະລັດ) ຕໍ່ຄອບຄົວ.

ໃນບາງບ້ານ ຊາວບ້ານໄດ້ຮັບຄ່າທົດແທນເນື້ອທີ່ເຮັດໄຮ່ສະເລ່ຽ 500,000-1,000,000 ກີບຕໍ່ເຮັກຕາ (50 - 100 ໂດລາສະຫະລັດ) ແຕ່ບາງບ້ານຊໍ້າບໍ່ໄດ້ຮັບເງິນທົດແທນເລີຍ. ກົ່ວດິນທີ່ເຄີຍປູກໃສ່ດິນເຮັດໄຮ່ ກໍບໍ່ໄດ້ຮັບຄ່າທົດແທນ ສ່ວນພືດພັນອື່ນໆເຊັ່ນ: ຕົ້ນສັກ ເງິນທົດແທນ ແມ່ນຂຶ້ນກັບຊະນິດແລະອາຍຸຂອງໄມ້ເຊິ່ງມີລາຄາແຕ່ 500-5,000 ກີບຕໍ່ຕົ້ນ (0.05-0.50 ໂດລາສະຫະລັດ). ແຕ່ການສູນເສຽຜົນຜະລິດທີ່ຊາວບ້ານບໍ່ໄດ້ປູກເອງນັ້ນ ບໍ່ໄດ້ນໍາມາຕີລາຄາເລີຍ ຕົວຢ່າງເຊັ່ນຫຍ້າຄາທີ່ຊາວບ້ານເກັບກ່ຽວມາຈາກປ່າ ນໍາໃຊ້ຫຼືຂາຍໃນທຸກປີ ຫຼື ແຫຼ່ງອາຫານ ຫຼື ທົ່ງຫຍ້າລ້ຽງສັດໃນປ່າໂຄກ. ໂດຍທົ່ວໄປຄອບຄົວທີ່ມີສວນຫຍ້າຄາ ສາມາດເກັບກ່ຽວສ້າງລາຍ ຮັບໄດ້ຮອດປະມານ 1,6 ລ້ານກີບຕໍ່ປີ.

**ການດໍາລົງຊີວິດ ຢູ່ພາຍໃຕ້ຄວາມບໍ່ຫມັ້ນຄົງອັນໃຫຍ່ຫຼວງ**

ການດໍາລົງຊີວິດຂອງຊາວບ້ານຜູ່ສູນເສຽເນື້ອທີ່ດິນໃຫ້ບໍລິສັດສໍາປະທານໄດ້ປ່ຽນແປງໄປຈາກການ ເປັນບ້ານທາຢູ່ກິນນໍາການເຮັດໄຮ່ຫມູນວຽນ ເຮັດສວນ ລ້ຽງງົວຄວາຍ ແລະ ຫາກິນນໍາປ່າໂຄກ ກາຍມາເປັນບ້ານທີ່ສະມາຊິກຕ້ອງອາໄສໄປຮັບຈ້າງ ເປັນແຮງງານໃຫ້ບໍລິສັດ ເພື່ອຫາເງິນມາຊື້ເຂົ້າກິນ ພວກເຂົາຕ້ອງໄດ້ຂາຍງົວຄວາຍທີ່ລ້ຽງໄວ້ໄຖນາແລະເຮັດກະສິກໍາ ແລະເປັນອາຫານໂປຼຕີນ ຂອງເຂົາ.

ຈາກຜູ່ໃຫ້ສໍາພາດ 189 ຄົນ ໃນ 6 ບ້ານ ເຫັນວ່າຈໍານວນຄົວເຮືອນທີ່ເຄີຍປູກເຂົ້າພໍກຸ້ມກິນ 11-12 ເດືອນຕໍ່ປີຫລຸດລົງຈາກ 4 ໃນ 5 ສ່ວນ ໃນປີ 2003 ແລະເຫຼືອພຽງ 1 ສ່ວນ ໃນປີ 2007. ຈໍານວນເດືອນທີ່ບໍ່ສາມາດປູກເຂົ້າໄດ້ເພີ່ມຂຶ້ນ ພ້ອມໆກັບຈໍານວນ ຄອບຄົວທີ່ຂາດເຂົ້າກິນ.

ສໍາລັບປະຊາຊົນທີ່ເສຽດິນໄປ ກ້າບໍລິສັດປູກຢາງບໍ່ຈ້າງຄົນທ້ອງຖິ່ນແລ້ວ ພວກເຂົາກໍມີທາງຫາກິນຫນ້ອຍທີ່ສຸດ ໂດຍສະເພາະການໄປຮັບຈ້າງຢູ່ບ່ອນອື່ນ ດັ່ງນັ້ນ ປະຊາຊົນຈຶ່ງກາຍເປັນຜູ່ອາໄສແຫຼ່ງລາຍຮັບຈາກບ່ອນດຽວ ນັ້ນມັນຫມາຍຄວາມວ່າ ພວກເຂົາປະສົບກັບຄວາມບໍ່ຫມັ້ນຄົງໃນການ ດໍາລົງຊີວິດຫຼາຍກວ່າເມື່ອຄັ້ງດໍາລົງຢູ່ຊີວິດແບບເກົ່າທີ່ມີແຫຼ່ງລາຍຮັບຫຼາກຫຼາຍ, ຊາວບ້ານສ່ວນຫຼາຍເປັນກໍາມະກອນແຮງງານລາຍມື້ ຫຼາຍກວ່າເປັນກໍາມະກອນປະຈໍາ ແຕ່ລະບໍລິສັດຈະຈ່າຍຄ່າແຮງງານ ໃນອັດຕາທີ່ແຕກຕ່າງກັນ ແຕ່ສະເລ່ຽແລ້ວປະມານ 20,000 -25,000 ກີບ (2 -2.5 ໂດລາສະຫະລັດ)ຕໍ່ມື້. ຈໍານວນມື້ເຮັດວຽກຂອງກໍາມະກອນລາຍມື້ຊົ່ວຄາວ ມີຫນ້ອຍກວ່າ 3 ເດືອນຕໍ່ປີ.

ຄວາມຕ້ອງການແຮງງານເຮັດວຽກນັ້ນສູງພຽງແຕ່ໃນປີທໍາອິດຈາກນັ້ນກໍຫລຸດຫນ້ອຍກ້ອຍລົງ ຈົນກວ່າຈະຮອດປີທີ່ຕ້ອງປາດນໍ້າຢາງ. ເງິນເດືອນທີ່ຈ່າຍໃຫ້ຄ່າກໍາມະກອນປະຈໍາກໍມີທ່າທີ່ຫລຸດລົງ ຈາກປີທໍາອິດ. ຜູ້ເຮັດວຽກບໍ່ຮູ້ຮອດວ່າຕົນເອງໄດ້ຄ່າຈ້າງເທົ່າໃດ ຈົນກວ່າຮອດມື້ຮັບເງິນເດືອນ. ຢູ່ບາງບ້ານ ບໍລິສັດຄິດໄລ່ແຮງງານປະຈໍາອອກໂດຍອ້າງວ່າພວກເຂົາເຮັດວຽກແບບບໍ່ມີປະສິດທິພາບ ແລ້ວທາງບໍລິສັດກໍ່ຈ້າງແຮງງານຈາກບ່ອນອື່ນໂດຍຜ່ານນາຍຫນ້າຫາຄົນເຮັດວຽກ ເວລາທີ່ພວກເຂົາບໍ່ພໍໃຈແຮງງານທ້ອງຖິ່ນ. ພະນັກງານອົງການທີ່ດິນແຫ່ງຊາດຂັ້ນແຂວງທ່ານຫນຶ່ງ ໄດ້ເລົ່າໃຫ້ຟັງວ່າ "ປະຊາຊົນຍັງເບິ່ງບໍ່ເຫັນອະນາຄົດຕົນເອງ ເມື່ອດິນຂອງພວກເຂົາຕົກເປັນດິນສໍາປະທານ. ລູກຫຼານຂອງພວກເຂົາຈະເຮັດແນວໃດ? ຜູ້ເຖົ້າຜູ້ແກ່ ທີ່ບໍ່ມີເຫື່ອແຮງເຮັດວຽກແລ້ວ, ພວກເຂົາ

ຈະເຮັດແນວໃດ? ກ້າລາຄາຢາງກະຕັງກະຕື້ວຕົກ, ມັນຈະມີຜົນກະທົບແນວໃດ?"

**ສະຫລຸບຄຳເຫັນ**

ປະເທດລາວມີແຜນຍຸດທະສາດປ່າໄມ້ ເຊິ່ງສົ່ງເສີມໃຫ້ຂະຫຍາຍການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ ໄປເຖິງປີ 2020 ແຕ່ວ່າຍັງບໍ່ມີແຜນຍຸດທະສາດໃນການຈັດການທີ່ດິນໂດຍລວມ. ທີ່ເວົ້າຢ່າງຈະແຈ້ງ ກ່ຽວກັບ ການສົ່ງເສີມການປູກຕົ້ນໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ ແລະ ການປົກປັກຮັກດິນເພື່ອປູກເຂົ້າເຮັດນາ ແລະ ເພື່ອຊັບພະຍາກອນ ອື່ນໆ ໃນການດຳລົງຊີວິດຂອງຊາວບ້ານ.

ຈາກການທົບທວນຄືນ ການລົງທຶນປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່, ຕ້ອງໄດ້ພິ ຈາລະນາຫຼາຍບັນຫາ ສຳຄັນ. ບັນຫາດ້ານຊັບພະຍາກອນ ດ້ານການເງິນທີ່ຈຳກັດ ແລະ ບັນຫາທາງ ຄວາມອາດສາມາດໃນທຸກລະດັບ ຂອງລັດຖະບານ, ການຕັດສິນແບບບໍ່ໄດ້ມີການວິເຄາະຢ່າງພຽງພໍ ແລະ ບໍ່ມີການປ້ອງກັນສິດທິຜົນປະໂຫຍດຂອງ ຊາດ ແລະ ປະຊາຊົນສ່ວນໃຫຍ່ຂອງ ສ.ປ.ປ.ລາວ. ຜົນທີ່ໄດ້ຮັບແມ່ນ ປະເທດຊາດ ທີ່ກຳລັງຈະສູນເສຍຊັບພະຍາ ກອນພື້ນຖານຢ່າງໄວວາ ໃຫ້ແກ່ນັກລົງທຶນຕ່າງດ້າວ.

ເຖິງແມ່ນວ່າ ຈະມີຄວາມພະຍາຍາມຈຳແນກ ແລະກຳນົດສິດໃນທີ່ດິນໃຫ້ປະຊາຊົນ ແຕ່ຄວາມສັບສົນ ແລະຄວາມ ບໍ່ຈະແຈ້ງໃນການນຳໃຊ້ທີ່ດິນຍັງມີຢູ່ຢ່າງຫລວງຫລາຍ ແມ້ແຕ່ໃນກຸ່ມຜູ້ທີ່ມີໃບຢັ້ງຢືນທີ່ດິນ ພາຍໃຕ້ໂຄງການມອບ ດິນມອບປ່າ (Land and Forest Allocation Programme) ແລ້ວ ເຮັດໃຫ້ປະຊາຊົນຖືກກົດດັນຢ່າງແຮງ ທີ່ຕ້ອງມອບໂອນກຳມະສິດທີ່ດິນ ຂອງຕົນທີ່ມີເອກະສານຢັ້ງຢືນໃຫ້ນັກລົງທຶນປູກໄມ້.

ຄືກັບຫຼາຍໆປະເທດໃນຂົງເຂດນີ້ ປະຊາຊົນລາວ ນຳໃຊ້ທີ່ດິນເຮັດໄຮ່ຫມູນວຽນ, ນຳໃຊ້ເນື້ອທີ່ປ່າໂຄກ ຫຼືເນື້ອທີ່ປ່າ ອື່ນໆ ເປັນແຫຼ່ງຊັບພະຍາກອນທຳມະຊາດໃຫ້ຊາວບ້ານໄດ້ອາໄສຫາກິນ ແລະຫາເກັບເຄື່ອງປ່າຂອງດົງ, ເນື້ອທີ່ ລ້ຽງສັດແລະອື່ນໆ ຕາມກົດຫມາຍແລ້ວ ຖືວ່າເນື້ອທີ່ຕ່າງໆເປັນດິນຂອງລັດ. ດັ່ງນັ້ນ ເຖິງ ແມ່ນວ່າຈະມີການ ສຶກສາຂອງຫລາຍພາກສ່ວນ ເຖິງຄຸນຄ່າແລະຜົນປະໂຫຍດຂອງດິນທີ່ມີຕໍ່ປະຊາຊົນ, ແຕ່ຍ້ອນວ່າ ຄວາມຮູ້ດັ່ງກ່າວ ບໍ່ໄດ້ຖືກນຳເຂົ້າພິຈາລະນາເວລາມີການວາງແຜນ ແລະ ຂະບວນການຕັດສິນໃຈ. ການສູນເສຍປ່າໄມ້ ແລະ ດິນດອນຂອງປະຊາຊົນ ຈຶ່ງຍັງມີຢູ່ຕໍ່ໄປຢ່າງກວ້າງຂວາງ.

***ອີງໃສ່ບົດຄົ້ນຄວ້າລາຍງານຂອງ ປິ່ນແກ້ວ ເຫຼືອງອາຣາມສີ, ເຣເບັກກາ ລິນບາດ, ພອນພະນາ ກວຍຈະເລີນ (2008), "ການປະເມີນຜົນທາງດ້ານເສດຖະກິດ-ສັງຄົມ ແລະສິ່ງແວດລ້ອມ ຈາກການປູກໄມ້ເປັນສິນຄ້າໃນເນື້ອທີ ຂະໜາດໃຫຍ່ ໃນສ.ປ.ປ.ລາວ ການສຶກສາໄມ້ຢາງກະຕັງກະຕື້ວ",*** *ມະຫາວິທະຍາໄລຊຽງໃຫມ່, ສະບັບລາຍງານ ພາສາອັງກິດກຳລັງຈະສຳເລັດ. ໂດຍການ ຮ່ວມມືລະຫວ່າງສູນຄົ້ນຄວ້າ ແລະ ຂໍ້ມູນຂ່າວສານຊັບພະຍາກອນ ທຳມະຊາດ ອົງການຄຸ້ມຄອງທີ່ດິນແຫ່ງຊາດ ສຳນັກງານນາຍົກລັດຖະມົນຕີ ສ.ປ.ປ.ລາວ, ມູນນິທິຟື້ນຟູຊີວິດ ແລະທຳມະຊາດ ແລະ ຄະນະສັງຄົມສາດ, ມະຫາວິທະຍາໄລຊຽງໃຫມ່, ປະເທດໄທ.*

## ການຂະຫຍາຍໂຕການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ ໃນ ສ.ປ.ປ.ລາວ

## ການຍາດແຍ່ງທີ່ດິນ

ແຕ່ປີ 2006 ເປັນຕົ້ນມາ ປະເທດນ້ອຍໆໃນອາຊີອາຄະເນທີ່ບໍ່ມີທາງອອກສູ່ທະເລຄືປະເທດລາວ ນີ້ ໄດ້ເຫັນການຂະຫຍາຍໂຕຢ່າງໄວວາ ຈາກໂຄງການປູກໄມ້ເປັນສິນຄ້າຂະໜາດນ້ອຍ ກາງ ແລະ ໃຫຍ່ ໂດຍສະເພາະເພື່ອປູກຕົ້ນຢາງກະຕັງກະຕິ້ວ ຕົ້ນວິກ ແລະພືດເຊື້ອເພີງຊີວະພາບອື່ນໆ. ການເຕີບໃຫຍ່ດັ່ງກ່າວ ບໍ່ໄດ້ເກີດຂຶ້ນເອງ ແຕ່ຍ້ອນໄດ້ຮັບການສົ່ງເສີມໂດຍສະຖາບັນການເງິນລະຫວ່າງປະເທດ (International Finantial Institutute [IFI]) ໃນທົດສະວັດທີ່ຜ່ານມາ ເພື່ອເພີ່ມໂຕເລກລາຍໄດ້ແຫ່ງຊາດ (GDP) ໃນລາວ. ຜູ້ທີ່ສົ່ງເສີມຢ່າງອອກໜ້າອອກຕາໃນເລື່ອງຂະຫຍາຍການປູກຕົ້ນໄມ້ອຸດສາຫະກຳ ກໍແມ່ນທະນາຄານພັດທະນາອາຊີ (ADB) ເຖິງວ່າລາວຈະເປັນປະເທດທີ່ມີບັນຫາສໍ້ລາດບັງຫຼວງຢ່າງໜັກໜ່ວງບ່ອນໜຶ່ງໃນໂລກ (ໃນປີ 2007 ລາວຈັດຢູ່ໃນອັນດັບທີ່ 163 ໃນ 171 ປະເທດໃນເລື່ອງດັດຊະນີຄວາມປອດໃສຈະແຈ້ງຕາມມາດຕະຖານ ສາກົນ (transparency internationals Corruption Perceptions Index) ແຕ່ທະນາຄານເອດີບີ ກໍ່ຍັງໄດ້ສືບຕໍ່ ສົ່ງເສີມເອົາໃຈໃສ່ການລົງທຶນປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ເປັນເວລາຫຼາຍປີ. ປະຫວັດສາດອັນໜ້າອັບອາຍຂີ້ຮ້າຍສຸດໃນເລື່ອງນີ້ ຄືງຈະແມ່ນກໍລະນີການໃຫ້ເງິນໂຄງການກູ້ຢືມ 11 ລ້ານໂດລາສະຫະລັດສຳລັບໄລຍະ ປີ 1996 ຫາ 2003 ດ້ວຍຈຸດໝາຍ ເລັ່ງລັດຈະແຈ້ງສົ່ງເສີມປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ໃນປະເທດລາວ. ພຽງແຕ່ໂຄງການນີ້ໂຄງການດຽວ ກໍ່ໄດ້ສ້າງຄວາມທຸກຍາກໃຫ້ກັບຊາວກະສິກອນຢ່າງຫຼວງຫຼາຍ ຈາກການມີໜີ້ສິນ ຈົນບໍ່ສາມາດຈ່າຍຄືນໄດ້, ແລະຍັງເກືອບເຮັດໃຫ້ທະນາຄານສົ່ງເສີມກະສິກຳ ຂອງລັດຖະບານລົ້ມລະລາຍນອກນັ້ນຍັງກໍ່ໃຫ້ເກີດຂະບວນການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ໃນລາວອີກດ້ວຍ.

ເຖິງວ່າຈະຂາດຄວາມໝັ້ນຄົງໃນການອອກໃບຕາດິນຖາວອນ ແລະ ຂາດຄວາມສາມາດ ພາຍໃນລັດຖະບານເອງ ເພື່ອກວດກາແລະກຳກັບນຳການລົງທຶນປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່, ແຕ່ທະນາຄານເອີບີ ບໍ່ໄດ້ລັ່ງເລໃຈໃນການສົ່ງເສີມປະເທດລາວ ໃຫ້ກາຍເປັນຈຸດໝາຍໜຶ່ງ ຂອງບັນດາບໍລິສັດຂ້າມຊາດ ປູກໄມ້ເປັນສິນຄ້າ, ໃນປີ 2004 ຢູ່ນະຄອນຫຼວງວຽງຈັນ ທະນາຄານໄດ້ເຊື້ອເຊີນເອົານັກລົງທຶນປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ ເຂົ້າມາແລະໂຄສະນາວ່າລາວເປັນປະເທດ ທີ່ຄວນຝັນເຖິງໃນການລົງທຶນ. ການປະຕິບັດໂຄງການສົ່ງເສີມດັ່ງກ່າວໂດຍເອດີບີ ປາກົດວ່າໄດ້ຮັບຜົນສຳເລັດດີ, ໃນປີ 2005 ບໍລິສັດຜະລິດເຈ້ຽຍັກໃຫຍ່ຂອງຍີ່ປຸ່ນ ໂອຈິ ເພເພີ້ (Oji Paper) ກາຍເປັນບໍລິສັດຂ້າມຊາດທຳອິດທີ່ມາລົງທຶນຂະໜາດໃຫຍ່ເພື່ອປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ ໃນລາວ ມີຄວາມຕ້ອງການເນື້ອທີ່ສຳປະທານ 50,000 ເຮັກຕາ. ຫຼັງຈາກບໍລິສັດໂອຈິ ເຂົ້າມາແລ້ວໂຕເລກການລົງທຶນປູກໄມ້ເປັນສິນຄ້າ ກໍ່ດັ່ງຂຶ້ນຢ່າງໄວວາ. ໂຕເລກການລົງທຶນປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ ຈາກກະຊວງການວາງແຜນ ແລະລົງທຶນ ຊີ້ໃຫ້ເຫັນວ່າເພີ່ມຂຶ້ນທົບໜຶ່ງ ຈາກປີ 2004 ຫາ 2006 ເຊິ່ງກົງກັບໂຕເລກມູນຄ່າທີ່ເພີ່ມຂຶ້ນຈາກ 75 ລ້ານ ໂດລາສະຫະລັດໃນປີ 2004 ມາເປັນ 458 ລ້ານໂດລາສະຫະລັດ ໃນປີ 2006. ພ້ອມດຽວກັນ ກໍມີໂຄງການຂະໜາດ ນ້ອຍແລະກາງຢ່າງຫຼວງຫຼາຍນຳເຂົ້າມາ, ໂດຍສະເພາະຈາກປະເທດໃກ້ຄຽງ, ເວລານີ້ ກຸ່ມນັກລົງທຶນຂະໜາດ ພາຍໃຕ້ຊື່ກຸ່ມບໍລິສັດ ກຣາຊິມ ເບີລາ (Grassim-Birla) ຈາກອິນເດຽທີ່ນຳກົ້ນບໍລິສັດໂອຈິ ເຂົ້າມາ, ໄດ້ຮັບເນື້ອທີ່ດິນສຳປະທານ 50,000 ເຮັກຕາ, ບໍ່ດົນມານີ້ ບໍລິສັດເຈ້ຽຍັກໃຫຍ່ຈາກຟິນແລນ ສະໂຕຣາ ເອນໂຊ (Stora Enso) ກໍໄດ້ເຊັນສັນຍາສຳປະທານທີ່ດິນ 35,000 ເຮັກຕາ ເພື່ອປູກຕົ້ນວິກໃນພາກໃຕ້ຂອງລາວ. ໃນທີ່ສຸດ ບໍລິສັດໂອຈິ ເພເພີ້ ກໍສາມາດເອົາດິນສຳປະທານໄດ້ອີກ 30,000 ເຮັກຕາ ໃນພາກໃຕ້ຂອງປະເທດ.

ແນວໃດກໍ່ຕາມ ໃນປະເທດທີ່ອັດຕາເງິນເດືອນພື້ນຖານຂອງພະນັກງານລັດມີພຽງ 30 ໂດລາສະຫະລັດ ແລະຄວາມສາມາດຂອງພະນັກງານລັດໃນການຄຸ້ມຄອງດິນສຳປະທານຍັງອ່ອນແອຢູ່ນັ້ນ, ການສູນເສຽຊັບພະຍາກອນທຳມະຊາດ ແລະ ການພັງທະລາຍຂອງຮູບແບບການທຳມາຫາກິນ ຂອງປະຊາຊົນທ້ອງຖິ່ນ ໄດ້ລະເບີດຂຶ້ນຄຽງ

ຄູ່ກັບການຂະຫຍາຍການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່. ບົດລາຍງານຂອງຫ້ອງການເພື່ອການພັດທະນາເຢຍລະມັນ (GTZ) ໄດ້ຊີ້ໃຫ້ເຫັນວ່າ ປະເທດລາວຂາດກົດລະບຽບຄຸ້ມຄອງການໃຫ້ສຳປະທານດິນ. ບົດລາຍງານຂອງ GTZ ໃນປີ 2006 ຊີ້ໃຫ້ເຫັນວ່າ ມີ ຄວາມເຂົ້າໃຈຫນ້ອຍຫຼາຍກ່ຽວກັບການໃຫ້ເນື້ອທີ່ສຳປະທານທີ່ດິນທີ່ຂະ ຫຍາຍກວ້າງອອກຕື່ມໃນທົ່ວປະເທດ ເຊິ່ງສ່ວນຫຼາຍ ມີສາເຫດມາຈາກການບໍ່ມີເຄື່ອງມືດ້ານແນວຄິດໃນ

ການເຮັດວຽກ ແລະ ບໍ່ມີກົດລະບຽບບໍ່ມີຂັ້ນຕອນໃນການອອກເອກະສານສຳປະທານທີ່ດິນ ທີ່ເຮັດໄປແບບກະແຈກກະຈາຍບໍ່ລວມສູນ.

ນອກຈາກມີຫຼາຍຫນ່ວຍງານທີ່ສາມາດອະນຸຍາດໃຫ້ສຳປະທານດິນແລ້ວ, ຫ້ອງການສຳນັກງານລັດ ທັງລະດັບຊາດ ແຂວງ ແລະ ເມືອງ ກໍ່ສາມາດອອກໃບອະນຸຍາດດິນ ເພື່ອຂະຫຍາຍການປູກ ຕົ້ນໄມ້ໂດຍບໍ່ຕ້ອງພົວພັນຫາຂໍ້ມູນຈາກບ່ອນອື່ນອີກ. ພຽງແຕ່ເບິ່ງດ້ານນີ້ ດ້ານດຽວ ກໍ່ເຫັນແລ້ວວ່າ ມັນນຳໄປສູ່ການອະນຸມັດດິນສຳປະທານຊ້ຳຊ້ອນກັນ ເວົ້າອີກຢ່າງຫນຶ່ງກໍ່ຄື ບັດນີ້ພວກບໍລິສັດປູກຕົ້ນໄມ້ທັງຫຼາຍ ກຳລັງຟ້າວຟັ່ງຊ່ວງຍາດເອົາສິດສຳປະທານທີ່ດິນໄວ້ກ່ອນຈະເສຍສິດ ນັ້ນໃຫ້ບໍລິສັດອື່ນໆ.

ແຕ່ເຖິງວ່າການລົງທຶນປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ຈະເຕີບໃຫຍ່ຂຶ້ນໄວໃນປີຜ່ານໆມາຂະບວນການຈັດສັນເນື້ອທີ່ດິນສຳປະທານກໍຍັງບໍ່ພຽງພໍ. ລາຍງານຫຼາຍບົດຈາກພະນັກງານລັດທີ່ບໍ່ເຫັນດີເຫັນງາມນຳ ແລະຈາກປະຊາຊົນເອງ ຊີ້ໃຫ້ເຫັນວ່າ ໃນຕົວຈິງ ບັນດາບໍລິສັດສຳປະທານທັງຫຼາຍເຮັດໃຫ້ຕົນເອງໄດ້ອະນຸຍາດຈັດສັນທີ່ດິນດ້ວຍການສັບຊ້ອນເອົາພະນັກງານລັດເຂົ້າມາມີບົດບາດ ໂດຍບໍລິສັດເປັນຜູ້ອອກຄ່າໃຊ້ຈ່າຍ ເພື່ອໃຫ້ຈັບຈອງຮັບປະກັນດິນໃຫ້ບໍລິສັດ. ຢູ່ໃນລະ ບົບທີ່ມີການສັບປ່ຽນ ເອົາພະນັກງານຜູ້ທຸກຍາກຂາດເຂີນມາແທນບ່ອນ ພະນັກງານຜູ້ບໍ່ສາມາດ ຫຼືບໍ່ຢາກຊອກທີ່ດິນໃຫ້ໄດ້, ແນ່ນອນວ່າ ມັນບໍ່ເປັນເລື່ອງປະຫຼາດໃຈເລີຍ ທີ່ມັກມີລາຍງານກ່ຽວກັບການສັບປີ້ນປິດບັງຜົນກຳໄລ ອັນເກີນຄວາມເປັນຈິງ ແລະການບັງຄັບຂົ່ມເຫງຊາວບ້ານໃຫ້ໂອນທີ່ດິນໃຫ້ບໍລິສັດປູກຕົ້ນໄມ້.

ໃນທາງທິດສະດີແລ້ວ ກົດຫມາຍປ່າໄມ້ສະບັບຫຼ້າສຸດໄດ້ກຳນົດໃຫ້ຢ່າງຈະແຈ້ງວ່າ "ອະນຸຍາດໃຫ້ຂະຫຍາຍເນື້ອທີ່ປູກໄມ້ເປັນສິນຄ້າ ໃສ່ແຕ່ "ດິນເສື່ອມໂຊມ" ເທົ່ານັ້ນ, ແຕ່ຍາມໃດ ປ່າດົງຕຶບຫນາ ກໍ່ຍັງຖືກບຸກເບີກຕັດທາງໃຫ້ແກ່ການຂະຫຍາຍເນື້ອທີ່ປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ (ສ້າງລາຍຮັບຢ່າງສະບາຍໆຈາກການຂາຍໄມ້ພ້ອມ). ໃນໃຈກາງແຂວງບໍລິຄຳໄຊ ມີການລາຍງານ ຂອງພະນັກງານຫ້ອງການພັດທະນາວ່າມີການຕັດໄມ້ເປັນຢ່າງຫນັກຫນ່ວງ ເຊິ່ງພວກຕັດໄມ້ອ້າງວ່າ ເປັນບໍລິສັດປູກຕົ້ນປາມນ້ຳມັນ ກັບຕົ້ນພ້າວ ແລະ ພວກນັກວິຊາການອິດສະຫຼະຫຼາຍຄົນ ໄດ້ບັນທຶກຂໍ້ມູນເລື່ອງການຕັດໄມ້ທຳລາຍປ່າດົງ ທີ່ມີຢູ່ຕາມມະຊາດ ແລະ ທີ່ເຄີຍຖືຂຸດຄົ້ນ ແລ້ວໃຫ້ແປນກ້ຽງ ສຳລັບມອບໃຫ້ "ໂຄງການຊີ້ນຳ" ປູກຕົ້ນວິກ ຂອງ ບໍລິສັດໂອຈິ ເພ ເພີ້ ໃນພື້ນທີ່ດັ່ງກ່າວ.

ອະນາຄົດຂອງຊຸມຊົນຊາວບ້ານ ຜູ້ທີ່ຍັງທຳມາຫາກິນຢູ່ກັບປ່າໄມ້ ກຳລັງມືດມົນລົງ. ພາຍໃຕ້ກົດຫມາຍໃນປັດຈຸບັນການຄອບຄອງດິນຂອງຊຸມຊົນຂັ້ນບ້ານບໍ່ມີຄວາມຫມັ້ນຄົງ, ຍ້ອນວ່າປ່າໄມ້ທັງຫມົດຖືວ່າເປັນຊັບສົມບັດຂອງລັດ. ລັດຖະບານລາວ ຫມູນໃຊ້ແຜນການຂະຫຍາຍການ ປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ມາຫຼາຍປີແລ້ວ ໃຫ້ເປັນເຄື່ອງມື ເພື່ອຂັດຂວາງການຖາງປ່າເຮັດໄຮ່ ຫລຸດໄລຍະເວລາການປະຖິ້ມທີ່ດິນປ່າເຫຼົ່າລົງ ພ້ອມນັ້ນ ກໍ່ຫລຸດຄວາມຫມັ້ນຄົງ ທາງດ້ານສະບຽງອາຫານລົງນຳ ໃນຊຸມຊົນຫ່າງໄກສອກຫຼີກ ນອກຈາກປະຊາຊົນຈະສູນເສຍດິນປູກຝັງຫຼາຍຮ້ອຍເຮັກຕາໃຫ້ຂະບວນການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ແລ້ວຍັງໄດ້ຮັບ ຜົນປະໂຫຍດຫນ້ອຍທີ່ສຸດຈາກຂະບວນການນີ້. ເວລາເລີ່ມຕົ້ນປູກຕົ້ນໄມ້ຕັ້ງແຮກພ້ອມໆກັບລະ ດູນາປີ ທີ່ຕ້ອງໄດ້ຈ້າງແຮງງານຈາກບ່ອນອື່ນ. ເວລາມີວຽກໃຫ້ຊາວບ້ານເຮັດ ກໍ່ບໍ່ເປັນປົກກະຕິ ທັງມີຢ່າງຈຳກັດ.

ມາຮອດເດືອນພຶດສະພາ ປີ 2007 ລັດຖະບານລາວ ບໍ່ສາມາດຄວບຄຸມສະຖານະການການ ສຳປະທານທີ່ດິນ

ແລະ ມີລາຍງານຫຼາຍຂຶ້ນເລື້ອຍໆ ແມ່ນແຕ່ສື່ຂອງລັດເຊິ່ງທຳມະດາຈະມິດງຽບ ກໍ່ຍັງສະເຫນີກ່ຽວກັບຄວາມຫຍຸ້ງຍາກລຳບາກທີ່ຊາວບ້ານກຳລັງພະເຊີນຢູ່ທີ່ກ່ຽວຂ້ອງກັບການປູກໄມ້ ເປັນສິນຄ້າຂະຫນາດໃຫຍ່. ນາຍົກລັດຖະມົນຕີລາວ ໄດ້ອອກດຳລັດຍຸດຕິການໃຫ້ທີ່ດິນສຳປະທານໃນທົ່ວປະເທດເປັນການຊົ່ວຄາວ. ແຕ່ວ່າດຳລັດຍຸດຕິຊົ່ວຄາວສະບັບນີ້ກໍ່ບໍ່ສາມາດຢັບຢັ້ງ ການໃຫ້ສຳປະທານທີ່ດິນທົ່ວປະເທດໄດ້, ຍ້ອນຄວາມບໍ່ຮັບຮູ້ຂອງພະນັກງານຂັ້ນນຳຂອງແຂວງ ຫຼື ດ້ວຍວິທີການສວຍໃຊ້ປ່ອງຮົ່ວ(ຈຸດອ່ອນ)ຂອງດຳລັດ ທີ່ອະນຸຍາດໃຫ້ບໍລິສັດ ທີ່ໄດ້ເຊັນສັນ ຍາສຳປະທານດິນແລ້ວ ສາມາດສືບຕໍ່ນຳໃຊ້ທີ່ດິນໄດ້ ຫຼື ດ້ວຍການອະນຸມັດເນື້ອທີ່ດິນ 100 ເຮັກຕາໃຫ້ບໍລິສັດດຽວ ຫຼາຍໆເທື່ອ.

ຂະນະທີ່ມີການເຄື່ອນໄຫວໄປໃນທາງທີ່ດີຂຶ້ນຂອງລັດຖະບານລາວ ກັບອົງການໃຫ້ທຶນ ໃນການຊີ້ໃຫ້ເຫັນເຖິງຄວາມລົ້ມແຫຼວຂອງການລົງທຶນປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ໃນລາວ, ເວລາເທົ່ານັ້ນ ຈະພິສູດໄດ້ວ່າ ລັດຖະບານລາວຈະສາມາດຄວບຄຸມແຜນການຂະຫຍາຍການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ທີ່ກຳລັງແລ່ນຫນີ ແລະ ປ້ອງກັນຊັບພະຍາກອນທຳມະຊາດ ທີ່ມີຄວາມສຳຄັນຕໍ່ຊຸມຊົນຊາວບ້ານ ແລະ ສະເຖຽລະພາບຂອງປະເທດຊາດໄວ້ໄດ້ຫຼືບໍ່.

***ເກັບກຳບົດລາຍງານ ຈາກການຢ້ຽມຢາມນັກວິຊາການ World Rainforest Movement (WRM) ໃນປີ 2008.***

## ປະເທດໄທ: ຊ່ອງທາງອອກຂອງຊາວສວນ ເມື່ອລາຄາຢາງກະຕັງກະຕິ້ວຕົກຕ່ຳ

ຢາງກະຕັງກະຕິ້ວ ເປັນສ່ວນນຶ່ງຂອງຊີວິດຄົນພາກໃຕ້, ທັງກ່ຽວຂ້ອງກັບວັດທະນະທຳ ແລະ ເສດຖະກິດມາໄດ້ 108 ປີມາແລ້ວ. ລະບົບການຜະລິດກະສິກຳພືດຊະນິດດຽວ ໄດ້ເຂົ້າໄປ ແທນບ່ອນລະບົບການເຮັດສວນຢາງແບບພື້ນເມືອງ ທີ່ຢາງກະຕັງກະຕິ້ວ ແມ່ນເຄີຍຖືກປູກສັບຫວ່າງກັບຕົ້ນໄມ້ກິນຫມາກອື່ນໆ ແລະ ເກີດໃນປ່າທຳມະຊາດເຊິ່ງເອີ້ນກັນວ່າ "ສວນຊົມຣົມ" ຫຼື "ສວນປ່າປະສົມ". ປະຈຸບັນ ແນວທາງການສົ່ງເສີມການປູກຕົ້ນຢາງ ເຊິ່ງໄດ້ຮັບການສົ່ງເສີມຈາກກອງທຶນສົງເຄາະສວນຢາງຂອງລັດຖະບານ ການສົ່ງເສີມໃຫ້ຂະຫຍາຍເນື້ອທີ່ປູກຢາງ, ລາຄາຢາງທີ່ສູງຂຶ້ນ ຍ້ອນຕະຫຼາດໂລກທີ່ມີຄວາມຕ້ອງການຢາງທຳມະຊາດສູງ ເພື່ອຜະລິດສິນຄ້າອຸດສາຫະກຳຢາງຫຼາຍແບບຫຼາຍແນວ ນຳໄປສູ່ການຂະຫຍາຍເນື້ອທີ່ປູກ ແຜ່ລາມເຂົ້າໄປໃນເນື້ອທີ່ປ່າຢູ່ພາກໃຕ້ຂອງປະເທດ ແລະ ເຂົ້າໄປຮອດປ່າຫົວໄຮ່ປາຍນາໃນເຂດພາກອີສານ ແລະ ປ່າທຳມະຊາດທາງພາກຕາເວັນອອກ. ຕົ້ນຢາງແມ່ນພືດຊະນິດໃຫມ່ທີ່ໄດ້ຮັບການສົ່ງເສີມຈາກລັດຖະບານເຊິ່ງທັງກົມປ່າໄມ້ ແລະ ຫນ່ວຍງານອຸດສາຫະກຳປ່າໄມ້ ແນ່ໃສ່ເພື່ອສ້າງລາຍຮັບໃຫ້ ກັບຫນ່ວຍງານ ຈາກການປູກຕົ້ນຢາງກະຕັງກະຕິ້ວເປັນສິນຄ້າໃນພື້ນທີ່ຂະຫນາດໃຫຍ່.

ມີປັດໄຈອັນໃດແດ່ ທີ່ກຳນົດລາຄາຢາງກະຕັງກະຕິ້ວໃນປະເທດໄທ? ແນ່ນອນແມ່ນຄວາມຕ້ອງການຂອງຕະຫຼາດ ແລະ ການຜະລິດສິນຄ້າຂອງໂລກ ແມ່ນປັດໄຈທີ່ກຳນົດລາຄາຢາງກະຕັງກະຕິ້ວ ແຕ່ວ່າການຕັ້ງລາຄາກໍ່ຍັງໄປຂຶ້ນກັບມືເລີກລັບເຈົ້າຈຳນວນຫນຶ່ງຢູ່. ບໍ່ວ່າເປັນການເກງກຳໄລລ່ວງຫນ້າ ການຜູກຂາດຂອງກຸ່ມທຶນຂະຫນາດໃຫຍ່

ຕະຫຼາດຢາງກະຕັງກະຕິ້ວໃນປະເທດໄທຖືກຄວບຄຸມໂດຍນັກລົງທຶນຈາກສິງກະໂປ ມາເລຊຽ ໂດຍ ນັກລົງທຶນຄົນໄທມີບົດບາດຂຶ້ນຕື່ມໃນໄລຍະຫລັງ ຕ່ໃນອີກທາງຫນຶ່ງ ອຸດສາຫະກຳຜະລິດຕະພັນຢາງກະຕັງກະຕິ້ວ ຊ້ຳຜັດຢູ່ໃນກຳມືຂອງບັນດາປະເທດອຸດສາຫະກຳ ເຊັ່ນ: ເຢຽລະມັນ, ອີຕາລີ, ອັງກິດ ແລະອາເມຣິກາ, ເຊິ່ງມີຄວາມສຳພັນກັບນັກລົງທຶນຄົນໄທ. ລາຄາຢາງກະຕັງກະຕິ້ວ ຍັງກຳນົດໂດຍລາຄານ້ຳມັນດິບ ເຊິ່ງເປັນປັດໄຈສຳຄັນໃນການຜະລິດຢາງທຽມເວລາທີ່ລາຄານ້ຳມັນແພງ, ຄ່າໃຊ້ຈ່າຍໃນການຜະລິດຢາງທຽມກໍ່ຕ້ອງແພງຂຶ້ນນຳນັ້ນ ໄດ້ເຮັດໃຫ້ບັນດາປະເທດທ

ໃຊ້ຢາງທຽມ ຫັນມາໃຊ້ຢາງທຳມະຊາດ. ແຕ່ວ່າ ຖ້າລາຄາຢາງທຳມະຊາດແພງໂພດສຳລັບຜູ້ຜະລິດອຸດສາຫະກຳ, ພວກເຂົາກໍ່ຫວນຄືນມາໃຊ້ຢາງທຽມ ເຊິ່ງເປັນຜົນໃນມີການປັບປ່ຽນລາຄາຢາງທຳມະຊາດໃຫ້ຫລຸດລົງ.

ປະຈຸບັນນີ້ ລາຄາຢາງກະຕັງກະຕິ້ວ ຍັງຂຶ້ນກັບການເຂົ້າມາແຊກແຊງຂອງຜູ້ກຳສາງເກັບຢາງ (rubber stock) ຖ້າມີປະລິມານຢາງຄ້າງສາງຢູ່ຫຼາຍໂພດ, ປະເທດຕ່າງໆ ຈະຂາຍຢາງໃນສາງໃຫ້ບໍລິສັດຜູ້ຜະລຶດ ແລະ ຊື້ຢາງທີ່ຜະລິດໃນປີນັ້ນເຂົ້າສາງຫນ້ອຍລົງ. ສິ່ງນີ້ມີຜົນກະທົບຕໍ່ລາຄາຢາງໃຫ້ຫລຸດລົງ. ຖ້າຢາງລົ້ນຕະຫລາດເປັນເວລາຕິດຕໍ່ກັນດົນ, ປະເທດທີ່ຜະລິດຢາງ ກໍ່ຈະໃຫ້ມີການຕົກລົງຮ່ວມກັນເພື່ອຫລຸດປະລິມານໃນການຜະລິດຢາງກະຕັງກະຕິ້ວລົງພ້ອມໆກັນ.

ການເກງກຳໄລໃນຕະຫຼາດລ່ວງຫນ້າ ກໍ່ເປັນອີກປັດໄຈຫນຶ່ງ ທີ່ມີຜົນຕໍ່ລາຄາຢາງກະຕັງກະຕິ້ວ. ຕະຫຼາດທີ່ມີອິດທິພົນແມ່ນຕະຫຼາດຍີ່ປຸ່ນ ແລະ ສິງກະໂປ. 90 ສ່ວນຮ້ອຍຂອງການເຄື່ອນໄຫວໃນຕະຫຼາດຍີ່ປຸ່ນ (ໂຕກຽວ ແລະໂກເບ) ເປັນການເກງກຳໄລໃນຕະຫຼາດລ່ວງຫນ້າ ສ່ວນທີ່ເຫຼືອເປັນການຊື້ຂາຍລະຫວ່າງຜູ້ນຳເຂົ້າ ແລະພໍ່ຄ້າຄົນກາງ. ຢາງກະຕັງກະຕິ້ວທີ່ຊື້ຂາຍ ສ່ວນຫລາຍເປັນຢາງແຜ່ນລົມຄວນຂອງໄທ ຍ້ອນແນວນັ້ນ ຕະຫຼາດຍີ່ປຸ່ນແມ່ນມີອິດທິພົນກັບໄທຫລາຍ ຕະຫຼາດສິງກະໂປ ເປັນຕະຫຼາດທີ່ມີຄວາມຫມັ້ນຄົງເຊື່ອຖືໄດ້, ມັນແມ່ນຂົວຕໍ່ການຂົນສົ່ງ ແລະ ເປັນສູນກາງການເງິນ ການທະນາຄານ ແລະ ອື່ນໆອີກ. ແລະ ຢູ່ໃກ້ກັບສູນກາງການຜະລິດຢາງກະຕັງກະຕິ້ວສາມແຫ່ງໃນອາຊີ ຄື ໄທ ມາເລເຊຽ ແລະ ອິນໂດເນເຊຽ. ສາມປະເທດນີ້ ຮວມແລ້ວກວມເອົາ 70 ສ່ວນຮ້ອຍຂອງການຜະລິດຂອງໂລກ. ໃນທຳນອງດຽວກັນ 80 ສ່ວນຮ້ອຍຂອງການຄ້າໃນຕະຫຼາດສິງກະໂປ ແມ່ນກຳລັງຕໍ່ລອງໃນຕະຫຼາດອະນາຄົດ, ທີ່ເຫຼືອແມ່ນອີງໃສ່ການຂົນສົ່ງສິນຄ້າ.

ປະເທດໄທເປັນປະເທດທີ່ສົ່ງອອກຢາງກະຕັງກະຕິ້ວຫຼາຍທີ່ສຸດໃນໂລກ. ແຕ່ວ່າລາຄາ ຊ້ຳຜັດຂຶ້ນ ກັບຕະຫຼາດສິງກະໂປ ແລະ ຍີ່ປຸ່ນ. ລັດຖະບານໄທບໍ່ເຄີຍເຂົ້າ ໄປມີບົດບາດໃນການ ຕໍ່ລອງລາຄາຢາງຂອງຕະຫຼາດໂລກ. ລັດຖະບານບໍລິຫານ ແລະ ຄວບຄຸມລາຄາຢາງແບບເປັນຝ່າຍຕັ້ງຮັບແຮງກົດດັນຈາກປະເທດຕ່າງ ໆ ແລະອົງການສາກົນ. ແລະ ລັດຖະບານໄທ ມັກໃຊ້ຍຸດ ທະສາດແຊກແຊງ ເພື່ອໃຫ້ລາຄາຢາງຄົງທີ່ ເພື່ອຫາສຽງສະຫນັບສະຫນູນໃນການເລືອກຕັ້ງຈາກຊາວສວນຢາງ. ຍົກຕົວຢ່າງ ໃນສະໄຫມຂອງລັດຖະບານ ຊວນ ຫຼີກໄພ ແລະ ລັດຖະບານຂອງນາຍພົນເອກເຊົາວະລິດ ຍົງໃຈຍຸດ, ມີການເຂົ້າໄປແຊກແຊງລາຄາຢາງຮອດ 6 ເທື່ອ, ຮັບຊື້ຢາງເປັນຈຳນວນທັງຫມົດ 1.3 ລ້ານໂຕນ ເປັນເງິນ 25,394 ລ້ານບາດ. ຜົນທີ່ໄດ້ຮັບອັນຫນຶ່ງຈາກປະຕິບັດການດັ່ງກ່າວແມ່ນລັດຖະບານຕ້ອງສູນເສຽເງິນເກືອ 6,267 ລ້ານບາດ ສ່ວນຫຼາຍມາຈາກການໂກງກິນໃນລະດັບກະຊວງ. ມີການໃຊ້ວິທີການຍົວະເຍົ້າ (Lobby), ການເກັບກັກຢາງໄວ້ໃນສາງ, ການລັກເອົາ ແລະ ການກົດລາຄາໃຫ້ຕ່ຳລົງ ໃນໄລຍະປີ 1993-1994 ພົບວ່າ ມີການໃຊ້ສັນຍາຂາຍໃບດຽວຊ້ຳກັນກວ່າ 50 ເທື່ອໂດຍບໍ່ມີການສົ່ງສິນຄ້າ.

ນອກຈາກນີ້ແລ້ວ ລັດຖະບານໄດ້ຜ່ານກົດຫມາຍເພື່ອຄວບຄຸມລາຄາຢາງ, ກຳນົດເນື້ອທີ່ປູກ ຄວບຄຸມຊະນິດປູກ. ເຮັດໃຫ້ຊາວສວນບໍ່ສາມາດພັດທະນາການຜະລິດຢາງຂອງຕົນເອງ. ລັດທະບານອ້າງວ່າ ການຄວບຄຸມດັ່ງກ່າວອຳນວຍໃຫ້ຢາງຈາກໄທເຂົ້າໄປແຂ່ງຂັນກັບຕະຫຼາດໂລກໄດ້. ແຕ່ວ່າໂຄງສ້າງທີ່ເປັນບັນຫານີ້ ຊ້ຳນຳໄປສູ່ການຜູກຂາດໂດຍກຸ່ມທີ່ມີອຳນາດ ຄວບຄຸມການຜະລິດແລະການຕະຫຼາດຂອງຢາງກະຕັງກະຕິ້ວ, ຂະນະທີ່ຊາວສວນກາຍເປັນຜູ້ຕອບສະຫນອງຢາງໃຫ້ຕະຫຼາດພາຍໃນ ແລະຕ່າງປະເທດເທົ່ານັ້ນ.

ເຫັນໄດ້ແຈ້ງວ່າ ຊາວສວນຢາງເປັນພຽງຜູ້ຕອບສະຫນອງຕົ້ນທາງຂອງຜົນຜະລິດເທົ່ານັ້ນ, ບໍ່ມີ ສິດມີສຽງຕໍ່ລອງການຕັ້ງລາຄາຢາງເລີຍ. ປີ 2007 ຕົ້ນທຶນຂອງຊາວສວນຢາງໄທໃນການຜະລິດ ຢາງແຜ່ນດິບ ແລະ ນ້ຳຢາງສົດບໍ່ໄດ້ຄິດໄລ່ຄ່າດິນ ແລະ ຄ່າແຮງງານ. ປະມານກິໂລລະ 35 ບາດ, ຖ້າທຽບໃສ່ລາຄາທີ່ຂຶ້ນໆລົງໆຂອງຢາງແຜ່ນ ແລະ ຢາງດິບ ທີ່ຢູ່ລະຫວ່າງ 50-100 ບາດ ຕໍ່ກິໂລແລ້ວກໍ່ຖືວ່າຊາວສວນຢາງໄດ້ຄ່າຕອບແທນດີຢູ່.

ແນ່ນອນວ່າ ຖ້າປຽບທຽບລາຄາຢາງແຜ່ນດິບຈາກທ້ອງຖິ່ນ ໃສ່ກັບລາຄາຕະຫຼາດ, ລາຄາລະດັບແຂວງກໍ່ສູງກວ່າ. ປີກາຍນີ້ (ປີ 2007) ລາຄາຢາງດິບໃນທ້ອງຖິ່ນແມ່ນ 47.14 ບາດ ຕໍ່ກິໂລ, ຂະນະທີ່ລາຄາຢູ່ຫາດໃຫຍ່ (ຈັງຫວັດສົງຂາ) ແມ່ນ 73.05 ບາດຕໍ່ກິໂລ ແລະ ລາຄາ ປະມູນແມ່ນ 74.57 ບາດ (19 ຕຸລາ 2007). ປີນີ້ຢູ່ຫາດໃຫຍ່ ລາຄາແຜ່ນຢາງຢ້າງແຫ້ງຄຸນນະພາບລະດັບ 3 ໄດ້ລາຄາພຽງ 35.73 ບາດຕໍ່ກິໂລ. (4 ທັນວາ 2008).
ດັ່ງນັ້ນ ຄໍາຖາມມີຄື: ດຽວນີ້ເມື່ອລາຄາຢາງຕົກຕໍ່າອີກ, ລັດຖະບານຈະເອົາໄປແຊກແຊງດ້ວຍວິທີເກົ່າ ເພື່ອແກ້ບັນຫາຢູ່ປາຍເຫດ ແລະ ໃຊ້ເງິນພາສີຈາກປະຊາຊົນຢ່າງບໍ່ມີຫມາກມີຜົນມັນ ຮ້າຍກວ່າ "ການພາຍເຮືອໃນອ່າງອາບນໍ້າ" ຫຼືບໍ່?

ໃນເວລາດຽວກັນ ຊາວສວນຢາງກໍຫາວິທີແກ້ໄຂບັນຫາດ້ວຍຕົນເອງ. ໃນກໍລະນີຂອງຊຸມຊົນ "ໄມ້ຮຽງ" ຊາວສວນພັດທະນາອຸດສາຫະກໍາໃນຊຸມຊົນ ທີ່ມີສະມາຊິກ ຈາກ 11 ບ້ານໃກ້ຄຽງ ເພື່ອຜະລິດຢາງກະຕັງກະຕິ້ວ. ຊາວສວນຢາງຍັງພ້ອມກັນເຮັດສວນປ່າປະສົມ ເພື່ອປ້ອງກັນບັນ ຫາທີ່ຕ້ອງເອື່ອຍອີງໃສ່ແຕ່ການຂາຍຢາງກະຕັງກະຕິ້ວພຽງຢ່າງດຽວ. ພວກເຂົາປູກທັງຕົ້ນຢາງ ແລະ ຕົ້ນໄມ້ໃຫ້ຫມາກອື່ນໆ ພວກເຂົາເຮັດນາ ແລະ ທໍາການຄ້າຂາຍເລັກໆນ້ອຍໆໃນຄົວເຮືອນ. ໃນເຂດປູກຢາງ ການປູກພືດຊະນິດອື່ນແຊມເປັນການປັບປຸງສະພາບດິນໄປພ້ອມ. ຊາວສວນໃນຊຸມຊົນ ພາກັນໃຊ້ຝຸ່ນທໍາມະຊາດ (ຄອກ) ທົນຝຸ່ນເຄມີ ເຊິ່ງຫລຸດຜ່ອນຄ່າໃຊ້ຈ່າຍລົງ. ນອກນັ້ນ ພວກເຂົາຍັງມີອາຫານການກິນອຸດົມສົມບູນຂຶ້ນ. ການແກ້ບັນຫາດ້ວຍຫຼາຍວິທີຜະສົມຜະສານກັນນີ້ ຜ່ານການທົດລອງນໍາໃຊ້ໂດຍຄອບຄົວທີ່ກຸ້ມຕົນເອງ ແລະ ເຮັດວຽກໃນລະບົບທຶນນໍາ.

***ໂດຍ ສະຍາມົນ ໄກຢູຣະວົງ, ໂຄງການສ້າງຈິດສໍານຶກສິ່ງແວດລ້ອມ (Environment Awareness Building Project) email: noksayamol@yahoo.com***

## ແຜນການໃຫຍ່ເພື່ອປູກພືດເຊື້ອເພີງຊີວະພາບ (agro-fuel) ເປັນສິນຄ້າ ໃນເນື້ອທີ່ຂະຫນາດໃຫຍ່ໃນປະເທດໄທ ກໍາລັງຜະເຊີນຫນ້າກັບຄວາມບໍ່ແນ່ນອນ

ປະເທດໄທກໍາລັງວາງແຜນການໃຫຍ່, ໂດຍສະເພາະໃນ 10 ປີຕໍ່ຫນ້າ, ເພື່ອເພີ່ມການຜະລິດເຊື້ອເພີງຊີວະພາບ (agro-fuel) ໂດຍສະເພາະຜ່ານການຂະຫຍາຍເນື້ອທີ່ປູກປາມນໍ້າມັນເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່. ແຕ່ແຜນການດັ່ງກ່າວ ຍັງບໍ່ມີຄວາມກ້າວຫນ້າໄປຮອດໃສເທື່ອ ຍ້ອນລາຄາຂອງວັດຖຸດິບ ເຊັ່ນປາມນໍ້າມັນ ແລະນໍ້າຕານ ຍັງບໍ່ຫມັ້ນຄົງ ພ້ອມທັງຄວາມຫ່ວງໃຍ ຂອງສັງຄົມຕໍ່ສິ່ງແວດລ້ອມທີ່ເພີ່ມຂຶ້ນ.

ປະເທດໄທ ມີເຊື້ອເພີງຊີວະພາບສອງປະເພດ: ແກັດໂຊຮອນ (gasohol) ເປັນນໍ້າມັນ (gasoline) ປະສົມເອຕາໂນນ (ethanol) ແລະບາຍໂອດີເຊນ (biodiesel) ແກັດໂຊຮອນ ທີ່ໄດ້ຈາກນໍ້າມັນ 90 ສ່ວນຮ້ອຍ ປະສົມກັບເອຕາໂນນ 10 ສ່ວນຮ້ອຍ ເອີ້ນວ່າອີ10 (E10) (Gonesalves 2006).ເກືອບ 90 ສ່ວນຮ້ອຍ ຂອງເອຕາໂນນໃນປະເທດໄທ ກັ່ນຈາກກາກນໍ້າຕານ (ບົ່ມສິ່ງເສດເຫຼືອຈາກໂຮງງານນໍ້າຕານ) ແລະ ກາກມັນຕົ້ນ. ປີ 2007 ປະເທດໄທ ຜະລິດ ເອຕາໂນນໄດ້ຮອດ 192.8 ລ້ານລິດ (APEC 2008).

ແຕ່ວ່າມູນຄ່າການຜະລິດຈາກອ້ອຍມີລາຄາສູງ ແລະ ປະລິມານທີ່ກັ່ນອອກມາເປັນເອຕາໂນນມີ ຫນ້ອຍຫຼາຍ ດ້ວຍວ່າ ນໍ້າອ້ອຍສ່ວນໃຫຍ່ ຖືກສະກັດໄປເຮັດນໍ້າຕານ. ດ້ວຍເຫດນີ້ ປະເທດໄທ ເຊິ່ງເປັນປະເທດທີ່ຜະລິດມັນຕົ້ນຫຼາຍກວ່າຫມູ່ໃນອາຊີ ໂດຍມີປະລິມານສະເລ່ຍຮອດ 20 ລ້ານ ໂຕນ/ປີ, ມີຄວາມຄາດຫວັງສູງຂຶ້ນໃນການໃຊ້ມັນຕົ້ນເປັນວັດຖຸດິບ ຜະລິດເອຕາໂນນ (Artachinda, Gonesalves 2006).
ນໍ້າມັນບາຍໂອດີເຊນ (biodiesel) ຜະລິດຈາກການ "ແຍກນໍ້າຜ່ານອິນຊີວັດຖຸ" (transesterification) ຈາກ

ນ້ຳມັນຂອງພືດດ້ວຍແອລກໍຮໍ (alcohol), ທຳມະດາແລ້ວ ມັກໃຊ້ເອຕາໂນນ ແລະ ປົນກັບນ້ຳມັນກາຊວນອີກເທື່ອຫນຶ່ງ. ຢູ່ປະເທດໄທ ນ້ຳມັນຈາກພືດທີ່ມັກ ນຳມາໃຊ້ແມ່ນນ້ຳມັນປາມ (ຖົ່ວເຫຼືອງ, ຄາໂນລາ (canola) ຫຼືເຣບຊີດ (rapeseed), ແກ່ນດອກ ຕາເວັນ ແລະຖົ່ວດິນ ກໍນຳມາໃຊ້ໄດ້ຄືກັນ). ບີ2 (B2) ມີບາຍໂອດີເຊນ 2 ສ່ວນຮ້ອຍ ນ້ຳມັນກາຊວນ 98 ສ່ວນຮ້ອຍ , ສູດ10 ສ່ວນຮ້ອຍ ປະສົມກາຊວນ ເອີ້ນວ່າ ບີ10 (Gonesalves 2006).ໃນປີ 2007 ປະເທດໄທຜະລິດ ນ້ຳມັນບາຍໂອດີເຊນໄດ້ 58 ລ້ານລິດ. ໃນປັດຈຸບັນ ປະເທດໄທມີໂຮງງານຜະລິດນ້ຳມັນບາຍໂອດີເຊນ 9 ແຫ່ງ ເຊິ່ງສາມາດຜະລິດນ້ຳມັນໄດ້ 655 ລ້ານລິດຕໍ່ປີ (APEC 2008) ປາມນ້ຳມັນແມ່ນວັດຖຸດິບເພື່ອຜະລິດນ້ຳມັນບາຍໂອດີເຊນໃນປະເທດໄທ. ຕົ້ນປາມນ້ຳມັນໃນເນື້ອທີ່ 1 ເຮັກຕາ ໃຫ້ນ້ຳມັນດິບ (ຫຍາບ)ໄດ້ 4-5 ໂຕນ ຫມາຍຄວາມວ່າ ຫຼາຍກວ່າພືດໃຫ້ນ້ຳມັນອື່ນໆທີ່ປູກຂາຍກັນຮອດ 5 ຫາ10 ເທົ່າ (Gonesalves 2006).

ທຸລະກິດປາມນ້ຳມັນປະເທດໄທ ໃຫຍ່ເປັນອັນດັບ 3 ຮອງຈາກ ອິນໂດເນເຊຍ ແລະ ມາເລເຊຍ. ປັດຈຸບັນ ເນື້ອທີ່ທີ່ປູກຕົ້ນປາມນ້ຳມັນໃນປະເທດໄທມີ 320,000 ເຮັກຕາ (IPS, 2008b) ກວ່າ 40 ສ່ວນຮ້ອຍ ຢູ່ໃນເຂດແຂວງພາກໃຕ້ ໂດຍສະເພາະ ຈັງຫວັດກະບີ່, ສຸຣາດທານີ ແລະ ຊຸມພອນ. ສ່ວນພາກຕາເວັນອອກສຽງເຫນືອ ອີສານ)ມີປະມານ 2,362 ເຮັກຕາ ສ່ວນຫຼາຍໃນແຂວງກາລະສິນ ແລະ ນະຄອນລາດຊະສີມາ (Nok Sayamol, pers.comm).

ຜົນຜະລິດນ້ຳມັນປາມດິບຕໍ່ປີໄດ້ 1.3 ລ້ານໂຕນ ໃນນັ້ນ 800,000 ໂຕນ ຖືກສົ່ງໄປພາກສ່ວນຜະລິດອາຫານ. ທີ່ຍັງເຫຼືອ 500,00 ໂຕນລົງໄປຫາທຸລະກິດທີ່ບໍ່ແມ່ນອາຫານ, ອີກ 420,000 ໂຕນເພື່ອໃຊ້ ໃນການຜະລິດ ບີ2 (B2) . ສຳລັບການຜະລິດ ບີ5 (B5) ຕ້ອງການນ້ຳມັນປາມ ຢ່າງຫນ້ອຍ 600,000 ໂຕນ.

ລັດຖະບານໄດ້ສ້າງຄະນະເຮັດວຽກຂຶ້ນໃນກະຊວງກະເສດ ແລະ ສະຫະກອນ ແລະ ໃນກະຊວງພະລັງງານ, ເອີ້ນວ່າ "ຄະນະກຳມະການສົ່ງເສີມ ແລະພັດທະນາພືດເຊື້ອເພີງຊີວະພາບ (CBDP) Preechajarn et al. 2008). ທາງຄະນະກຳມະການໄດ້ຕັ້ງເປົ້າໝາຍໄວ້ ພາຍໃນ 5 ປີ ນັບແຕ່ປີ2008 ໄປ ຈະຂະຫຍາຍເນື້ອທີ່ປູກຕົ້ນປາມນ້ຳມັນໃຫ້ໄດ້ 2.5 ລ້ານໄຣ່ (400,000 ເຮັກຕາ) (APEC 008).

ເພື່ອພັດທະນານ້ຳມັນບາຍໂອດີເຊນ, ລັດຖະບານໄທ ໄດ້ປະກາດ "ແຜນຍຸດທະສາດເພື່ອສົ່ງເສີມແລະພັດທະນານ້ຳມັນບາຍໂອດີເຊນ" ໃນເດືອນມັງກອນ ປີ 2005. ແຜນແມ່ນເພື່ອທົດແທນ ການໃຊ້ນ້ຳມັນກາຊວນ 10 ສ່ວນຮ້ອຍດ້ວຍການເພີ່ມການຜະລິດຈາກຕົ້ນປາມນ້ຳມັນ, ສົ່ງເສີມໃນຂັ້ນຊຸມຊົນ ແລະ ຜະລິດເປັນສິນຄ້າໃຫ້ໄດ້ໃນປີ 2012. ນອກຈາກນັ້ນແລ້ວ ໃນເດືອນກຸມພາ ປີ 2008 ລັດຖະບານຍັງໄດ້ປະກາດເປົ້າຫມາຍໃນການໃຊ້ນ້ຳມັນສູດ ບີ2 ເຊິ່ງຮຽກຮ້ອງໃຫ້ມີການຜະລິດນ້ຳມັນບາຍໂອດີເຊນ 420,000 ໂຕນຕໍ່ປີ (APEC 2008).

ແຜນຍຸດທະສາດ ໄບໂອດີເຊນ (biodiesel strategy) ຂອງລັດຖະບານ ກໍ່ເພື່ອສະຫນັບສະຫນູນ ການປູກປາມນ້ຳມັນ ແລະ ຕົ້ນຫມາກເຍົາເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ມີມູນຄ່າລົງທຶນ ປະມານ 70 ພັນລ້ານບາດ (1,75 ພັນລ້ານໂດລາສະຫະລັດ) (Gonesalves 2006, IPS 2008a) ໂດຍສະເພາະໃນເຂດແຂວງພາກໃຕ້, ເນື້ອທີ່ດັ່ງກ່າວ ຍັງຖືກຍົກໃຫ້ເປັນເຂດຂອງຄະນະກຳມະການພິເສດ ພາຍໃຕ້ຄະນະກຳມະການເພື່ອການລົງທຶນ (BOI), ທາງລັດຖະບານມີທຶນໃຫ້ 50 ລ້ານ ໂດລາສະຫະລັດ ເພື່ອປູກຕົ້ນປາມນ້ຳມັນ (Griggers 2004).

ແຜນການໄລຍະຍາວ ເພື່ອປູກພືດເຊື້ອເພີງ ຂອງປະເທດໄທ:

1. ຂະຫຍາຍເນື້ອທີ່ພາຍໃນ ເພື່ອປູກປາມນ້ຳມັນເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ໃຫ້ໄດ້ 4 ລ້ານໄຣ່ (0.67 ລ້ານເຮັກຕາ) ເພື່ອຕອບສະຫນອງນ້ຳມັນບາຍໂອດີເຊນ 4.8 ລ້ານລິດ ຕໍ່ມື້.
2. ຈັດຕັ້ງແຜນປູກປາມນ້ຳມັນເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ກວມ ເນື້ອທີ່ 1 ລ້ານໄຣ່ ໃນແຜ່ນດິນປະເທດໃກ້ຄຽງ ເພື່ອຜະລິດນ້ຳມັນບາຍໂອດີເຊນ 1.2 ລ້ານລິດ ຕໍ່ປີ.

3. ຈັດຕັ້ງການປູກປາມນ້ຳມັນ ປະສົມກັບຕົ້ນຫມາກເຍົາ ເປັນສິນຄ້າ ໃນເນື້ອທີ່ຂະຫນາດໃຫຍ່ ເພື່ອໃຫ້ຜະລິດໄດ້ນ້ຳມັນ 2.5 ລ້ານລິດຕໍ່ມື້. ມີການຄາດຄະເນວ່າ ການປູກຕົ້ນເຍົາໃນເນື້ອທີ່ຫນຶ່ງລ້ານໄຮ່ ແລະປູກຕົ້ນປາມນ້ຳມັນປະມານ 1.2 ລ້ານໄຮ່ ຈະໃຫ້ຜົນຜະລິດບາຍໂອດີເຊນ 2.5 ລ້ານລິດຕໍ່ມື້ (Gonesalves 2006).

ແຕ່ວ່າການຂະຫຍາຍເນື້ອທີ່ປູກປາມນ້ຳມັນ ບໍ່ໄດ້ເປັນໄປຕາມແຜນ. ອີງຕາມການລາຍງານຂອງຜະແນກກະສິກຳຂອງອາເມຣິກາ(USDA), ການເພີ່ມປະລິມານການປູກຕົ້ນປາມເພື່ອໃຫ້ໄດ້ຕາມຄວາມຕ້ອງການເປັນເລື່ອງທີ່ທ້າທາຍ. ໃນປີ 2006 ການຂະຫຍາຍເນື້ອທີ່ປູກຕົ້ນປາມ ກວມເອົາເນື້ອທີ່ພຽງ 48,000 ເຮັກຕາ ເຊິ່ງຕ່ຳກວ່າເປົ້າຫມາຍປະຈຳປີ ເກືອບ 40 ສ່ວນຮ້ອຍ" (Preechajarn et al.p. 5). ຄວາມລົ້ມແຫຼວນີ້ ເກີດຈາກເລື່ອງທີ່ວ່າ ການປູກຢາງກະຕັງກະຕິ້ວໃຫ້ຜົນຕອບແທນດີກວ່າ ແລະ ຂາດແຮງຈູງໃຈໃນການປູກຕົ້ນປາມ. ດັ່ງນັ້ນ ລັດຖະບານວາງແຜນ ແລະສືບຕໍ່ສົ່ງເສີມການປູກປາມໃນເຂດທີ່ບໍ່ໄດ້ປູກຕົ້ນຢາງ ເຊັ່ນໃນພາກເຫນືອ ແລະ ຕາເວັນ ອອກສຽງເຫນືອຂອງປະເທດໄທ (Gonesalves 2006).

ນະໂຍບາຍຂະຫຍາຍການປູກພືດເຊື້ອເພີງ ຈະເປັນໄປໄດ້ຕາມແຜນ ຫຼືບໍ່ນັ້ນ ຂຶ້ນກັບຄຸນຄ່າ ທາງເສດຖະກິດຂອງເຊື້ອເພີງຊີວະພາບ, ໂດຍສະເພາະລາຄາເອຕາໂນນ. ເນື່ອງຈາກລາຄາເອຕາໂນນທີ່ກືກລົງ ກັບລາຄານ້ຳມັນກາຊວນຈຶ່ງມີຄວາມສຳຄັນຕໍ່ແຜນການຂອງລັດຖະບານ ໃນການທີ່ຈະໃຊ້ເອຕາໂນນໃນການຜະລິດອອກເທນ 95.

ການສຶກສາວິໄຈເສດຖະກິດໄດ້ແຈ້ງວ່າ "ສັດສ່ວນຂອງມູນຄ່າໃນການຜະລິດເອຕາໂນນ ທີ່ໃຫຍ່ທີ່ສຸດ ແມ່ນຂຶ້ນກັບລາຄາວັດຖຸດິບ, ເຊິ່ງບໍ່ມີຄວາມຫມັ້ນຄົງເລີຍ ທັງຍັງຂຶ້ນກັບຄວາມຕ້ອງການ (demand) ແລະຄວາມສາມາດໃນການຜະລິດ (supply) ໃນຕະຫຼາດໂລກອີກດ້ວຍ ແລະ ມີຄວາມ ແຕກຕ່າງຕາມລະດູການຂອງຜູ້ຕອບສະຫນອງວັດຖຸດິບລະດັບທ້ອງຖິ່ນ".

ປະລິມານວັດຖຸດິບ ເຊັ່ນ ນ້ຳຕານ ແລະນ້ຳມັນປາມ ແຕກຕ່າງກັນໄປຕາມລະດູການ ແລະ ສະພາບທາງພູມສາດທໍ່ໆກັບການຄາດຄະເນຄວາມຕ້ອງການໃນອະນາຄົດ. ຍົກຕົວຢ່າງ ການຄາດ ຄະເນຄວາມຕ້ອງການປາມນ້ຳມັນດິບໃນໄລຍະທີ່ຜ່ານມາ ໄດ້ຊຸກຍູ້ໃຫ້ລາຄາປາມສົດໃນທ້ອງຖິ່ນ ສູງຂຶ້ນ. ລາຄາທ້ອງຖິ່ນຂອງຫມາກປາມສົດ ຊັດຂຶ້ນຢ່າງແຮງໃນທ້າຍປີ 2007, ຈົດບັນລຸອັດ ຕາສູງສຸດເກືອບ 6-6.3 ບາດຕໍ່ກິໂລ (190-206 ໂດລາສະຫະລັດຕໍ່ໂຕນ) ໃນເດືອນມັງກອນ 2008 (Preechajarn et al.2008).

ສິ່ງເຫຼົ່ານີ້ ກຳລັງມີຜົນຕໍ່ການປູກພືດເຊື້ອເພີງ ໃນທົ່ວປະເທດໄທ ທີ່ມີກຳລັງຕອບສະຫນອງຈົນລົ້ນເຫຼືອ ພ້ອມທັງການຂຶ້ນລາຄາໃນກາງປີ 2008; ເກືອບທຸກໂຮງງານຜະລິດເອຕາໂນນ ໄດ້ຫລຸດຜ່ອນການຜະລິດລົງເຫຼືອແຕ່ 70 ສ່ວນຮ້ອຍຂອງຂີດຄວາມສາມາດ ຂະນະທີ່ບາງໂຮງງານໄດ້ຢຸດຊົ່ວຄາວ ຫຼື ປ່ຽນໄປຜະລິດສິນຄ້າອື່ນ (Preechajarn et al. 2008).

ໃນດ້ານສະພາບສະພາບແວດລ້ອມ ກໍ່ເກີດມີຄວາມຫ່ວງໃຍໃນເລື່ອງເກີດສານພິດໃນດິນ ແລະ ນ້ຳ ທີ່ຢູ່ອ້ອມແອ້ມບໍລິເວນປູກພືດເຊື້ອເພີງ, ໃນປະເທດໄທ ມີການນຳໃຊ້ຢາປາບສັດຕູພືດ Paraquat ແລະ Glyphasate ຢູ່ໃນເຂດປູກຕົ້ນປາມນ້ຳມັນ; ຢາຂ້າແມງໄມ້ຟູຣາດອນ (Furadan) ທີ່ໃຊ້ໃສ່ເບັ້ຽ ຕົ້ນປາມ (Pleanjai et al. 2004). ຟູຣາດອນເປັນຊື່ຍີ່ຫໍ້ຂອງຢາປາບສັດຕູພືດ ຄາຣບູຟູຣານ (carbofuran) ທີ່ເຄີຍຜະເຊີນກັບບັນຫານັບແຕ່ຊຸມປີ 80 ຫຼັງຈາກ "ການທົບທວນພິເສດ ໂດຍ ສຳນັກງານປ້ອງກັນສິ່ງແວດລ້ອມຂອງອາເມຣິກາ "(EPA) ປະເມີນວ່າມີນົກຫຼາຍກວ່ານຶ່ງລ້ານໂຕ ຕາຍໃນແຕ່ລະປີ ຍ້ອນຢາເມັດປາບສັດຕູພືດສູດນີ້. ຕໍ່ມາໃນປີ1994 ປະເທດອາເມຣິກາກໍຍົກ ເລີກການນຳໃຊ້ຢາເມັດສູດນີ້, ແຕ່ຢາຊະນິດດຽວກັນທີ່ເປັນສູດນ້ຳ ຍັງມີຈຳຫນ່າຍຢູ່ໃນຕະຫຼາດທົ່ວໂລກ.

***ໂດຍ ອຳຣາພາລີ, ນັກຂຽນ ປະຈຳພາກພື້ນແມ່ນ້ຳຂອງ. Amraapali, N. a writer based in the Mekong region. Email:Amraapali@gmail.com***

APEC. 2008. Thailand biofuels activities. in APEC Biofuels.
Artachinda, A. Bio fuel development and consumption in Thailand. Mekong Environment and Resource Institute (MERI), Bangkok.
CIAT. 2008. Cassava and Biofuels: Is this the Magic Vehicle that will Lift Millions of Cassava Farmers Out of Poverty?. in. International Center for Tropical Agriculture (CIAT).
Gonsalves, J.B. 2006. An Assessment of the Biofuels Industry in Thailand. United Nations Conference on Trade and Development (UNCTAD), Geneva.
Griggers, C. 2004. Biofuels: A natural solution to rising oil costs. in Thailand Investment Review-Board of Investment (BOI).
IPS. 2008a. Jatropha key to self-sufficiency? in. Inter Press Service (IPS), Manila.
IPS.2008a. Environment: Clean or Not Thailand Sees Dollars in Palm Oil by Marwann Macan-Markar. Inter Press Service (IPS), Manila.http://ipsnews.net/news.asp?idnews=38415
Pleanjai, S., S. H. Gheewala, and S. Garivait. 2004. Environmental Evaluation of Biodiesel Production from Palm Oil in a Life Cycle Perspective. in The Joint International Conference on "Sustainable Energy and Environment (SEE)"
Preechajarn, S., P. Prasertsri, and M. Kunasirirat. 2008. Thailand Bio-Fuels Annual 2008 USDA Foreign Agricultural Service.
Yoosin, S., and C. Sorapipatana. 2007. A Study of Ethanol Production Cost for Gasoline Substitution in Thailand and Its Competitiveness. Thammasat Int. J. Sc. Tech. 12:69-80

## ປະເທດຫວຽດນາມ: ເຈ້ຍບໍ່ພໍໃຊ້, ລາຄາສູງຂຶ້ນ, ໂຮງງານເຍື່ອເຈັ້ຍໃຫມ່ໆ ແລະ ການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ທີ່ເພີ່ມຂຶ້ນຫຼາຍ.

ແຕ່ລະປີ ປະເທດຫວຽດນາມໄດ້ຜະເຊີນຫນ້າກັບການຂາດເຂີນເຈັ້ຍມາເປັນທົດສະວັດແລ້ວ. ປີນີ້ກໍ່ເຊັ່ນດຽວກັນ. ໃນເດືອນພຶດສະພາ 2008 ຫນັງສືພິມຫວຽດນາມ ໄດ້ລາຍງານວ່າ ສຳນັກພິມ ແລະ ໂຮງພິມ ກຳລັງມີປັນຫາໃນການຫາຊື້ເຈ້ຍ. ການຂາດເຂີນເຈັ້ຍຍັງມີຢູ່ ເຖິງວ່າໂຮງງານເຈັ້ຍ ແຫ່ງໃຫຍ່ທີ່ສຸດ ຄື ໄບບັງ (Bai Bang) ແລະ ທັນໄມ (Tan Mai) ໄດ້ຜະລິດເຕັມຂີດຄວາມສາມາດການຜະລິດທີ່ມີຢູ່ ແລະການນຳເຂົ້າເຈ້ຍ ກໍໄດ້ທະວີຂຶ້ນຢ່າງໄວວາ ໃນໄລຍະຕົ້ນປີ.

ສາເຫດນຶ່ງທີ່ເປັນໄປໄດ້ ທີ່ອະທິບາຍສະພາບຂາດເຂີນເຈັ້ຍ ກໍ່ແມ່ນເລື່ອງທີ່ວ່າ ພໍ່ຄ້ານຳເຂົ້າເຈັ້ຍກຳລັງກັກຕຸນເຈັ້ຍໃນສາງ ລໍຖ້າໃຫ້ລາຄາເຈັ້ຍນຳເຂົ້າສູງຂຶ້ນກ່ອນແລ້ວຈຶ່ງຂາຍອອກ. ໃນເດືອນມີນາ, ອາດມີການນຳເຂົ້າເຈັ້ຍຈາກອິນໂດເນເຊຍ ໃນລາຄາເຖິງ 650 ໂດລາສະຫະລັດ/ໂຕນ. ຮອດເດືອນພຶດສະພາ ລາຄາເຈັ້ຍໄດ້ສູງຂຶ້ນຮອດ 800 ໂດລາສະຫະລັດ. ຂະນະທີ່ການນຳເຂົ້າເຈັ້ຍຈາກຈີນກຳລັງຫລຸດລົງ ຈຶ່ງມີຄວາມຕ້ອງສູງຂຶ້ນໃນການນຳເຂົ້າເຈັ້ຍຈາກອິນໂດເນເຊຍ.

ເດືອນມິຖຸນາ ປີ 2008, ສຳນັກພິມໄດ້ຂຶ້ນລາຄາປຶ້ມ. ປຶ້ມຂາຍດີເຊັ່ນ "The Endless Rice Field" ໂດຍ ຫງວຽນ ງົກ ຕູ (Nguyen Ngoc Tu) ລາຄາເພີ່ມຂຶ້ນ 20 ສ່ວນຮ້ອຍ.

ໃນເດືອນກັນຍາ ປີ 2008, ກະຊວງການເງິນ ໄດ້ຫລຸດຜ່ອນພາສີນຳເຂົ້າເຈັ້ຍລົງລະຫວ່າງ 7 - 12 ສ່ວນຮ້ອຍ ຂຶ້ນກັບປະເພດເຈັ້ຍ. ສະມາຄົມເຈັ້ຍ ແລະເຍື່ອເຈັ້ຍຫວຽດນາມມີສະຖານະພາບທີ່ບໍ່ຈະແຈ້ງໃນການຫລຸດພາສີຄັ້ງນີ້. ຫນັງສືພິມຫຼາຍສະບັບລາຍງານວ່າ ການຫລຸດພາສີຄັ້ງນີ້ ເປັນຜົນມາຈາກການສະເຫນີຂອງສະມາຄົມ. ແຕ່ເລຂາສະມາຄົມ ທ່ານ ຫວູ ທົກ ບາວ ບອກສຳນັກງານຂ່າວຫວຽດນາມວ່າ "ການຫລຸດພາສີ ອາດມີຜົນກະທົບຕໍ່ການຜະລິດເຈັ້ຍພາຍໃນ ທີ່ກຳລັງມີປັນຫາເລື່ອງການຫລຸດຜ່ອນຄ່າໃຊ້ຈ່າຍໃນການຜະລິດ ຍ້ອນລາຄາວັດຖຸດິບທີ່ສູງຂຶ້ນ. ປະເທດຍັກໃຫຍ່ເຊັ່ນ ຍີ່ປຸ່ນ, ຈີນ, ອາເມຣິກາ ແລະເກົາຫຼີໃຕ້ ກຳລັງທ້າທາຍຄວາມສາມາດໃນ ການແຂ່ງຂັນຂອງຜູ້ຜະລິດພາຍ

ໃນປະເທດ".

ເວລາດຽວກັນ ທາງສະມາຄົມກໍໄດ້ເຈລະຈາ(ຕໍ່ລອງ)ໃຫ້ລັດຖະບານສົມທົບທຶນ ເພື່ອສະຫນັບສະຫນູນການລົງທຶນພາຍໃນຂອງອຸດສາຫະກໍາເຈັ້ຽ. ຜົນຜະລິດໃນປັດຈຸບັນສາມາດປ້ອນຕະຫຼາດເຈັ້ຽ ໄດ້ 2 ສ່ວນ 3 ຂອງຄວາມຕ້ອງການ ແລະຄາດວ່າປີນີ້ຕ້ອງໄດ້ນໍາເຂົ້າເຈັ້ຽປະມານ 1 ລ້ານໂຕນ, ເພີ່ມຂຶ້ນ 200,000 ໂຕນ ຈາກ ປີ 2007. ມີແຜນການສ້າງ ແລະ ກໍາລັງປຸກສ້າງໂຮງງານເຈັ້ຽ ແລະເຍື່ອເຈັ້ຽໃຫມ່ຫຼາຍແຫ່ງໃນຫວຽດນາມ. ໃນເດືອນກັນຍາ ປີ 2008 ບໍລິສັດ ພອຍຣີ (Poyry) ປະມູນໄດ້ການສັນຍາສ້າງ ສາຍການຜະລິດເຍື່ອເຈັ້ຽ (pulp line) ຂະຫນາດ 250,000 ໂຕນຕໍ່ປີ ທີ່ໂຮງງານເຈ້ຽ ແລະເຍື່ອເຈັ້ຽໄບບັງ ທາງເຫນືອຂອງຫວຽດນາມ ສາຍການຜະລິດນີ້ຈະເລີ່ມໃຊ້ໄດ້ໃນປີ 2010.

ນອກນັ້ນ ໃນເດືອນກັນຍາ ປີ 2008 ບໍລິສັດ ເຈ້ຽຕັນໄມ ໄດ້ຮັບອະນຸຍາດກໍ່ສ້າງ ໂຮງງານໃຫມ່ 4 ແຫ່ງ: ໂຮງງານເຈັ້ຽ ທີ່ແຂວງດົງໄນ່ (Dong Nai) ; ໂຮງງານເຈ້ຽ ແລະ ເຍື່ອເຈັ້ຽໃນແຂວງຄວາງໄຫງ່; ໂຮງງານເຍື່ອເຈັ້ຽ ໃນແຂວງລໍາດົງ (Lam Dong) ແລະໂຮງງານເຈ້ຽແລະເຍື່ອເຈັ້ຽໃນເຂດພູພຽງໃຈກາງປະເທດຫວຽດນາມ. ໂຄງການທັງຫມົດ ຈະຜະລິດເຈ້ຽໄດ້ 550,000 ໂຕນ ແລະ ເຍື່ອເຈັ້ຽໄດ້ 460,000 ໂຕນ ຕໍ່ປີ.

ບໍລິສັດເຈັ້ຽ ຕັນໄມ ໄດ້ປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ໃສ່ທີ່ດິນ 10,000 ເຮັກຕາ ໃນແຂວງລໍາດົງ ເພື່ອປ້ອນໂຮງງານຜະລິດເຈ້ຽ ແລະເຍື່ອເຈັ້ຽຂອງຕົນເອງ. ທາງບໍລິສັດ ຍັງໄດ້ດໍາເນີນໂຄງການມູນຄ່າ 30 ລ້ານໂດລາສະຫະລັດ ເພື່ອປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ໃນເມືອງດີລິນ (Di Linh) ແຂວງລໍາດົງ. ເດືອນພຶດສະພາ 2008, ກິດຈະການ ຜະລິດຕະພັນເຈັ້ຽລໍາດົງ ເຊິ່ງເປັນສ່ວນນຶ່ງຂອງບໍລິສັດຕັນໄມ ໄດ້ຮັບອະນຸມັດ ເພື່ອປຸກ "ບ້ານພັກທ່ອງທ່ຽວແບບອະນຸຮັກສິ່ງແວດລ້ອມ" ເປັນມູນຄ່າ 54 ລ້ານໂດລາສະຫະລັດ ໃນເມືອງດີລິນ. ຕາມການລາຍງານຂອງຫ້ອງການບໍລິຫານການທ່ອງທ່ຽວແຫ່ງຊາດຫວຽດນາມ ບ້ານພັກທະເລສາບ ກາລາ (Kala lake resort) ຈະມີ "ສູນກິດຈະກໍາໃຕ້ນໍ້າ, ສະຖານບັນເທີງ, ສວນ, ສະຫນາມຕີກ໋ອບ, ໂຮງແຮມ, ຮ້ານອາຫານລະດັບສູງ ແລະ ສະຖານທີ່ຂາຍເຄື່ອງພື້ນເມືອງຂອງຊົນເຜົ່າ".

ເດືອນມີນາ 2006, ແຂວງຄອນຕຸມ ໄດ້ໃຫ້ທະບຽນອະນຸຍາດໂຄງການມູນຄ່າ 67 ລ້ານ ໂດລາສະຫະລັດ ເພື່ອຈັດຕັ້ງການປູກຕົ້ນໄມ້ໃນເນື້ອທີ່ 65,000 ເຮັກຕາ. ບໍລິສັດ ທີ່ຢູ່ເບື້ອງ ຫຼັງແຜນການດັ່ງກ່າວແມ່ນ ອິນໂນວກຣີນ (innovGreen) ເຊິ່ງມີແຜນການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ໃນ 5 ແຂວງ ຢູ່ປະເທດຫວຽດນາມ ແລະຕັ້ງເປົ້າຫມາຍ ເພື່ອ "ປູກໄມ້ກະຖິນຍັກ (acacia) ແລະ ໄມ້ວິກຄຸນນະພາບສູງເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່" ໃນເນື້ອທີ່ທີ່ຖືກສະເຫນີວ່າ "ເປັນດິນວ່າງເປົ່າ ແລະບໍ່ມີຜົນຜະລິດ" ຈໍານວນ 300,000 ເຮັກຕາ.

ທາງບໍລິສັດໄດ້ສວຍໃຊ້ ສະມາຄົມຮັບຮອງປ່າໄມ້ (Forest Stewardship Council [FSC]) ເພື່ອຟອກໂຄງການຂອງຕົນເອງໃຫ້ເປັນສີຂຽວ (greenwash) ຕາມມາດຕະຖານສາກົນ ຂອງການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ພາຍໃຕ້ສະມາຄົມຮັບຮອງປ່າໄມ້, ເພື່ອສົ່ງເສີມໃຫ້ມີການບໍລິຫານໂດຍເຈົ້າຂອງກິດຈະການ ຢ່າງມີຄວາມຮັບຜິດຊອບຕໍ່ປ່າໄມ້ໃນໂລກ, ເຈົ້າຫນ້າທີ່ລະດັບສູງຂອງບໍລິສັດອິນ ໂນວກຣີນ ທ່ານ ຫວູ ດິນ ໄດ້ເວົ້າເຖິງແຜນການປູກໄມ້ໃນແຂວງເຫງອັນ (Ngh An) ຍັງບໍ່ທັນມີໂຄງການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ໃດຂອງບໍລິສັດ ອິນໂນ ກຣີນ ທີ່ໄດ້ຮັບການຮັບຮອງພາຍໃຕ້ລະບົບຂອງສະມາຄົມຮັບຮອງປ່າໄມ້.

ມີການຖົກຖຽງກັນມາດົນ ກ່ຽວກັບການປູກໄມ້ວິກເປັນສິນຄ້າໃນເນື້ອທີ່ຂະຫນາດໃຫຍ່ ໃນປະເທດຫວຽດນາມ. ສາດສະດາຈານ ຫວູ ຄຸຍ (Vo Quy) ຈາກມະຫາວິທະຍາໄລແຫ່ງຊາດຫວຽດນາມ ເຊິ່ງໄດ້ຮັບການຍົກຍ້ອງໃຫ້ເປັນບິດາຂອງຂະບວນການເຄື່ອນໄຫວເພື່ອສິ່ງແວດລ້ອມໃນຫວຽດນາມ. ໃນປີ 1991 ຢູ່ກອງປະຊຸມວ່າດ້ວຍ

"ຜົນກະທົບຈາກການປູກໄມ້ວິກເປັນສິນຄ້າ ໃນເນື້ອທີ່ຂະໜາດໃຫຍ່" ຢູ່ຣ່າໂນຍ ທ່ານໄດ້ກ່າວວ່າ "ດຽວນີ້ມີຄວາມຈຳເປັນທີ່ສຸດ ທີ່ຈະຕ້ອງສືບຕໍ່ຄົ້ນຄວ້າເພື່ອທົດແທນການປູກຕົ້ນວິກ ດ້ວຍການປູກຕົ້ນໄມ້ຊະນິດອື່ນ ທີ່ເໝາະສົມກັບທ້ອງຖິ່ນຢ່າງສອດຄ່ອງ ເປັນເລື່ອງທີ່ຜູ່ເຮັດກິດຈະການປູກໄມ້ເປັນສິນຄ້າໃນເນື້ອທີ່ຂະໜາດໃຫຍ່ ຈຳເປັນຕ້ອງຄິດຢ່າງຍິ່ງ.

17 ປີຕໍ່ມາ ຄວາມເຫັນຂອງທ່ານ ຫວູ ຄຸຍ ຍິ່ງມີຄວາມເລັ່ງດ່ວນຂຶ້ນກວ່າເກົ່າ. ແຕ່ຄັ້ງນີ້ບໍ່ພຽງແຕ່ກ່ຽວກັບຕົ້ນວິກພຽງຢ່າງດຽວ. ຂະນະທີ່ປະເທດຫວຽດນາມນຳເຂົ້າຜະລິດຕະພັນເຈ້ຽ ຈາກຕ່າງປະເທດ, ແຕ່ການສົ່ງອອກຕ່ອນໄມ້ນ້ອຍ ຈາກໂຮງງານໄມ້ຕ່າງໆທີ່ຢູ່ຕາມຊາຍຝັ່ງ ທະເລກໍຍັງເພີ່ມຂຶ້ນຢ່າງໄວໃນຫຼາຍໆປີຜ່ານມາ. ອຸດສາຫະກຳເຍື່ອເຈັ້ຽ ແລະ ເຈ້ຽ ແມ່ນປັດໄຈສຳຄັນທີ່ສົ່ງຜົນກະທົບຕໍ່ການຂະຫຍາຍປູກໄມ້ຊະນິດດຽວເປັນສິນຄ້າ ໃນເນື້ອທີ່ຂະໜາດໃຫຍ່ໃນຫວຽດນາມ. ໃນສະຖານະການນີ້ ຜູ້ມີໄຊ ແມ່ນບໍລິສັດຜະລິດເຍື່ອເຈັ້ຽ ແລະ ເຈັ້ຽ, ແຕ່ຜູ້ເສຍຫາຍແມ່ນຊຸມຊົນ ທີ່ສູນເສຽດິນດອນຂອງຕົນໄປແລະໄດ້ເຫັນແຫຼ່ງນ້ຳ ຫ້ວຍຮ່ອງ ນ້ຳສ້າງຂອງ ພວກເຂົາຂອດແຫ້ງໄປຕໍ່ໜ້າຕໍ່ຕາ.

***ໂດຍ ຄຣິສ ແລງ, http://chrislang.org***